ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
--------------------------------------------

ກະຊວງແຜນການ ແລະ ການລົງທຶນ

ອົງການຮ່ວມມືສາກົນ ຍີ່ປຸ່ນ ( ໄຈກາ )

ການຮ່ວມມືທາງດ້ານວິຊາການ ຂອງ ໄຈກາ

## ໂຄງການຍົກລະດັບຄວາມສາມາດໃນວຽກງານການຄຸ້ມຄອງການລົງທຶນລັດ

# ບົດລາຍງານການກະກຽມເບື້ອງຕົ້ນ

ພຶດສະພາ 2008

ໄອຊີແນັດຈຳກັດ

ການຮ່ວມມືທາງດ້ານວິຊາການ ຂອງ ໄຈກາ

# ໂຄງການຍົກລະດັບຄວາມສາມາດໃນວຽກງານການຄຸ້ມຄອງການລົງທຶນລັດ

# ບົດລາຍງານການກະກຽມເບື້ອງຕົ້ນ

ຄໍາສັບຫຍໍ້

| | | |
|---|---|---|
| CB | Capacity Building Model | ຕົວແບບການເສີມສ້າງຄວາມສາມາດ |
| CPI | Committee for Planning and Investment | ຄະນະກໍາມະການແຜນການ ແລະ ການລົງທຶນ |
| DoF | (Provincial) Department of Finance | ພະແນກການເງິນປະຈໍາແຂວງ |
| DPI | (Provincial) Department for Planning and Investment | ພະແນກແຜນການ ແລະ ການລົງທຶນປະຈໍາແຂວງ |
| DPSO | District Planning and Statistics Office | ຫ້ອງການແຜນການ ແລະ ສະຖິຕິປະຈໍາເມືອງ |
| GOJ | Government of Japan | ລັດຖະບານ ຍີ່ປຸ່ນ |
| GOL | Government of Lao PDR | ລັດຖະບານ ສປປລາວ |
| JCC | Joint Coordinating Committee | ຄະນະກໍາມະການປະສານງານຮ່ວມ |
| JICA | Japan International Cooperation Agency | ອົງການຮ່ວມມືສາກົນ ຍີ່ປຸ່ນ |
| MoF | Ministry of Finance | ກະຊວງການເງິນ |
| MPI | Ministry of Planning and Investment | ກະຊວງແຜນການ ແລະ ການລົງທຶນ |
| MPI-DIC | Department of International Cooperation | ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ |
| MPI-DoE | Department of Evaluation, MPI | ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ |
| MPI-DoP | Department of Planning, MPI | ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ |
| NSEDP | National Socio-Economic Development Plan | ແຜນພັດທະນາເສດຖະກິດ-ສັງຄົມ |
| ODA | Official Development Assistance | ການຊ່ວຍເຫຼືອທາງດ້ານການພັດທະນາຢ່າງເປັນທາງການ |
| OJT | On-the-Job Training | ການຝຶກກັບໜ້າວຽກ |
| PCAP | Project for Capacity Building in PIP Management | ໂຄງການເສີມສ້າງຄວາມສາມາດໃນວຽກງານການຄຸ້ມຄອງການລົງທຶນ ລັດ |
| PCAP2 | Project for Enhancing Capacity in PIP Management | ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ |
| PILAC | Project for Improvement in Local Administration | ໂຄງການຍົກລະດັບຄວາມສາມາດໃນການປົກຄອງຂັ້ນທ້ອງ |

| | | |
|---|---|---|
| | Capacity | ຖື່ນ |
| PIP | Public Investment Program | ການລົງທຶນລັດ |
| PO | Project Owner | ເຈົ້າຂອງໂຄງການ |
| R/D | Record of Discussions | ບົດບັນທຶກການປຶກສາຫາລື |
| SOP | Standard Operating Procedures | ຂັ້ນຕອນການດຳເນີນງານທີ່ເປັນມາດຕະຖານ |
| SPAS | Simplified Project Assessment Sheet | ໃບປະເມີນໂຄງການແບບກະທັດຮັດ |
| SPES | Simplified Project Evaluation Sheet | ໃບປະເມີນຜົນໂຄງການແບບກະທັດຮັດ |
| TOR | Terms of Reference | ເງື່ອນໄຂບ່ອນອີງ |
| TOT | Training-Of-Trainer | ການຝຶກອົບຮົມຄູຝຶກ |
| UNDP | United Nations Development Program | ອົງການສະຫະປະຊາຊາດເພື່ອການພັດທະນາ |

ການຮ່ວມມືທາງດ້ານວິຊາການ ຂອງ ໄຈກາ

ໂຄງການຍົກລະດັບຄວາມສາມາດໃນວຽກງານການຄຸ້ມຄອງການລົງທຶນລັດ

## ບົດລາຍງານການກະກຽມເບື້ອງຕົ້ນ

ສາລະບານ


**1.** ປະຫວັດຄວາມເປັນມາ............................................................................................................

**2.** ຄວາມຈຳເປັນໃນການຄຸ້ມຄອງການລົງທຶນລັດໃນຕໍ່ໜ້າ ແລະ ວິທີການແກ້ໄຂエラー! ブックマークが定義されていません。

**3.** ໂຄງຮ່າງ ແລະ ແບບຂອງໂຄງການໃໝ່.................. エラー! ブックマークが定義されていません。

**4.** ໂຄງຮ່າງການຈັດຕັ້ງຂອງໂຄງການ......................... エラー! ブックマークが定義されていません。

**5.** ນະໂຍບາຍການຄຸ້ມຄອງໂຄງການ......................... エラー! ブックマークが定義されていません。

**6.** ກິດຈະກຳໂຄງການ ພີແລັບ 2 .............................. エラー! ブックマークが定義されていません。

**7.** ແຜນການຝຶກອົບຮົມຢູ່ປະເທດ ທີ 3 ....................... エラー! ブックマークが定義されていません。

**8.** ຄວາມເປັນໄປໄດ້ໃນການເຮັດວຽກຮ່ວມກັນກັບໂຄງການ ແລະຜູ້ໃຫ້ທຶນອື່ນໆエラー! ブックマークが定義されていません。

**9.** ການຕິດຕາມກວດກາ ແລະ ການລາຍງານກ່ຽວກັບໂຄງການエラー! ブックマークが定義されていません。

**10.** ການປະເມີນຜົນໂຄງການ ພີແລັບ 2 .................. エラー! ブックマークが定義されていません。

ເອກະສານຊ້ອນທ້າຍ

ແຜນການດຳເນີນງານ

ແຜນການສິ່ງຊ່ຽວຊານຍີ່ປຸ່ນມາ

ບົດບັນທຶກການປຶກສາຫາລືກ່ຽວກັບໂຄງການ

ບົດສະເໜີກ່ຽວກັບໂຄງຮ່າງໂຄງການ

## 1. ປະຫວັດຄວາມເປັນມາ

### 1.1. ປະຫວັດຄວາມເປັນມາ ຂອງຄວາມຕ້ອງການໂຄງການ

ລັດຖະບານ ສປປ ລາວ ມີຄວາມຕ້ອງການທີ່ຈະປົດປ່ອຍປະເທດຊາດໃຫ້ຫຼຸດພົ້ນອອກຈາກສະພາວະດ້ອຍພັດທະນາກ່ອນປີ 2020. ເພື່ອເຮັດໃຫ້ສຳເລັດ, ປະຈຸບັນລັດຖະບານລາວ ກຳລັງຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ຫົກ (2006-2010).

ແຜນງານການລົງທຶນລັດ (PIP) ແມ່ນການກຳນົດໂຄງການລົງທຶນລັດທັງໝົດ, ເຊິ່ງເອີ້ນວ່າ "ບັນດາໂຄງການລົງທືນຂອງລັດຖະບານລາວ ແລະບັນດາຄູ່ຮ່ວມງານທີ່ໃຫ້ທຶນ, ຖືກຈັດປະເພດຕາມຂະໜາດຂອງໂຄງການ ແລະແຜນງານ ໃນແຕ່ລະບັນດາຂະແໜງການ ແລະໂຊງເຂດ", ແລະເຮັດໜ້າທີ່ເປັນເຄື່ອງມືທີ່ສຳຄັນໃຫ້ແກ່ການກວດກາ NSEDP. PIP ແມ່ນລວມທັງ ການລົງທຶນຂອງລັດ, ການຊ່ວຍເຫຼືອ ODA, ທຶນກູ້ຢືມ, ຜູ້ໃຫ້ທຶນ ແລະການຊ່ວຍເຫຼືອທາງດ້ານເຕັກນິກຕ່າງໆ.

ໃນໄລຍະຜ່ານມາ, ສ່ວນຫຼາຍໂຄງການລົງຂອງທຶນລັດ ຍັງບໍ່ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນເທື່ອ, ດັ່ງນັ້ນມັນຈຶ່ງມີຜົນສະທ້ອນໃຫ້ແກ່ການປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ. ໂດຍສະເພາະບັນດາໂຄງການ PIP ທີ່ໄດ້ຮັບທຶນຈາກລັດຖະບານ, ຂາດແຄນຂັ້ນຕອນການຄຸ້ມຄອງ PIP ທີ່ເປັນມາດຖານ ເພື່ອກະຕຸ້ນບັນດາໂຄງການທີ່ກຳລັງຈັດຕັ້ງປະຕິບັດຢູ່ ທີ່ບໍ່ມີປະສິດທິພາບ.

ເພື່ອບັນລຸເປົ້າໝາຍການພັດທະນາ, ລັດຖະບານລາວຈຶ່ງໄດ້ພັດທະນາ ແລະແນະນຳຂັ້ນຕອນການຄຸ້ມຄອງ PIP ເຊິ່ງເປັນມາດຖານໜຶ່ງທີ່ສຳຄັນໃຫ້ແກ່ວຽກງານການພັດທະນາ ຄື: ຂັ້ນຕອນການວາງແຜນ, ການປະເມີນ, ການຈັດຕັ້ງປະຕິບັດ ແລະການປະເມີນຜົນ. ອີງໃສ່ການສະເໜີຂອງລັດຖະບານລາວ ເຖິງລັດຖະບານຍີ່ປຸ່ນ, ອົງການໄຈກ້າ ຈຶ່ງໄດ້ດຳເນີນການຮ່ວມມືທາງດ້ານເຕັກນິກກັບລັດຖະບານລາວ ຄື "ໂຄງການ ເສີມສ້າງຄວາມອາດສາມາດໃນການຄຸ້ມ PIP ຫຼື ເອີ້ນສັ້ນໆວ່າ (PCAP)" ຊຶ່ງໄດ້ເລີ່ມແຕ່ເດືອນພະຈິກ 2004 ຮອດ ເດືອນຕຸລາ 2007, ຈຸດປະສົງແມ່ນພັດທະນາຄູ່ມືການຄຸ້ມຄອງ PIP ແລະເສີມສ້າງຄວາມສາມາດໃຫ້ແກ່ ພະນັກງານທີ່ມີສ່ວນກ່ຽວຂ້ອງໃນການຄຸ້ມຄອງ PIP.

PCAP ໄດ້ດຳເນີນການຮ່ວມມືທາງດ້ານເຕັກນິກ ກັບ ຄະນະກຳມະການແຜນການ ແລະການລົງທຶນ (ປະຈຸບັນໄດ້ປ່ຽນມາເປັນ ກະຊວງແຜນການ ແລະການລົງທຶນ) ຫຼື ເອີ້ນວ່າອົງການຜູ້ຮ່ວມມືທາງດ້ານເຕັກນິກ[1]. ຈຸດປະສົງຂອງໂຄງການ PCAP ແມ່ນເພື່ອຮັບປະກັນໃຫ້ "ບັນດາໂຄງການ PIP ຖືກເຮັດການປະເມີນ, ການຕິດຕາມກວດກາ ແລະການປະເມີນຜົນ ດ້ວຍວິທີທີ່ເໝາະສົມ". PCAP ໄດ້ພັດທະນາຫຼາຍວິທີ ແລະໄດ້ສ້າງເປັນປື້ມຄູ່ມື ແລະປຶ້ມແນະນຳ ວິທີການຄຸ້ມຄອງ PIP. ໂຄງການໄດ້ຈັດຕັ້ງການຝຶກອົບຮົມຢູ່ 3 ແຂວງເປົ້າໝາຍຄື ແຂວງອຸດົມໄຊ, ແຂວງຄຳມ່ວນ ແລະແຂວງສາລະວັນ, ແລະໄດ້ພັດທະນາ ຕົວແບບເສີມສ້າງຄວາມອາສາມາດ (CB Model) ໃຫ້ແກ່ CPI -ຊື່ໃນອະດີດ, ປະຈຸບັນແມ່ນ MPI ແລະ ພະແນກແຜນການການລົງທຶນແຂວງ (DPI). ອີງໃສ່ຜົນຂອງການຝຶກອົບຮົມ ລວມທັງການຝຶກອົບຮົມກັບໜ້າວຽກຕົວຈິງ (OJT) ຢູ່ 3 ແຂວງເປົ້າໝາຍ, ຄວາມຮູ້ກ່ຽວກັບການຄຸ້ມຄອງ PIP ໄດ້ຮັບການເສີມສ້າງຄວາມເຂັ້ມແຂງຂຶ້ນ ແລະສາມາດນຳໃຊ້ ເຂົ້າໃນໜ້າທີ່ວຽກ

ງານປະຈຳວັນຂອງຕົນເອງ.

ຕາມການຕົກລົງເຫັນດີໃນເບື້ອງຕົ້ນ, ໜ້າທີ່ມອບໝາຍຂອງ PCAP ໄດ້ສິ້ນສຸດລົງໃນເດືອນຕຸລາ 2007. ເຖິງຢ່າງໃດກໍ່ຕາມ, ລັດຖະບານລາວ ກໍ່ໄດ້ສະເໜີໃຫ້ສືບຕໍ່ສະໜັບສະໜູນວຽກງານນີ້ ເພື່ອປັບປຸງວິທີການ ແລະຂັ້ນຕອນການຄຸ້ມຄອງ PIP ທີ່ໄດ້ສ້າງຂຶ້ນແລ້ວນັ້ນ ໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ, ຂະຫຍາຍອອກໄປຮອດຂະແໜງການ ແລະໄປທົ່ວປະເທດ. ລັດຖະບານຍີ່ປຸ່ນ ກໍ່ເຫັນດີໃຫ້ການສະໜັບສະໜູນເພື່ອສືບຕໍ່ການຮ່ວມມືໂດຍອີງໃສ່ບັນດາຜົນໄດ້ຮັບຕົວຈິງຂອງ PCAP, ແລະໄດ້ສົ່ງຄະນະຜູ້ແທນທີມງານການປະເມີນຜົນ (ex-ante evaluation) ເຂົ້າມາເຮັດການປະເມີນຜົນກ່ອນ ຢູ່ໃນລະຫ່ວາງເດືອນກັນຍາ ຫາເດືອນຕຸລາ 2007 ເພື່ອປະເມີນວ່າ ໂຄງການຈະສາມາດສືບຕໍ່ ຫຼືບໍ່. ຫຼັງຈາກການປຶກສາຫາລືລະຫ່ວາງສອງຝ່າຍ, ບັນດາເນື້ອໃນ, ວິທີການ ແລະປັດໃຈນຳເຂົ້າຂອງໂຄງການໃໝ່ກໍ່ໄດ້ຖືກຕົກລົງເຫັນດີເປັນເອກະພາບກັນ, ການບັນທຶກການປຶກສາຫາລືໄດ້ຖືກລົງລາຍເຊັນເພື່ອເປັນຫຼັກຖານໂດຍ ທ່ານ ຮິໂຣອາກິ ຕາກາຊິມາ, ປະທານອົງການໄຈກ້າປະຈຳລາວ ແລະ ທ່ານ ບຸນທະວີ ສີສຸພັນທອງ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ (MPI) ໃນວັນທີ 15 ກຸມພາ 2008.

## 1.2. ຜົນໄດ້ຮັບຂອງໂຄງການ PCAP

PCAP ໄດ້ສ້າງມາດຖານການຄຸ້ມຄອງ PIP ໃໝ່ຢູ່ໃນປະເທດລາວ ລວມທັງການເສີມສ້າງຄວາມອາດສາມາດ ໃຫ້ແກ່ພະນັກງານລັດ ຜູ້ທີ່ມີໜ້າທີ່ກ່ຽວຂ້ອງກັບ PIP. ໂຄງການໄດ້ສ້າງປຶ້ມຄູ່ມື 2 ຊະນິດຂຶ້ນຄື: ***ຄູ່ມືສຳລັບ ການຄຸ້ມຄອງໂຄງການໃນແຜນງານການລົງທຶນຂອງລັດ*** ແລະ ***ຄູ່ມືສຳລັບການຄຸ້ມຄອງແຜນງານການລົງຂອງທຶນລັດ*** ແລະ ບົດແນະນຳ 2 ຊະນິດ ຄື: ***ບົດແນະນຳການຄຸ້ມຄອງໂຄງການໃນແຜນງານການລົງທຶນຂອງລັດ ສຳລັບພະແນກແຜນການ ແລະການລົງທຶນ*** ແລະ ***ບົດແນະນຳການຄຸ້ມຄອງໂຄງການໃນແຜນງານການລົງທຶນຂອງລັດ ສຳລັບເຈົ້າຂອງໂຄງການ***.

ໃນການພັດທະນາບັນດາປຶ້ມຄູ່ມື ແລະບົດແນະນຳ, PCAP ໄດ້ຈັດຕັ້ງການຝຶກອົບຮົມຂຶ້ນເພື່ອເຜີຍແຜ່ຂັ້ນຕອນ ແລະວິທີການຄຸ້ມຄອງ PIP. ພະນັກງານ 20 ຄົນ ຢູ່ MPI ໄດ້ຜ່ານການຝຶກເປັນຄູຝຶກ ແລະສາມາດຈັດຕັ້ງການຝຶກອົບຮົມບັນດາກິດຈະກຳຕ່າງໆຂອງ PCAP ຢູ່ໃນ 3 ແຂວງເປົ້າໝາຍ, ***ການຝຶກອົບຮົມເປັນທາງການ*** ໄດ້ຖືກຈັດຂຶ້ນເພື່ອແນະນຳຄວາມຮູ້ພື້ນຖານກ່ຽວກັບຂັ້ນຕອນ ແລະວິທີການຄຸ້ມຄອງ PIP, ຈາກນັ້ນການຝຶກອົບຮົບລົງເລິກດ້ານວິຊາການ ກ່ຽວກັບການວິເຄາະດ້ານສິ່ງແວດລ້ອມ, ການວິເຄາະດ້ານສັງຄົມ ແລະການວິເຄາະດ້ານການເງິນ-ເສດຖະກິດ ກໍ່ໄດ້ຖືກຈັດຂຶ້ນຕາມລຳດັບ. ພະນັກງານ 150 ຄົນໄດ້ສຳເລັດການຝຶກອົບ ທີ່ເປັນທາງການ ແລະ ພະນັກງານ 50 ຄົນ ໄດ້ຜ່ານການຝຶກອົບຮົມທີ່ລົງເລິກດ້ານວິຊາການ.

ຕາມຜົນໄດ້ຮັບຂອງບັນດາກິດຈະກຳ PCAP, 3 ວິທີການ ແລະຂັ້ນຕອນລຸ່ມນີ້ ໄດ້ຖືກສ້າງຂຶ້ນເພື່ອເປັນມາດ ຖານໃຫ້ແກ່ການຄຸ້ມຄອງ PIP ແລະເສີມສ້າງຄວາມອາດສາມາດໃຫ້ແກ່ບັນດາພະນັກງານການຄຸ້ມຄອງ.

(1) ການສ້າງ ຕາຕະລາງ ແລະຂັ້ນຕອນການແກ້ໄຂງົບປະມານ PIP ໂດຍອີງໃສ່ມະຕິການຕົກລົງ ຈາກກອງປະຊຸມ ໃຫຍ່ຄັ້ງທີ 8 ຂອງພັກ ໃນເດືອນມີນາ 2006, ການປະກາດແຜນ NSEDP ປະຈຳ ປີ ແລະ ການປ່ຽນແປງງົບປະມານ PIP ຂອງປີຕໍ່ໄປ. ຕາຕະລາງ ແລະ ຂັ້ນຕອນແກ້ໄຂງົບປະມານນີ້ ຕ້ອງໄດ້ຮັບ ການອະນຸມັດຈາກ ກອງປະຊຸມສະພາແຫ່ງຊາດ ທີ່ໄດ້ຈັດຂຶ້ນໃນ ເດືອນເມຖຸນາ ຂອງທຸກໆປີ. ສະນັ້ນ, ຕາຕະລາງກະກຽມງົບປະມານ PIP, ລວມທັງການປະເມີນແຕ່ລະບັນດາໂຄງການຕ່າງໆຕ້ອງມີການປັບປຸງເວລາ.




ຮູບປະກອບ1: ຕາຕະລາງການສ້າງແຜນງົບປະມານPIP ທີ່ເປັນມາດຖານ

(2) ການພັດທະນາບັນດາເຄື່ອງມື ແລະວິທີການປະເມີນໂຄງການໃໝ່

PCAP ເຂົ້າໃຈດີວ່າ ການປະເມີນໂຄງການແມ່ນຂັ້ນຕອນໜຶ່ງ ທີ່ສຳຄັນທີ່ສຸດ ຢູ່ໃນການຄຸ້ມຄອງ PIP ປະຈຳປີ. ດ້ວຍຫຼັກການ ການປະເມີນທີ່ຖືກຕ້ອງ, ມັນສາມາດຢັ້ງຢືນເຖິງ ຄວາມຄືບໜ້າທີ່ກຳລັງສືບຕໍ່ ຂອງແຕ່ລະໂຄງການ, ແລະຕັດສິນໃຈໃຫ້ແກ່ການຈັດສັນງົບປະມານ PIP ພາຍໃຕ້ແຫຼ່ງງົບປະມານທີ່ມີຢູ່ຈຳກັດ.
PCAP ໄດ້ພັດທະນາບັນ ດາຮ່າງ ໃບປະເມີນຜົນໂຄງການແບບກະທັດຮັດ (SPAS) ຂຶ້ນ, ສະນັ້ນ ການປະເມີນບັນດາໂຄງການທັງໝົດ ທີ່ສາ ມາດນັບໄດ້ປະຈຳປີໂດຍປະມານ 3,000 ໂຄງການ ສາມາດຖືກເຮັດໃຫ້ສຳເລັດໄດ້ ດ້ວຍປະສິດທິຜົນ ແລະ ປະສິດ ທິພາບ ໂດຍນຳໃຊ້ໃບປະເມີນ 12 ຊະນິດ ຂອງ
SPAS ແລະ ໃບປະເມີນຜົນໂຄງການ ແບບກະທັດຮັດ (SPES) ທີ່ຖືກກະກຽມ, ໂດຍອີງໃສ່ເງື່ອນໄຂຂອງແຕ່ໂຄງການ.

(3) ການນຳໃຊ້ຕົວແບບເສີມສ້າງຄວາມອາສາມາດ

ເງື່ອນໄຂຂອງການຄຸ້ມຄອງ PIP ທີ່ດີແມ່ນ ການພັດທະນາຄວາມອາດສາມາດໃຫ້ແກ່ບັນດາພະນັກງານ ແລະ ອົງການຈັດຕັ້ງໃນ MPI, DPI ແລະບັນດາຫ້ອງການແຜນການ. PCAP ໄດ້ພັດທະນາຕົວແບບເສີມສ້າງຄວາມອາດສາມາດ (CB Model) ຈົນກາຍເປັນລະບົບ ເພື່ອຄຸ້ມຄອງ ແລະເສີມສ້າງຄວາມເຂັ້ມແຂງພາຍໃນບັນດາອົງການຈັດຕັ້ງ, ແລະວິທີການນຳໃຊ້. ໂຄງຮ່າງການເສີມສ້ າງ CB Model ມີ 4 ລະດັ ບ ຂື້ນຢູ່ກັບຄວາມສາມາດ ແລະປະ ສົບປະການຂອງພະນັກງານ. ເຊິ່ງໄດ້ອະທິບາຍຢູ່ຂ້າງລຸ່ມນີ້:

| ຂອບເຂດ ຫຼື ເປົ້າໝາຍການພັດທະນາການເສີມສ້າງຄວາມອາດສາມາດ | | |
|---|---|---|
| ລະດັບຂັ້ນ | ເປົ້າໝາຍ | ບັນດາເງື່ອນໄຂ |
| ລະດັບ 1 | ຄວາມເປັນເອກະພາບ | ຮັບຮູ້ເຖິງບັນຫາຕົວຈິງໃນການຄຸ້ມຄອງຂອງການລົງທຶນ ແລະພະຍາຍາມພັດທະນາຕົນເອງຢ່າງເປັນປະຈຳ |
| ລະດັບ 2 | ຄວາມຮູ້ | ເຂົ້າຮ່ວມບັນດາການຝຶກອົບຮົມຈົນຮອດ ການເຮັດບົດທົດສອບຫຼັງການຝຶກອົບຮົມ ເພື່ອເສີມສ້າງທັກສະ. ສາມາດເຮັດການຄຸ້ມຄອງ ຖ້າສະຖານະການມີຕ້ອງການ, ຮູ້ຈັກບັນດາຂໍ້ມູນທີ່ຈຳເປັນ ແລະເວລາທີ່ຕ້ອງການ ເພື່ອເຮັດການຄຸ້ມຄອງທັງໝົດທຸກຂັ້ນຕອນ. |
| ລະດັບ 3 | ທັກສະ | ນຳໃຊ້ບັນດາທັກສະ ແລະປະສົບການທີ່ໄດ້ຮັບຈາກການຝຶກອົບຮົມ ລວມທັງ ການຝຶກກັບໜ້າວຽກຕົວຈິງ. ສາມາດເຮັດການຄຸ້ມຄອງໃຫ້ຖືກກັບສະພາບຕົວຈິງ, ເກັບກຳຂໍ້ມູນຈາກແຫຼ່ງຂໍ້ມູນໃຫ້ຖືກຕ້ອງເພື່ອເຮັດໃຫ້ວຽກງານສຳເລັດຜົນຢ່າງຖືກ ຕ້ອງ. |
| ລະດັບ 4 | ການປະຕິບັດ | ນຳໃຊ້ທັກສະ, ປະສົບປະການທີ່ຖອດຖອນໄດ້ເຂົ້າໃນໜ້າທີ່ວຽກງານ. ສາມາດໃຫ້ຄຳ |

| | | |
|---|---|---|
| | | ຄິດເຫັນແນະນຳຢ່າງຖືກຕ້ອງທີ່ພົວພັນເຖິງບັນດາອົງການຈັດຕັ້ງ ລວມທັງຂໍ້ມູນທີ່ຈະສະໜອງໃຫ້ແກ່ຂັ້ນຕອນການຄຸ້ມຄອງ. |

## 2. ຄວາມຈຳເປັນໃນການຄຸ້ມຄອງ PIP ແລະບັນດາວິທີການແກ້ໄຂບັນຫາໃນຕໍ່ໜ້າ

ພິຈາລະນາປະຫວັດຄວາມເປັນມາທີ່ມີຢູ່ກ່ຽວກັບການຄຸ້ມຄອງ PIP ລວມທັງບັນດາຜົນໄດ້ຮັບຂອງ PCAP, ມັນຍັງມີຫຼາຍໆປະເດັນທີ່ຈະຕ້ອງສ້າງຄວາມເຂັ້ມແຂງ ກ່ອນທີ່ຈະເວົ້າວ່າການຄວບຄຸມລະບົບການຄຸ້ມຄອງ PIP ຢ່າງລະອຽດຢູ່ ປະເທດລາວ. ມັນມີຄວາມຈຳເປັນທີ່ຈະຕ້ອງມີການຕິດຕາມກວດກາຄວາມຄືບໜ້າຂອງວຽກ ງານທີ່ໄດ້ເຮັດຜ່ານມາ, ແລະພັດທະນາບັນດາຂັ້ນຕອນ ແລະວິທີການຄຸ້ມຄອງໃນຕໍ່ໜ້າ ເພື່ອໃຫ້ກວມເອົາທຸກ ວຽກງານ. ວິທີການຂ້າງລຸ່ມນີ້ແມ່ນມີຄວາມຈຳເປັນ ແລະສຳຄັນຫຼາຍສຳລັບວຽກງານການຄຸ້ມຄອງ PIP ລວມທັງວິທີການແກ້ໄຂບັນຫາ.

### 2.1. ແຜນງານການຝຶກອົບຮົມບັນດາຂະແໜງການ ແລະທົ່ວປະເທດ.

PCAP ໄດ້ສຸມໃສ່ການພັດທະນາມາດຖານທີ່ເປັນພື້ນຖານໃຫ້ແກ່ ການຄຸ້ມຄອງ PIP, ແລະໄດ້ຈັດການຝຶກ ອົບຮົມຢູ່ 3 ແຂວງເປົ້າໝາຍ. ໝາຍຄວາມວ່າຍັງເຫຼືອອີກ 14 ແຂວງ ແລະ ເຂດພິເສດ, ແລະບັນດາອົງການ ຈັດຕັ້ງລັດຖະບານຢູ່ຂັ້ນສູນກາງ ຕ້ອງໄດ້ເຮັດການຝຶກອົບຮົມ. MPI ມີບົດບາດຕົ້ນຕໍໃນການສະໜອງການ ຝຶກອົບຮົມໃຫ້ທົ່ວປະເທດ, ແຕ່ວ່າ ຄວາມຕ້ອງການສະໜັບສະໜູນເພື່ອການພັດທະນາລະບົບການຝຶກອົບຮົມ ພາຍໃຕ້ແຫຼ່ງຊັບພະຍາກອນທີ່ມີຢູ່ຈຳກັດແມ່ນຍັງຕ້ອງການສູງ.

### 2.2. ການປັບປຸງໃນວິທີການຈັດສັນງົບປະມານ PIP

ມາດຖານທີ່ເປັນພື້ນຖານ ແລະວິທີການຄຸ້ມຄອງ PIP ໄດ້ຖືກພັດທະນາຂື້ນ, ແຕ່ວ່າຍັງບໍ່ທັນໄດ້ກວມເອົາ ວິທີການຈັດສັນງົບປະມານ PIP ເທື່ອ. MPI ມີໜ້າທີ່ຮັບຜິດຊອບໃນການຈັດສັນງົບປະມານລັດໃຫ້ແກ່ບັນ ດາໂຄງການ PIP ສຳລັບແຕ່ລະແຂວງ/ ເຂດພິເສດ ແລະບັນດາອົງການຈັດຕັ້ງລັດຢູ່ຂັ້ນສູນກາງ, ຍ້ອນວ່າ, ວິທີການຈັດສັນງົບປະມານລັດຍັງບໍ່ຈະແຈ້ງ, ຄວາມຊັກຊ້າຂອງການແຈ້ງການຍັງເກີດຂື້ນເລື້ອຍ. ນອກຈາກນີ້, MPI ຍັງມີຄວາມຫຍຸ້ງຍາກໃນການອະທິບາຍຂໍ້ມູນລະອຽດໃຫ້ແກ່ບັນດາແຂວງ/ ເຂດພິເສດ ແລະບັນດາອົງ ການຈັດຕັ້ງລັດຢູ່ຂັ້ນສູນກາງໃນເວລາຕໍ່ລອງເລື່ອງງົບປະມານ. ເຖິງຢ່າງໃດກໍ່ຕາມ, ວິທີການ ທີ່ເປັນມານຖານ ສຳລັບການຈັດສັນງົບປະມານລັດໃຫ້ແກ່ບັນດາຂະແໜງການ ແລະເຂດເຫຼົ່ານັ້ນ ຕ້ອງໄດ້ມີການພັດທະນາ.

### 2.3. ການປັບປຸງໃນການຄຸ້ມຄອງການເງິນ ແລະການຊຳລະງົບປະມານ PIP

ທຸກໆປີ, ການຈັດສັນງົບປະມານເພື່ອຈ່າຍໃຫ້ແກ່ໂຄງການ PIP ທີ່ໄດ້ເປັນໜີ້ ແມ່ນປະມານ 10-15%. ສ່ວນຫຼາຍບັນດາໂຄງການໜີ້ສິນແມ່ນມີສາຍເຫດມາຈາກຂໍ້ບົກຜ່ອນໃນການຄຸ້ມຄອງການເງິນໂຄງການ, ການໃຊ້ຈ່າຍໂຄງການ ເກີນກຳນົດຕາມແຜນທີ່ໄດ້ວາງໄວ້, ຊ່ອງຫວ່າງ ລະຫວ່າງງົບປະມານ ແລະ ການຊຳລະ

ເງິນ ແລະການ ໃຊ້ຈ່າຍໂດຍບໍ່ ໄດ້ຮັບການອະນຸມັດ. ສະນັ້ນ, ການຊຳລະງົບປະມານ PIP ແລະ ລະບົບການຄຸ້ມຄອງການເງິນທີ່ນຳໃຊ້ຢູ່ໃນແຕ່ ລະໂຄງການ PIP ແມ່ນຕ້ອງໄດ້ມີການພັດທະນາໃຫ້ເຂັ້ມແຂງຂຶ້ນຕື່ມອີກ.

### 2.4. ການຈັດພິມກົດໝາຍການຄຸ້ມຄອງ PIP

ປະຈຸບັນ, ດຳລັດ 58, ທີ່ໄດ້ອອກໃນເດືອນ ເມສາ 2002 ໂດຍສຳນັກງານນາຍົກລັດຖະມົນ ຕີ. ແມ່ນເປັນຂໍ້ກຳນົດກົດລະບຽບໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ PIP. ສະພາແຫ່ງຊາດໄດ້ ແນະນຳໃຫ້ MPI ປັບປຸງ ແລະປ່ຽນດຳລັດດັ່ງກ່າວ ໃຫ້ກາຍເປັນກົດໝາຍການຄຸ້ມຄອງ PIP. ປະຈຸບັນ MPI ກຳລັງຮ່າງລະບຽບກົດໝາຍໃໝ່, ແຕ່ວ່າກຳລັງຊອກຫາຂໍ້ມູນທີ່ເປັນທາງການເພື່ອການຈັດພິມກົດໝາຍດັ່ງກ່າວ.

### 2.5. ການຄຸ້ມຄອງທຶນຄູ່ຮ່ວມງານໂຄງການການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ

ສ່ວນຫຼາຍ ບັນດາໂຄງການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ (ODA) ຈາກຕ່າງປະເທດທີ່ໄດ້ໃຫ້ທຶນໂດຍ ອົງການສາກົນຕ່າງໆ ດ້ວຍການເຮັດສັນຍາສອງຝ່າຍ ແມ່ນຖືກນັບເຂົ້າເປັນບັນດາໂຄງການ PIP. ເຖິງຢ່າງໃດກໍ່ຕາມ, ສ່ວນຫຼາຍໂຄງການດັ່ງກ່າວແມ່ນໄດ້ຖືກຄຸ້ມຄອງຢ່າງເປັນເອກະລາດໂດຍ ພວກເຂົາເອງ, ໂດຍ ການທີ່ມີສ່ວນຮ່ວມ ຫຼື ສະໜອງຂໍ້ມູນຈຳນວນໜ້ອຍໜຶ່ງຈາກຝ່າຍປະເທດລາວ. ສະນັ້ນ, ໃນກໍລະນີທຶນຄູ່ຮ່ວມງານ ທີ່ຕ້ອງເອົາມາຈາກແຫຼ່ງທຶນງົບປະມານທີ່ມີຈຳກັດຢູ່ແລ້ວ, ມັນແມ່ນຫຍຸ້ງຍາກຫຼາຍ ທີ່ຈະຄັດເລືອກວ່າບັນດາໂຄງການ ໃດ ຄວນຈະຕ້ອງຖືກຈັດສັນງົບປະມານ. ເພື່ອຜ່ານຜ່າສະພາບການຄືແນວນັ້ນ, ມັນມີຄວາມຈຳເປັນທີ່ຈະພັດທະນາ ລະບົບການຮ່ວມຂໍ້ມູນໂຄງການ ODA, ໂດຍມີຈຸດປະສົງ ເພື່ອຊອກຮູ້ ຄວາມຕ້ອງການທຶນຄູ່ຮ່ວມງານ ແລະຈັດສັນ ບູລິມາສິດ.

### 2.6. ການວາງແຜນຂະແໜງການຕະຫຼອດຮອດ ແຜນການດຳເນີນງານ

ແຜນການດຳເນີນງານ, ໄດ້ປະກາດໂດຍ ສຳນັກງານນາຍົກລັດຖະມົນຕີ ໃນເດືອນເມສາ 2006, ເປັນ ບົດແນະນຳໃຫ້ແກ່ບັນດາຂະແໜງການ ເຊິ່ງລວມທັງໝົດມີ 11 ແຜນງານໃຫຍ່ ແລະ 111 ໂຄງການ. ມັນມີໜ້າທີ່ ເຮັດການເຊື່ອມ ຕໍ່ລະຫວ່າງບັນດາໂຄງການ PIP ໃສ່ກັບແຜນ NSEDP. ເຖິງຢ່າງໃດກໍ່ຕາມ, ໃນໄລຍະເວລາ ປະຈຸບັນ 11 ແຜນງານ ໃຫຍ່ ແລະ 111 ໂຄງການເຫຼົ່ານີ້ເຮັດໜ້າທີ່ເປັນພຽງແຕ່ "ແຜນ" ທີ່ຈັດປະເພດບັນດາໂຄງການ PIP, ແຕ່ຍັງບໍ່ທັນມີຕົວ ຊີ້ວັດທີ່ຊັດເຈນ ຫຼື ເກນມາດຖານໃນຕົວເອງ. ມັນມີຄວາມຈຳເປັນທີ່ຈະມີຮ່າງມາດຖານສຳລັບແຕ່ລະແຜນງານ ແລະໂຄງການ, ອັນນີ້ມັນຈະເຮັດໃຫ້ ການ ເຊື່ອມຕໍ່ທີ່ລັກສະນະເຫດ ແລະຜົນ ລະຫວ່າງ ບັນດາໂຄງການ PIP ແລະ NSEDP ນີ້, ຈະຊັດເຈນຂຶ້ນທີ່ສຸດ.

### 2.7. ການຄຸ້ມຄອງ PIP ຢູ່ລະດັບເມືອງ

ໃນທົ່ວປະເທດ, ການຈັດຕັ້ງປະຕິບັດໂຄງການ PIP ປະມານ 300 ໂຄງການ, ລວມງົບປະມານທັງໝົດໂຄງ ການເຫຼົ່ານີ້ແມ່ນ ຕ່ຳກ່ວາ 5 ຕື້ກີບ, ແລະຖືກຈັດລຽງລຳດັບ ຢູ່ໃນລະດັບຂັ້ນເມືອງ. ຍ້ອນວ່າ ບັນດາ ເຄື່ອງມືການຄຸ້ມຄອງ PIP ປະຈຸບັນທີ່ມີຢູ່ ແມ່ນໄດ້ຖືກອອກແບບໃສ່ ເພື່ອຄຸ້ມຄອງບັນດາໂຄງການລະ ດັບກາງ ຫາໂຄງການໃຫຍ່, ສຳລັບໂຄງການຂະໜາດນ້ອຍຢູ່ລະດັບຂັ້ນເມືອງແມ່ນມີຄວາມຫຍຸ້ງຍາກຫຼາຍ ທີ່ຈະ ເກັບກຳບັນດາຂໍ້ມູນໃຫ້ໄດ້ຄືກັບບັນດາໂຄງການໃຫຍ່ ຫຼື ໃຊ້ເຄື່ອງມືປະຈຸບັນທີ່ມີຢູ່ ເພື່ອເຮັດການວິເຄາະບັນ ດາຜົນໄດ້ຮັບ ໃຫ້ໄດ້ຕາມຄວາມຕ້ອງການ. ສະນັ້ນ, ມັນມີຄວາມຈຳເປັນ ທີ່ຈະພັດທະນາບັນດາເຄື່ອງມື ການຄຸ້ມຄອງ PIP ສຳລັບບັນດາໂຄງການ PIP ຢູ່ລະດັບຂັ້ນເມືອງ, ເພື່ອໃຫ້ບັນດາໂຄງການເຫຼົ່ານີ້ຖືກຄຸ້ມຄອງ ດ້ວຍມາດຖານທີ່ຖືກຕ້ອງ.

## 3. ກອບວຽກງານ ແລະການອອກແບບໂຄງການຂອງໂຄງການໃໝ່

ເພື່ອປັບປຸງບັນຫາການຄຸ້ມຄອງ PIP ທີ່ໄດ້ກ່າວມາຢູ່ຂ້າງເທິງນັ້ນ, ລັດຖະບານລາວ ແລະລັດຖະບານຍີ່ປຸ່ນໄດ້ຕົກລົງເຫັນດີສືບຕໍ່ ໂຄງການຮ່ວມມືທາງດ້ານເຕັກນິກໃໝ່ ***"ໂຄງການເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ PIP (PCAP2)"***, ໂດຍການນຳໃຊ້ຜົນໄດ້ຮັບ ແລະຜົນສຳເລັດໃນ PCAP.

ຈຸດປະສົງຂອງ PCAP2 ແມ່ນປັບປຸງບັນດາເຄື່ອງມື ແລະວິທີການຄຸ້ມຄອງ PIP, ແລະເຊື່ອໝັ້ນວ່າ ເຄື່ອງມື ແລະວິທີການເຫຼົ່ານັ້ນຈະກາຍເປັນລະບົບມາດຖານທີ່ນຳໃຊ້ຢູ່ໃນບັນດາຂະແໜງການ ແລະທົ່ວປະເທດ. ພັດທະ ນາ MPI ໃຫ້ກາຍເປັນອົງການທີ່ຄວາມສຳນິສຳນານທາງດ້ານການຄຸ້ມຄອງ PIP.

ເນື້ອໃນຂ້າງລຸ່ມນີ້ແມ່ນອີງປະກອບໃນການອອກແບບ PCAP2 ໂດຍການຕົກລົງເຫັນດີຈາກ MPI ແລະJICA Laos Office;

### 3.1 ເປົ້າໝາຍລວມ

| ສະຫຼຸບລວມ |
|---|
| ບັນດາກະຊວງ ຂະແໜງການ ແລະບັນດາພະແນກ ຂະແໜງການ ແຂວງ ຈັດຕັ້ງປະຕິບັດບັນດາໂຄງການ PIP ຢ່າງມີປະສິດທິຜົນ ແລະປະສິດທິພາບ ຕາມຕາຕະລາງ ແລະແຜນການໄດ້ອະນຸມັດງົບປະມານ ແລະແຜນງານ ຂະແໜງການຖືກພັດທະນາໃຫ້ດີຂື້ນ. |
| **ບັນດາຕົວຊີ້ວັດ** |
| 1. ອັດຕາ ແລະບັນດາຈຳນວນໂຄງການທີ່ໄດ້ຮັບທຶນ PIP ແລະບັນດາໂຄງການ ODA ທີ່ບໍ່ໄດ້ສືບຕໍ່ ຫຼື ຖືກຢຸດສະຕິການດຳເນີນງານແມ່ນລຸດລົງ.<br>2. ອັດຕາ ແລະບັນດາຈຳນວນໂຄງການທີ່ໄດ້ຮັບທຶນ PIP ແລະບັນດາໂຄງການ ODA ທີ່ບໍ່ດີ ຫຼື ບໍ່ບຳລຸງຮັກສາຫຼັງຈາກການສຳເລັດແມ່ນລຸດລົງ.<br>3. ອັດຕາ ແລະບັນດາຈຳນວນໂຄງການທີ່ໄດ້ຮັບທຶນ PIP ແລະບັນດາໂຄງການ ODA ທີ່ບໍ່ໄດ້ນຳໃຊ້ແມ່ນລຸດລົງ.<br>4. ອັດຕາ ແລະບັນດາຈຳນວນໂຄງການທີ່ໄດ້ຮັບທຶນ PIP ແລະບັນດາໂຄງການ ODA ທີ່ມີປະສົບປະການໃນການ ປ່ຽນແປງສິ່ງທີ່ບໍ່ໄດ້ຄາດຫວັງ ຫຼັງຈາກການເຮັດສັນຍາກັບບັນດາບໍລິສັດແລ້ວ ແມ່ນລຸດລົງ.<br>5. ບັນດາຕົວຊີ້ວັດໃຫ້ແກ່ເປົ້າໝາຍໃນແຕ່ລະແຜນງານ ຂະແໜງການຈະຖືກປັບປຸງ |

### 3.2 ຈຸດປະສົງໂຄງການ

| ສະຫຼຸບລວມ |
|---|
| MPI ແລະ DPI ຄຸ້ມຄອງບັນດາໂຄງການ PIP ໂດຍນຳໃຊ້ເຄື່ອງມືການປະເມີນທີ່ໄດ້ແນະນຳໂດຍໂຄງການ ພາຍໃຕ້ເພດານງົບປະມານທີ່ໄດ້ກຳນົດ ແລະເຮັດການຕິດຕາມກວດກາ ແລະການປະເມີນຜົນ. |
| **ບັນດາຕົວຊີ້ວັດ** |
| 1. ຈຳນວນບັນດາໂຄງການ PIP ທີ່ໄດ້ຮັບທຶນຈາກລັດຖະບານ ແລະທຶນຄູ່ຮ່ວມງານທີ່ໄດ້ສະໜັບສະໜູນໂດຍບັນດາໂຄງການ ODA, ຈະຖືກປະເມີນ,ຖືກຕິດຕາມກວດກາ ແລະຖືກປະເມີນຜົນ ພາຍໃຕ້ເພດານງົບປະມານປະຈຳປີ ດ້ວຍລະບຽບການການກວດກາງົບປະມານສະເພາະ, ແມ່ນເພີ້ມຂື້ນ 100%ໃນໄລຍະຕອນທ້າຍຂອງໂຄງການ. |

2. ບັນດາບົດລາຍງານກ່ຽວກັບບັນດາໂຄງການ PIP ທີ່ໄດ້ຮັບທຶນຈາກລັດຖະບານ ຢູ່ແຕ່ລະຂັ້ນຕອນ (ການວາງແຜນ / ການປະເມີນ, ການຕິດຕາມກວດກາ, ການປະເມີນຜົນ) ແມ່ນຖືກປັບປຸງ.
3. MPI ແລະ DPI ຮ່ວມກັບ MOF ແລະ DOF ກຳນົດ ແລະຈັດສັນເພ ດານງົບປະມານ ໃຫ້ແກ່ຂັ້ນສູນກາງ ແລະຂັ້ນແຂວງພ້ອມກັນ.
4. ອັດຕາ ແລະຈຳນວນລວມໜີ້ສິນໃນງົບປະມານ PIP ປະຈຳປີແມ່ນລຸດລົງ.
5. MPI ຮ່ວມກັບ ບັນດາກະຊວງ ຂະແໜງການ ພັດທະນາ ບັນດາແຜນງານ ລວມທັງຄູ່ມືສະເພາະ, ບັນດາເປົ້າໝາຍຊີ້ງເຂດ, ການສະໜອງທຶນໃຫ້ແກ່ບັນດາໂຄງການ PIP ແລະ ບັນດາໂຄງການ ODA.

3.3 ບັນດາໝາກຜົນ

(1) ໝາກຜົນ 1

| ສະຫຼຸບລວມ |
|---|
| ພະນັກງານ DPI ທຸກໆແຂວງ ແລະພະນັກງານພະແນກແຜນການທຸກໆກະຊວງ ແລະອົງການອື່ນໆທີ່ມີສ່ວນກ່ຽວຂ້ອງມີຄວາມຮູ້ ແລະທັກສະພື້ນຖານ ແລະເຂົ້າໃຈເປົ້າໝາຍລວມໃນການຄຸ້ມຄອງ PIP. |

ບັນດາຕົວຊີ້ວັດ

1. ພະນັກງານ DPI ຫຼາຍກ່ວາ 5 ຄົນໃນແຕ່ລະແຂວງແມ່ນມີຄວາມສາມາດໃນການຄຸ້ມຄອງບັນດາໂຄງການ PIP ໂດຍອີງໃສ່ຄູ່ມື ແລະບົດແນະນຳທີ່ມີຢູ່ປະຈຸບັນ.
2. ພະນັກງານພະແນກແຜນການຫຼາຍກ່ວາ 5 ຄົນໃນແຕ່ລະກະຊວງ ຫຼື ອົງການຈັດຕັ້ງລັດທະບານທີ່ມີສ່ວນກ່ຽວຂ້ອງ ແມ່ນມີຄວາມສາມາດໃນການຄຸ້ມຄອງບັນດາໂຄງການ PIP ໂດຍອີງໃສ່ ຄູ່ມື ແລະບົດແນະນຳທີ່ມີຢູ່ປະຈຸບັນ.

(2) ໝາກຜົນ 2

| ສະຫຼຸບລວມ |
|---|
| ລະບຽບການດ້ານການເງິນຖືກແນະນຳ ແລະຖືກນຳໃຊ້ຢູ່ໃນການຄຸ້ມຄອງ PIP |

ບັນດາຕົວຊີ້ວັດ

1. “ຄູ່ມືສຳລັບການຄຸ້ມຄອງໂຄງການ PIP” ແລະບັນດາບົດແນະນຳ ແມ່ນຖືກປັບປຸງ ຫຼືຖືກພັດທະນາ ເພື່ອຄຸ້ມຄອງ ແລະການວາງແຜນງົບປະມານ PIP. ຄູ່ມື ແລະບັນດາບົດແນະນຳແມ່ນຖືກປັບປຸງ ແລະຈັດພິມ, ຈາກນັ້ນຈະຖືກຈັດສົ່ງໄປໃຫ້ຫ້ອງການທີ່ກ່ຽວຂ້ອງທັງໝົດ.
2. ພະນັກງານ MPI ຫຼາຍກ່ວາ 20 ຄົນ ແລະ ພະນັກງານ ພະແນກແຜນການ ຫຼາຍກ່ວາ 5 ຄົນຢູ່ແຕ່ລະແຂວງ, ກະຊວງ ແລະອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ມີຄວາມສາມາດໃນການຄຸ້ມຄອງ PIP ໂດຍອີງໃສ່ປຶ້ມ ຄູ່ມື ແລະບັນດາບົດແນະນຳທີ່ໄດ້ຖືກພັດທະນາ ແລະຖືກປັບປຸງ ແລະທັງສາມາດຝຶກອົບຮົມບັນດາພະນັກ ງານຂັ້ນເມືອງ ແລະຂັ້ນແຂວງທີ່ກ່ຽວຂ້ອງ.
3. MPI ແລະ DPI ພັດທະນາ ແລະຈັດຕັ້ງ ການດຳເນີນງານກ່ຽວກັບການປະເມີນງົບປະມານ, ກຳນົດງົບປະມານລວມ ໃຫ້ແກ່ບັນດາໂຄງການ PIP ແລະ ບັນດາໂຄງການ ODA ພາຍໃຕ້ເພດານງົບປະມານປະຈຳປີ, ແລະວາງແຜນຕາຕະລາງການກວດສອບງົບປະມານ ໂດຍອີງໃສ່ການປະເມີນ ແລະເພດານ ທີ່ໄດ້ກຳນົດ.

(3) ໝາກຜົນ 3

| ການສະຫຼຸບລວມ |
| --- |
| ລະບຽບກົດໝາຍການຄຸ້ມຄອງ PIP ທີ່ມີປະສິດທິຜົນ ແລະປະສິດທິພາບ ແມ່ນຖືກພັດທະນາ ແລະເສີມສ້າງຄວາມເຂັ້ມແຂງ. |
| ບັນດາຕົວຊີ້ວັດ |
| 1. ກົດໝາຍການຄຸ້ມຄອງ PIP ແລະບັນດາດຳລັດທີ່ກ່ຽວຂ້ອງສະເພາະ ແມ່ນໄດ້ຖືກຮ່າງຂື້ນ, ຖືກນຳສົ່ງໄປ ແລະຖືກອະນຸມັດໂດຍສະພາແຫ່ງຊາດ.<br>2. ກົດໝາຍການຄຸ້ມຄອງ PIP ແລະບັນດາດຳລັດທີ່ພົວພັນກ່ຽວກັບການຄຸ້ມຄອງ ລະບຸ ບັນດາອົງການຈັດຕັ້ງທີ່ຮັບຜິດຊອບ ແລະຂັ້ນຕອນລະບຽບການຂອງການທົບທວນຄືນ, ການປ່ຽນແປງ, ການຢຸດຕິ ແລະການບໍ່ສືບຕໍ່ ບັນດາໂຄງການ PIP ລວມທັງ ບັນດາໂຄງການ ODA, ແລະການລົງໂທດ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະບັນດາຜູ້ເຮັດສັນຍາຮັບເໝົາ.<br>3. ກົດໝາຍການຄຸ້ມຄອງ PIP ແລະບັນດາດຳລັດທີ່ພົວພັນການຄຸ້ມຄອງ ໃຫ້ອຳນາດ ບັນດາຄູ່ມື ແລະບັນດາບົດແນະນຳ ທີ່ໄດ້ຖືກພັດທະນາ ແລະຖືກປັບປຸງ ຢູ່ໃນໂຄງການ, ກາຍເປັນເຄື່ອງມືການຄຸ້ມຄອງ PIP ທີ່ໄດ້ມາດຖານ ແລະເຜີຍແຜ່ໄປທົ່ວປະເທດ. |

(4) ໝາກຜົນ 4

| ສະຫຼຸບລວມ |
| --- |
| ບັນດາພະນັກງານ MPI, ບັນດາພະນັກງານ DPI ທຸກໆແຂວງ ແລະ ບັນດາພະນັກງານ ພະແນກແຜນການ ທຸກໆກະຊວງ ມີຄວາມຮູ້ ແລະທັກສະໃນການຄຸ້ມຄອງ PIP ແລະການຄຸ້ມຄອງທຶນຄູ່ຮ່ວມງານ ODA, ການຄຸ້ມຄອງແຜນງານຂະແໜງການ ແລະ ການຄຸ້ມຄອງ PIP ຢູ່ລະດັບຂັ້ນເມືອງ. |
| ບັນດາຕົວຊີ້ວັດ |
| 1. "ຄູ່ມືສຳລັບການຄຸ້ມຄອງໂຄງການ PIP" ແລະບັນດາບົດແນະນຳ ແມ່ນຖືກປັບປຸງ ຫຼື ຖືກພັດທະນາເພື່ອກວມເອົາການຄຸ້ມຄອງທຶນຄູ່ຮ່ວມງານ ODA ແລະການຄຸ້ມຄອງ PIP ຢູ່ລະດັບຂັ້ນເມືອງ. ປື້ມຄູ່ມື ແລະບັນດາບົດແນະນຳແມ່ນຖືກປັບປຸງ ແລະຖືກຈັດພິມເພື່ອແຈກຢາຍໃຫ້ອົງການຈັດຕັ້ງລັດ ທີ່ມີສ່ວນກ່ຽວຂ້ອງ.<br>2. "ຄູ່ມືສຳລັບການຄຸ້ມຄອງແຜນງານ PIP" ຖືກປັບປຸງ, ຖືກອະນຸມັດ ແລະຖືກພິມເພື່ອແຈກຢາຍໃຫ້ອົງການຈັດຕັ້ງລັດທີ່ມີສ່ວນກ່ຽວຂ້ອງ.<br>3. ພະນັກງານ MPI ຫຼາຍກ່ວາ 20 ຄົນ ແລະ ພະນັກງານ ພະແນກແຜນການ ຫຼາຍກ່ວາ 5 ຄົນຢູ່ແຕ່ລະແຂວງ, ກະຊວງ ແລະອົງການຈັດລັດທີ່ກ່ຽວຂ້ອງມີຄວາມສາມາດໃນການຄຸ້ມຄອງ PIP ໂດຍອີງໃສ່ປື້ມ ຄູ່ມື ແລະບັນດາບົດແນະນຳທີ່ໄດ້ຖືກພັດທະນາໃໝ່ ແລະຖືກປັບປຸງ ແລະທັງສາມາດຝຶກອົບຮົມບັນດາ ພະນັກງານຂັ້ນເມືອງ ແລະຂັ້ນແຂວງທີ່ກ່ຽວຂ້ອງ. |

## 4. ການຈັດຕັ້ງຂອງໂຄງການ

### 4.1. ຄະນະກຳມະການປະສານງານ

ໂຄງການແມ່ນໄດ້ຮັບການຊີ້ນຳໂດຍຄະນະກຳມະການປະສານງານ (JCC). JCC ປະຊຸມກັນ 2 ຄັ້ງຕໍ່ປີ ໂດຍການເປັນປະທານຂອງ ທ່ານ ດຣ ບຸນທະວີ ສີສຸພັນທອງ, ລັດທະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ. ພາຍໃຕ້ການນຳພາຂອງທ່ານປະທານ ຍັງມີສະມາຊິກຄະນະ (JCC) ດັ່ງລຸ່ມນີ້.

**ພະນັກງານລັດຝ່າຍລາວ**

- ທ່ານ ອີໄຊ ຊາອັນນາ, ຫົວໜ້າກົມປະເມີນຜົນ, ກະຊວງແຜນການແລະການລົງທຶນ
- ດຣ. ຄໍາລຽນ ພົນເສນາ, ຫົວໜ້າກົມແຜນການ, ກະຊວງແຜນການແລະການລົງທຶນ
- ທ່ານ ສົມຈິດ ອິນທະມິດ, ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການແລະການລົງທຶນ I
- ( ຕາງໜ້າຈາກກະຊວງການເງິນ, ບຸກຄົນອື່ນໆ ທີ່ປະທານແນະນໍາ )

**ພະນັກງານຝ່າຍ ຍີ່ປຸ່ນ**

- ທ່ານ ຮີໂຣອາກິ ຕາກາຊິມາ, ປະທານອົງການ ໄຈກາ ປະຈໍາລາວ
- ບັນດາຊ່ຽວຊານຍີ່ປຸ່ນ ປະຈໍາໂຄງການ
- ເຈົ້າໜ້າທີ່ຈາກສະຖານທູດ ຍີ່ປຸ່ນ ( ຜູ້ສັງເກດການໃນເວລາດໍາເນີນກອງປະຊຸມ JCC )
- ( ບຸກຄົນອື່ນໆ ທີ່ອົງການໄຈກາ ແນະນໍາ )

ໃນກອງປະຊຸມຂອງ JCC, ໂຄງການໄດ້ມີບົດລາຍງານຄວາມຄືບໜ້າ ແລະ ວິທີການສືບຕໍ່ປະຕິບັດວຽກງານໃຫ້ແກ່ສະມາຊິກຂອງ JCC, ພ້ອມດ້ວຍບົດສະເໜີ ຫຼື ເອກະສານຄວາມຕ້ອງການ ທີ່ຄະນະດັ່ງກ່າວພວມສະເໜີຂໍອະນຸມັດ ເຊັ່ນ ການປ່ຽນແປງໃນທິດຊີ້ນໍາ ຫຼື ວິທີບັນລຸເນື້ອໃນຂອງໂຄງການ. ສະມາຊິກ JCC ພິຈາລະນາເບິ່ງບົດລາຍງານ, ບົດສະເໜີ ຫຼື ຄວາມຕ້ອງການທີ່ໄດ້ຮັບ ແລະ ກໍ່ຕັດສິນໃຈ ແລະ ອະນຸມັດ.

### 4.2. ຝ່າຍລາວ (MPI)

ພາຍໃຕ້ MPI, ທັງ 3 ກົມມີໜ້າທີ່ເປັນອົງການຈັດຕັ້ງຜູ້ສົມທົບ: ກົມປະເມີນຜົນ (MPIDoE), ກົມແຜນການ (MPIDoE), ແລະ ກົມຮ່ວມມືສາກົນ (MPIDIC). ລະຫວ່າງ 3 ກົມນີ້ MPIDoE ຈະເປັນອົງການຈັດຕັ້ງສົມທົບຂັ້ນຕົ້ນ ໃນຄະນະທີ່ MPIDoP ແລະ MPIDoP ຈະເປັນອົງການຈັດຕັ້ງປະສານສົມທົບ. ໂດຍຂຶ້ນກັບປະເດັນ ຫຼື ຫົວຂໍ້ ທີ່ໂຄງການຮັບຜິດຊອບ ເຊິ່ງຈະເຮັດວຽກຮ່ວມກັບອົງການຈັດຕັ້ງທີ່ເໝາະສົມ. ໃນທຸກໆຄັ້ງ ທັງ 3 ອົງການຈັດຕັ້ງກໍຈະເຮັດວຽກຮ່ວມກັນ ເພື່ອໃຫ້ບັນລຸໄດ້ເປົ້າໝາຍຂອງໂຄງການ.ລາຍຊື່ຕໍ່ໄປນີ້ ແມ່ນລາຍຊື່ສະມາຊິກຝ່າຍລາວຂອງ PCAP 2 ສະຫຼຸບຮອດເດືອນເມສາ ປີ 2008.

- ອໍານວຍການໂຄງການ : ດຣ. **ບຸນທະວີ ສີສຸພັນທອງ,** ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ
- ຜູ້ບໍລິຫານໂຄງການ : ທ່ານ **ອີໄຊ ຊາອັນນາ,** ຫົວໜ້າກົມປະເມີນຜົນ, ກະຊວງແຜນການແລະການລົງທຶນ
- ຮອງຜູ້ບໍລິຫານໂຄງການ:

ທ່ານ **ອຸ່ນເຮືອນ ຈິດຕະພົງສ໌,** ຮອງຫົວໜ້າກົມແຜນການ, ກະຊວງແຜນການ ແລະການລົງທຶນ

- ທ່ານ **ທຸມພັນ ສຸກປະສິດ,** ຮອງຫົວໜ້າກົມຮ່ວມມືສາກົນ,ກະຊວງແຜນການ ແລະການລົງທຶນ

MPIDoE ໄດ້ສະໜອງສະມາຊິກພະນັກງານປະສານງານທີ່ເຮັດວຽກເຕັມເວລາ 2 ຄົນ. ພະນັກງານເຫຼົ່ານີ້ ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ ແລະ ເຮັດໜ້າທີ່ເປັນຜູ້ປະສານງານພາຍໃນໃນການກະກຽມຈັດຝຶກອົບຮົມວິຊາການ ຫຼື ກອງປະຊຸມຮ່ວມກັບຊ່ຽວຊານຄົນຍີ່ປຸ່ນ ແລະອົງການຈັດຕັ້ງລົງທຶນ. ຂອບເຂດໜ້າວຽກສະເພາະ (TOR) ຂອງພະນັກງານກໍ່ຈະຖືກນຳໄປປຶກສາຫາລື ລະຫວ່າງຜູ້ບໍລິຫານໂຄງການ ແລະ ທີມໜ້າທີ່ປຶກສາ ແລະ ຈາກນັ້ນກໍ່ຈະສະເໜີຂໍອະນຸມັດຈາກ JCC.

## 4.3. ຝ່າຍຍີ່ປຸ່ນ (ຊ່ຽວຊານຍີ່ປຸ່ນ)

PCAP 2 ແມ່ນໂຄງການປະສານງານດ້ານວິຊາການຂອງອົງການ JICA ເຊິ່ງມອບໃຫ້ບໍລິສັດ IC Net ຈຳກັດ, ທີ່ເປັນບໍລິສັດທີ່ປຶກສາປະຈຳຢູ່ປະເທດຍີ່ປຸ່ນ. ຕໍ່ໂຄງການແລ້ວ ບໍລິສັດ IC Net ຈຳກັດ ຈະສົ່ງທີ່ປຶກສາມາໃນຂົງເຂດວຽກງານ 6 ດ້ານ. ລາຍຊື່ຕໍ່ໄປນີ້ ແມ່ນຊ່ຽວຊານຈາກປະເທດຍີ່ປຸ່ນ ທີ່ຖືກແຕ່ງຕັ້ງໃນເດືອນເມສາ ປີ 2008 ແລະ ຂົງເຂດທີ່ສຳນານຂອງແຕ່ລະຄົນ.

- ທ່ານ **ອິຊິໂຣ ໂອກຸມູຣາ**, ຫົວໜ້າທີມທີ່ປຶກສາ, ກົດໝາຍການຄຸ້ມຄອງການລົງທຶນລັດ, ການຄຸ້ມຄອງການລົງທຶນລັດຂັ້ນເມືອງ
- ທ່ານ **ຮິໂຣມິ ໂອສາດາ** : ການຄຸ້ມຄອງແຜນງານ, ການຄຸ້ມຄອງທຶນສົມທົບທຶນຊ່ວຍເຫຼືອ
- ທ່ານ **ອັດຊູຊິ ໂຕກູຣາ** : ການຄຸ້ມຄອງການຈັດສັນງົບປະມານການລົງທຶນລັດ.
- ທ່ານ **ຮິໂຣຟູມິ ອາເຊຕາ** : ການຄຸ້ມຄອງການເບີກຈ່າຍງົບປະມານການລົງທຶນລັດ
- ທ່ານນາງ **ໂຕໂມເອ ໄທຣາ** : ການປະເມີນຜົນການປະເມີນ, ການພັດທະນາການຝຶກອົບຮົມ.
- ທ່ານນາງ **ກາຊູມິ ນາກາມູຣາ** : ຜູ້ປະສານງານ

ໄລຍະໃນການດຳເນີນວຽກງານ ຈະແມ່ນກຳນົດເວລາທີ່ມີປະສິດທິພາບທີ່ສຸດໃນການດຳເນີນງານຕາມແຜນຂອງໂຄງການ ແລະ ກໍ່ຂຶ້ນກັບການຕົກລົງເຫັນດີປະຈຳປີ ລະຫວ່າງອົງການ JICA ແລະ ບໍລິສັດ IC Net ຈຳກັດ. ແຜນການຈັດວາງພະນັກງານວິຊາການໂດຍລວມສຳລັບໂຄງການ ຮອດເດືອນເມສາ ປີ 2008 ກໍ່ຄັດຕິດມາໃນພາກທີ 7.1.

## 4.4. ພະນັກງານອື່ນໆສຳລັບໂຄງການ

ນອກຈາກພະນັກງານໃນອົງການຈັດຕັ້ງລົງທຶນແລ້ວ ໂຄງການຍັງຕ້ອງການພະນັກງານເພີ່ມ ເພື່ອມາສະໜັບສະໜູນການດຳເນີນງານຕື່ມອີກ. ອົງການ JICA ຈະຮັບຈ່າຍໃຫ້ແກ່ພະນັກງານເພີ່ມເຕີມເອງ. ທັງສອງຝ່າຍລາວ ແລະ ຍີ່ປຸ່ນ ຈະເຂົ້າຮ່ວມໃນຂະແໜງການ ແລະ ຂະບວນການສະເໜີຂໍອະນຸມັດຂອງພະນັກງານ.

ເພື່ອທີ່ຈະສະໜັບສະໜູຊ່ຽວຊານຍີ່ປຸ່ນ ກໍ່ໄດ້ວ່າຈ້າງທີ່ປຶກສາພາຍໃນ ໃນໄລຍະສັ້ນ ອີງຕາມຄວາມຕ້ອງການຂອງໂຄງການ ແລະ ກຳນົດເວລາ. ນອກນັ້ນຍັງໄດ້ວ່າຈ້າງຄົນຂັບລົດຂອງໂຄງການ ເພື່ອນຳໃຊ້ຂັບລົດຂອງໂຄງການ. ໄດ້ວ່າຈ້າງພະນັກງານບໍລິຫານ 1 ຄົນ ເພື່ອຮັບໃຊ້ຈຸດປະສົງການກະກຽມຈັດຊື້ໃນໂຄງການ ແລະ ການບໍລິຫານຂັ້ນພື້ນຖານ.

## 5. ນະໂຍບາຍການຄຸ້ມຄອງຂອງໂຄງການ

PCAP2 ຈະຖືກຄຸ້ມຄອງດ້ວຍນະໂຍບາຍພື້ນຖານດັ່ງລຸ່ມນີ້.

PCAP2 ຈະປັບປຸງ ແລະສ້າງບັນດາມາດຖານການຄຸ້ມຄອງ PIP ດ້ວຍວິທີການ 3 ຢ່າງ ດັ່ງລຸ່ມນີ້

*[1] ພັດທະນາຄວາມອາດສາມາດໃນການຄຸ້ມຄອງ PIP ໃຫ້ແກ່ພະນັກງານ ແລະອົງການຈັດຕັ້ງ ຕະຫຼອດຮອດການຝຶກອົບຮົມ ແລະການຝຶກກັບໜ້າວຽກຕົວຈິງ.*

*[2] ບັນດາເຄື່ອງມື ແລະວິທີການຄຸ້ມຄອງ PIP ທີ່ເປັນມາດຖານ ຕະຫຼອດຮອດ ການເຜີຍແຜ່ ກ່ຽວກັບບັນດາຄູ່ມື ແລະບັນດາບົດແນະນຳ.*

*[3] ສ້າງລະບຽບກ່ຽວກັບການຄຸ້ມຄອງ PIP ຕະຫຼອດຮອດ ການຈັດພິມບັນດາກົດໝາຍທີ່ເໝາະສົມ, ບັນດາດຳລັດ ແລະບັນດາກົດລະບຽບ.*

ຮູບຂ້າງລຸ່ມນີ້ ແມ່ນ ສະແດງໃຫ້ເຫັນເຖິງນະໂຍບາຍພື້ນຖານໃນການຄຸ້ມຄອງໂຄງການ ພີແຄັບ.



*ຮູບປະກອບ 2 : ນະໂຍບາຍພື້ນຖານການຄຸ້ມຄອງ ພີແຄັບ 2*

*[1] ພັດທະນາຄວາມອາດສາມາດໃນການຄຸ້ມຄອງ PIP ໃຫ້ແກ່ພະນັກງານ ແລະອົງການຈັດຕັ້ງ ຕະຫຼອດຮອດ ການຝຶກອົບຮົມ ແລະການຝຶກກັບໜ້າວຽກຕົວຈິງ.*

ນະໂຍບາຍນີ້ແມ່ນພົວພັນເຖິງຜົນໄດ້ຮັບ 1 ຂອງການອອກແບບໂຄງການ. ໂຄງການຈະຂະຫຍາຍການຄຸ້ມຄອງ PIP ລວມທັງການປັບປຸງການຝຶກອົບຮົມ/ບັນດາເນື້ອໃນການຝຶກກັບໜ້າວຽກຕົວຈິງ ແລະການນຳໃຊ້ຕົວ ແບບເສີມສ້າງຄວາມອາດສາມາດ (CB Model), ໜ້າວຽກຕ່າງໆແມ່ນໄດ້ອະທິບາຍຢູ່ຂ້າງລຸ່ມນີ້:

- ➢ ຈັດຕັ້ງການຝຶກອົບຮົມ/OJT ທົ່ວປະເທດ ແລະບັນດາອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ.
- ➢ ພັດທະນາການຝຶກອົບຮົມໃໝ່/OJT ສຳລັບບັນດາວິທີການທີ່ໄດ້ປັບປຸງໃໝ່ ເຊັ່ນວ່າ ການກຳນົດງົບປະ ມານ PIP, ການຄຸ້ມຄອງການເງິນ PIP, ການຄຸ້ມຄອງທຶນຄູ່ຮ່ວມງານ ODA, ການຄຸ້ມຄອງ PIP ຢູ່ລະດັບ ຂັ້ນເມືອງ ແລະການຄຸ້ມຄອງແຜນງານ ຂະແໜງການ.
- ➢ ຈັດຕັ້ງກຸ່ມເຮັດວຽກຖາວອນພາຍໃນ MPI ທີ່ມີໜ້າທີ່ ເຮັດການຝຶກ ແລະແນະນຳ ບັນດາວິທີການຄຸ້ມຄອງ PIP ຕະຫຼອດຮອດ ການຝຶກອົບຮົມ/OJT.
- ➢ ກໍ່ສ້າງລະບົບການຝຶກເປັນຄູຝຶກ ພາຍໃນ MPI ດັ່ງນັ້ນ ບັນດາຄູຝຶກແມ່ນຖືກພັດທະນາ ແລະສ້າງຄວາມເຂັ້ມແຂງຢ່າງຕໍ່ເນື່ອງ.
- ➢ ກໍ່ສ້າງລະບົບການຝຶກເປັນຄູຝຶກພາຍໃນ DPI ແຂວງ ດັ່ງນັ້ນ ບັນດາຄູຝຶກແມ່ນຖືກພັດທະນາ ແລະສ້າງຄວາມເຂັ້ມແຂງຢ່າງຕໍ່ເນື່ອງ ຢູ່ພາຍໃນແຂວງຕ່າງໆ, ພາຍໃຕ້ການແນະນຳກວດກາຂອງ MPI.

*[2] ບັນດາເຄື່ອງມື ແລະວິທີການຄຸ້ມຄອງ PIP ທີ່ເປັນມາດຖານ ຕະຫຼອດຮອດ ການເຜີຍແຜ່ ກ່ຽວກັບບັນດາຄູ່ມື ແລະບັນດາປຶ້ມແນະນຳ.*

ນະໂຍບາຍນີ້ແມ່ນພົວພັນເຖິງຜົນໄດ້ຮັບ 2 ແລະ 4 ຂອງການອອກແບບໂຄງການ. ບັນດາເຄື່ອງມື ແລະວິທີ ການທີ່ໄດ້ປັບປຸງ ແລະໃໝ່ ແມ່ນຖືກແນະນຳ ໃນໄລຍະເວລາ PCAP2, ແລະຈະໄດ້ເຮັດຮ່ວມກັບບັນ ດາຂະແໜງການທີ່ຖືກຄັດ ເລືອກໂດຍນຳໃຊ້ ບັນດາຄູ່ມື ແລະບັນດາປຶ້ມແນະນຳ. ບັນດາຄູ່ມື ແລະປຶ້ມແນະນຳທີ່ໄດ້ພັດທະນາດ້ວຍ PCAP ຈະຖືກປັບປຸງຄືນ, ແລະປຶ້ມແນະນຳໃໝ່ຈຳນວນໜຶ່ງຈະຖືກສ້າງຂື້ນ. ຢູ່ຂ້າງລຸ່ມນີ້ແມ່ນບັນຊີຂອງບັນດາປື້ມຄູ່ມື ແລະ ບັນດາປຶ້ມແນະນຳ ທີ່ໄດ້ເອົາມາຈາກ PCAP ເພື່ອປັບປຸງຄືນ:

**ແຜນຜັງທີ 1 : ປື້ມຄູ່ມືທີ່ໄດ້ຮັບການພັດທະນາໃນລະຫ່ວາງ PCAP ແລະເນື້ອໃນທີ່ໄດ້ຮັບການຕໍ່ໃໝ່**

| ຊື່ | ໂດຍຫຍໍ້ |
|---|---|
| ຄູ່ມືສຳລັບການຄຸ້ມຄອງໂຄງການ PIP<br><br>(ຄູ່ມືການຄຸ້ມຄອງໂຄງການ) | ວິທີການຄຸ້ມຄອງໜ້າປົກປື້ມຄູ່ມືສຳລັບໂຄງການ PIP ແຕ່ລະໂຄງການ. ເນື້ອໃນລວມທັງການເຄືອນໃຫວຄຸ້ມຄອງໂຄງການວິທີການແລະເຄື່ອງມືສຳລັບການປະເມີນໂຄງການ,ຕິດຕາມແລະການປະເມີນຜົນ,ສັງຄົມ/ການວິເຄາະສະພາບແວດລ້ອມ,ການເງິນ/ການວິເຄາະເສດຖະກິດ. DVD ໄດ້ອະທິບາຍເນື້ອໃນຂອງປື້ມຄູ່ມື ແລະຍັງໄດ້ຈັດທາຮູບຮ່າງຂະໜາດຂອງໜັງສືທີ່ເປົ່າຫ່ວາງເພື່ອຕິດຄັດມານຳອີກດ້ວຍ.<br>< ເນື້ອໃນທີ່ໄດ້ຮັບການຕໍ່ໃໝ່><br>ເພື່ອເປັນການຂະຫຍາຍເນື້ອໃນທີ່ມີຢູ່ໃນປະຈຸບັນນີ້, ສະບັບປັບປຸງໃໝ່ອາດຈະໄດ້ຮັບການຮ່ວມມືຈາກ ເນື້ອໃນຕໍ່ໄປນີ້:<br>➢ ການເບີກຈ່າຍງົບປະມານໂຄງການ PIP ການຄຸ້ມຄອງການເງິນ<br>➢ ການຄຸ້ມຄອງທຶນສົມທົບຈາກລັດຖະບານ ODA<br>➢ ການຄຸ້ມຄອງ PIP ລະດັບຂັ້ນເມືອງ |
| ຄູ່ມືສຳລັບການຄຸ້ມ | ວິທີການຄຸ້ມຄອງໜ້າປົກປື້ມຄູ່ມືສຳລັບການຄຸ້ມຄອງPIPຈາກການສັງລວມໝວດໂຄງການ. ເນື້ອໃນລວມທັງ |

| | |
|---|---|
| ຄອງແຜນງານ PIP<br><br>(ຄູ່ມືການຄູ້ມຄອງໂຄ ງ ການ) | ວິທີການໝວດໂຄງການພັດທະນາຕ້ອງໄດ້ອາໃສເຫດຜົນທີ່ຖືກຕ້ອງຕາມວິທີການວິດທະຍາ, ຕາຕະລາງທີ່ສະແດງການເວລາແລະພູມີສາດເຂົ້າຊ່ວຍ. ລວມທັງ MPIDoP, DPI ແລະ ພະແນກແຜນການກະຊວງ.<br>- - - - -<br>< ເນື້ອໃນທີ່ໄດ້ຮັບການຕໍ່ໃໝ່ ><br>➢ ການພັດທະນາສຳລັບໝວດໂຄງການໂດຍຜ່ານແຜນການປະຕິບັດງານ.<br>➢ ການແບ່ງປັນງົບປະມານ PIP. |
| ປື້ມແນະນຳການ ຄູ້ມຄອງໂຄງການ PIP ສຳລັບ DPI | ປື້ມແນະນຳຖືກອອກແບບໂດຍພະນັກງານ DPI ໂດຍອີງໃສ່ໜ້າທີ່ສະເພາະຂອງພວກເຂົາເຈົ້າສຳລັບການຄຸ້ມຄອງ PIP ບົນພື້ນຖານຂັ້ນຕອນ PIP ປະຈຳປີ. ເນື້ອໃນລວມທັງການກຳນົດໜ້າວຽກໃນ MPI, DPI ແລະ ເຈົ້າ ຂອງໂຄງການ (PO), ແລະ ວິທີການຕ່າງໆແລະເຄື່ອງມືສຳລັບການປະເມີນແລະການຕິດຕາມປະຈຳໄຕມາດ.<br>- - - - -<br>< ເນື້ອໃນທີ່ໄດ້ຮັບການຕໍ່ໃໝ່ ><br>➢ ການຄຸ້ມຄອງໝວດໂຄງການລະດັບແຂວງ.<br>➢ ການເບີກຈ່າຍງົບປະມານໂຄງການ PIP ແລະ ການຄຸ້ມຄອງການເງິນ<br>➢ ການຄຸ້ມຄອງທຶນສົມທົບຈາກລັດຖະບານ<br>➢ ການຄຸ້ມຄອງ PIP ລະດັບຂັ້ນເມືອງ |
| ປື້ມແນະນຳການຄູ້ມຄອງໂຄງການ PIP ສຳລັບເຈົ້າຂອງໂຄງການ [1] | ປື້ມແນະນຳ<br>ໄດ້ຖືກອອກແບບສຳລັບເຈົ້າຂອງໂຄງການໂດຍອີງໃສເໜ້າທີ່ສະເພາະຂອງພວກເຂົາເຈົ້າສຳລັບການຄຸ້ມຄອງ PIP ບົນຂັ້ນຕອນງົບປະມານ PIPປະຈຳປີ, ແລະການສັງລວມການໝູນວຽນຂອງໂຄງການ. ເນື້ອໃນລວມທັງການອອກບົດສະເໜີໂຄງການແລະບົດລາຍງານຄວາມຄືບໜ້າ,<br>ການຕິດຕາມແລະການມອບຮັບໂຄງການໃຫ້ກັບອີງການຈັດຕັ້ງປະຕິບັດງານໃນເວລາທີ່ສຳເລັດ.<br>- - - - -<br>< ເນື້ອໃນທີ່ໄດ້ຮັບການຕໍ່ໃໝ່ ><br>➢ ການເບີກຈ່າຍງົບປະມານໂຄງການ PIP ການຄຸ້ມຄອງການເງິນ<br>➢ ການຄຸ້ມຄອງທຶນສົມທົບຈາກລັດຖະບານ<br>➢ ການຄຸ້ມຄອງ PIP ລະດັບຂັ້ນແຂວງ |

ຕໍ່ໄປນີ້ແມ່ນບັນຊີປື້ມແນະນຳທີ່ຈະພັດພັດທະນາຂື້ນໃໝ່;

**ແຜນຜັງທີ 2: ປື້ມຄູ່ມືທີ່ຈະຕ້ອງໄດ້ຮັບການພັດທະນາໃໝ່**

| ຊື່ | ໂດຍຫຍໍ້ |
|---|---|
| ໂຄງການ PIP ແລະ ການຄູ້ມຄອງໂຄງການປື້ມແນະນຳສຳລັບ MPI-DoP | ປື້ມແນະນຳທີ່ອອກແບບສຳລັບ ພະນັກງານ MPI-DoP ໂດຍອີງໃສ່ໜ້າທີ່ສະເພາະຂອງພວດເຂົາເຈົ້າສຳລັບໂຄງການ PIP ແລະ ການຄຸ້ມຄອງໂຄງການບົນພື້ນຖານການສັງລວມຕາມຂັ້ນຕອນແຜນການຫ້າປີ ແລະພື້ນຖານປະຈຳປີ. ເນື້ອໃນລວມທັງການຄຸ້ມຄອງໂຄງການ, ການແບ່ງປັນງົບປະມານ PIP, ແລະ ການຄຸ້ມຄອງໂຄງການ PIP ໂດຍທົ່ວໄປ. |
| ການຄູ້ມຄອງໂຄງການ PIP ປື້ມແນະນຳສຳລັບ MPI-DoE | ປື້ມແນະນຳທີ່ອອກແບບສຳລັບພະນັກງານ MPIDoE ໂດຍອີງໃສ່ໜ້າທີ່ສະເພາະຂອງພວດເຂົາເຈົ້າສຳລັບການຄຸ້ມຄອງໂຄງການ PIP ບົນພື້ນຖານການສັງລວມຕາມຂັ້ນຕອນຂອງງົບປະມານ PIP ປະຈຳປີ ແລະການໝຸນວຽນຂອງໂຄງການ. ເນື້ອໃນລວມທັງວິທີການແນະນຳຄຸ້ມ ຄອງ PIP, ການວິເຄາະລາຍການງົບປະມານໂຄງການ PIP , ການປະເມີນສຳລັບໂຄງການ PIP ຂະໜາດໃຫ່ຍ ແລະ ຂະໜາດກາງ, ການຄຸ້ມຄອງການເບີກຈ່າຍງົບປະມານແລະການຄຸ້ມ ຄອງທຶນສົມທົບຈາກລັກຖະບານ. |

[1] [1] ເຈົ້າຂອງໂຄງການ (PO): ພະນັກງານລັດເຂົ້າຮ່ວມໃນການດູແລໂຄງການ PIP ໃດໜຶ່ງ. ຕາມທຳມະດາແລ້ວສຳມະຊິກພະນັກງານພະແນກວິຊາການຕາມກະຊວງແລະແຂວງຕ່າງໆຈະຕ້ອງມີຄວາມຮັບຜິດຊອບຕໍ່ໂຄງການ PIP ທີ່ໄດ້ຮັບການມອບໝາຍ. PO ແມ່ນມີຄວາມຮັບຜິດຊອບຕໍ່ການຂໍງົບປະມານ PIP ສຳລັບໂຄງການ,ການຕິດຕາມເພື່ອຮັບປະກັນຄວາມສຳເລັດຢ່າງລາບລື້ນແລະຮັບຜິດຊອບຕໍ່ການມອບໂອນໃຫ້ກັບຜູ້ທີ່ເຂົ້າມາປະຕິບັດວຽກງານແທນຫຼັງ ຈາກທີ່ໂຄງການສຳເລັດແລ້ວ.

| | |
|---|---|
| ການຄຸ້ມຄອງໂຄງການ PIP<br>ປື້ມແນະນຳ ສຳລັບ MPI-DIC | ປື້ມແນະນຳທີ່ອອກແບບສຳລັບ ພະນັກງານ MPIDIC ໂດຍອີງໃສ່ໜ້າທີ່ສະເພາະຂອງພວດເຂົາເຈົ້າສຳລັບການຄຸ້ມຄອງທຶນສົມທົບຈາກລັກຖະບານ ODA ບົນພື້ນຖານຂັ້ນຕອນງົບປະມານ PIP ປະຈຳປີ ແລະມຸມມອງການໝູນວຽນຂອງໂຄງການ. ເນື້ອໃນລວມທັງ ການຕິດຕາມ ແລະການສົມທົບຂໍ້ມູນ ຂອງໂຄງການ ODA , ວິທີແບ່ງປັນທຶນສົມທົບຈາກລັດຖະບານ. |
| ໂຄງການ PIP ແລະປື້ມແນະນຳ ການຄຸ້ມຄອງໂຄງການສຳລັບພະແນກແຜນການລັດຖະບານຂັ້ນສຸນກາງ | ປື້ມແນະນຳທີ່ອອກແບບສຳລັບ ພະນັກງານພະແນກແຜນການລັດຖະບານຂັ້ນສູນກາງ ໂດຍອີງໃສ່ໜ້າທີ່ສະເພາະຂອງພວກເຂົາເຈົ້າສຳລັບໂຄງການPIPແລະການຄຸ້ມຄອງໂຄງການຕາມການສັງລວມຂັ້ນຕອນຂອງແຜນການຫ້າປີ,ພື້ນຖານປະຈຳປີແລະການໝູນວຽນຂອງໂຄງການ. ເນື້ອໃນລວມທັງການປະເມີນໂຄງການ PIP , ODA ການຄຸ້ມຄອງທຶນສົມທົບຈາກລັດຖະບານ, ການຄຸ້ມຄອງ ການເບີກຈ່າຍງົບປະມານ, ການຄຸ້ມຄອງໂຄງການ, ແລະການແບ່ງປັນໂຄງການ PIP. |
| ການຄຸ້ມຄອງໂຄງການ PIP<br>ປື້ມຄູ່ມືສຳລັບຫ້ອງການສະຕິງແລະແຜນການເມືອງ | ປື້ມແນະນຳທີ່ອອກແບບສຳລັບພະນັກງານແຜນການຂັ້ນເມືອງໂດຍອີງໃສ່ໜ້າທີ່ສະເພາະ ຂອງພວກເຂົາເຈົ້າ ສຳລັບການຄຸ້ມຄອງໂຄງການ PIP ໂດຍສັງລວມຂັ້ນຕອນຂອງ ພື້ນຖານປະຈຳປີ ແລະ ການໝູນວຽນຂອງໂຄງການ. ເນື້ອໃນລວມທັງ ແຜນການແລະການປັບປຸງ ບົດສະເໜີຂອງໂຄງການ PIP , ແລະບົດລາຍງານຄວາມຄືບໜ້າການປັບປຸງໂດຍຜ່ານການຕິດຕາມໂຄງການ. |

ສະບັບປັບປຸງເຫຼັ້ມທຳອິດຂອງບັນດາປື້ມຄູ່ມືແລະປື້ມແນະນຳຈະໄດ້ອອກນຳໃຊ້ໃນເດືອນສິງຫາ 2009, ແລະ ຈະໄດ້ຮັບການແນະນຳຜ່ານສະໃໝການຝຶກອົບຮົມ ແລະ ສຳມະນາຈາກເດືອນຕຸລາຫາທັນວາ 2009. ພາຍຫຼັງທີ່ໄດ້ມີການຊີ້ແຈ່ງແລະຂະຫຍາຍເນື້ອໃນຂອງມັນແລ້ວ, ການກວດແກ້ຂັ້ນສຸດທ້າຍຢ່າງເປັນທາງການແລ້ວກໍ່ຈະໄດ້ເອົາອອກມານຳໃຊ້ໃນເດືອນສິງຫາ 2011

*[3] ສ້າງວິໃນຜ່ານການຈັດພິມກົດຫມາຍການຄຸ້ມຄອງການລົງທຶນລັດ ແລະ ການນຳໃຊ້ ບັນດາດຳລັດ ແລະ ລະບຽບຫຼັກການຕ່າງໆຂອງມັນ.*

ນະໂຍບາຍດັ່ງກ່າວນີ້ ພົວພັນເຖິງ ຫມາກຜົນທີ 3 ຂອງໂຄງການທີ່ໄດ້ອອກແບບໄວ້. ພີແຄັບ 2 ຈະສະໜັບສະໜູນຊ່ວຍເຫຼືອ ກະຊວງແຜນການ ແລະ ການລົງທຶນ ໃນການຮ່າງກົດໝາຍການ ລົງທຶນ, ເພື່ອການອະນຸມັດຈາກສະພາແຫ່ງຊາດ ໃນວາລະກອງປະຊຸມທີ່ຈະເປີດຂື້ນໃນ ເດືອນ ພະຈິກ 2008. ພີແຄັບ 2 ຍັງຈະສືບຕໍ່ໃຫ້ການສະໜັບສະໜູນ ໃນການສຶກສາເຖິງຄວາມຈຳເປັນ ການອອກດຳລັດ ແລະ ກົດລະບຽບຕ່າງໆທີ່ກ່ຽວຂ້ອງເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດກົດ ໝາຍ. ເພື່ອສະໜັບສະໜູນວຽກງານດັ່ງກ່າວ, ບັນດາແຕ່ລະວຽກງານທີ່ຈະກ່າວຢູ່ຂ້າງລຸ່ມນີ້ ຕ້ອງໄດ້ຖືກລວມເຂົ້າກັນ.

- ➢ ຂັ້ນຕອນການບໍລິຫານການລົງທຶນລັດ ແລະ ພາກສ່ວນທີ່ຈະຮັບຜິດຊອບ ຢູ່ໃນແຕ່ຂັ້ນ ຕອນຂອງມັນຕ້ອງໄດ້ມີການລະບຸຢ່າງຈະແຈ້ງໄວ້ໃນກົດຫມາຍ.
- ➢ ບັນດາຄູ່ມື ແລະ ບັນດາປື້ມແນະນຳ ທີ່ ພີແຄັບ 2 ຈະພັດທະນາຂື້ນ ຕ້ອງສອດຄ່ອງກັບກົດ ຫມາຍ. ນອກຈາກນັ້ນແລ້ວ, ບັນດາຄູ່ມື ແລະ ປື້ມແນະນຳດັ່ງກ່າວ ຕ້ອງໄດ້ຖືໃຫ້ເປັນບົດແນະ ນຳທີ່ເປັນມາດຖານ ຂອງການຄຸ້ມຄອງການລົງທຶນລັດທີ່ກຳນົດ ໄວ້ໃນກົດໝາຍ ຫຼື ຢູ່ໃນບັນດາດຳລັດ ແລະ ກົດລະບຽບຕ່າງໆໃນການນຳໃຊ້ກົດໝາຍ.
- ➢ ການເນັ້ນໜັກຢ່າງເປັນພິເສດ ຕ້ອງໄດ້ຖືກສ້າງຂື້ນ ສຳລັບການຄຸ້ມຄອງງົບປະມານການລົງ ທຶນລັດ.

ບັນດາ 3 ວິທີການທີ່ໄດ້ກ່າວໄວ້ເທິງນີ້ ຈະມີການພົວພັນເຊິ່ງກັນ ແລະ ກັນ ຢູ່ໃນແນວທາງຕໍ່ໄປນີ້, ສະນັ້ນ ມາດຖານການຄຸ້ມຄອງການລົງທຶນລັດ ທີ່ເໝາະສົມ ຈະໄດ້ຮັບການສ້າງຂື້ນຢ່າງໝັ້ນຄົງ .

*[ການກະທົບເຊິ່ງກັນ ແລະ ກັນ 1]* ***<u>ການຝຶກອົບຮົມ/ການຝຶກກັບໜ້າວຽກ</u>*** *ແລະ* ***<u>ຄູ່ມື/ປື້ມແນະນຳ</u>*** *ຈະມີການກະ ທົບເຊິ່ງກັນ ແລະ ກັນ ໃນການຮັບປະກັນວ່າບັນດາວິທີການ ແລະ ເຄື່ອງມື ສຳລັບການຄຸ້ມຄອງ ການລົງທຶນລັດ ຈະຖືກນຳໃຊ້ໃນວຽກງານປະຈຳວັນ ເພື່ອຍົກລະດັບຄວາມສາ ມາດຂອງພະນັກງານທີ່ກ່ຽວຂ້ອງ.*

*[ການກະທົບເຊິ່ງກັນ ແລະ ກັນ 2]* ***<u>ບັນດາຄູ່ມື/ປື້ມແນະນຳ</u>*** *ແລະ* ***<u>ກົດໝາຍການຄຸ້ມຄອງການລົງທຶນລັດ</u>*** *ຈະມີການກະທົບເຊິ່ງກັນ ແລະກັນ ຢູ່ໃນການມີມາດຖານທີ່ລະອຽດສຳລັບການຄຸ້ມຄອງການລົງທຶນລັດ ຄືກັບລະບົບ ທີ່ລວມມີທັງຫຼັກການ ແລະ ຂໍ້ຈຳກັດ ເຊັ່ນດຽວກັນກັບຂັ້ນຕອນທີ່ສະເພາະເຈາະຈົງ.*

*[ການກະທົບເຊິ່ງກັນ ແລະ ກັນ 3]* ***<u>ກົດໝາຍການຄຸ້ມຄອງການລົງທຶນ</u>*** *ແລະ* ***<u>ການຝຶກອົບຮົມ/ການຝຶກກັບໜ້າວຽກ</u>*** *ຈະມີຜົນກະທົບເຊິ່ງກັນ ແລະ ກັນ ໃນການແຈ້ງບັນດາຫຼັກການ ແລະ ລະບຽບການຕ່າງໆ ຂອງການຄຸ້ມຄອງການລົງທຶນລັດ ໃຫ້ພະນັກງານທີ່ກ່ຽວຂ້ອງເພື່ອຮັກສາລະບຽບວິໃນ.*

## 6. ບັນດາກິດຈະກຳຂອງ ພີແຄັບ 2.

ບັນດາກິດຈະກຳຂອງ ພີແຄັບ 2 ຈະຖືກດຳເນີນກັບບົດຮຽນທີ່ຖອດຖອນໄດ້ຈາກ ພີແຄັບທີ່ຜ່ານມາ.

ໃນບັນດາຈຸດທີ່ຈະກ່າວຕໍ່ໄປນີ້ ຈະຕ້ອງໄດ້ຖືກພິຈາລະນາ ໃນເວລາທີ່ດຳເນີນກິດຈະກຳຂອງໂຄງ ການ ;

- ມີການຮ່ວມມື ແລະ ປະສານສົມທົບຢ່າງໃກ້ຊິດກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ.
- ການພັດທະນາ ແລະ ແນະນຳວິທີການການຄຸ້ມຄອງ ການລົງທຶນລັດ ແລະ ແຜນການຝຶກອົບຮົມທີ່ເໝາະສົມກັບລະດັບຄວາມສາມາດ ແລະ ອຳນາດຂອງແຕ່ລະອົງການຈັດຕັ້ງທີ່ ກ່ຽວຂ້ອງ.
- ການພິຈາລະນາເຖິງຕາຕະລາງເວລາແຜນງົບປະມານປະຈຳປີ ຂອງ ການລົງທຶນລັດ ເພື່ອເຮັດໃຫ້ແນ່ນອນວ່າ ບັນດາກິດຈະກຳຂອງ ພີແຄັບ 2 ມີຄວາມສອດຄ່ອງກັບຂັ້ນ ຕອນຂອງວຽກງານປະຈຳປີ.

### 6.1. ຂັ້ນຕອນຂອງວຽກງານໂດຍລວມ

ກິດຈະກຳ ຂອງພີແຄັບ 2 ຈະຖືກດຳເນີນຢູ່ພາຍໃນເວລາກຳນົດ 3 ປີ 5 ເດືອນ, ຈາກ ເດືອນ ມີນາ 2008 ຫາ ເດືອນ ສິງຫາ 2011. ປີງົບປະມານຂອງໂຄງການດັ່ງກ່າວນີ້ ເລີ່ມຂຶ້ນຢູ່ໃນເດືອນ ຕຸລາ ແລະ ສິ້ນສຸດຢູ່ໃນສິງຫາ, ສ່ວນເດືອນ ກັນຍາ ແມ່ນໄລຍະເປົ່າຫວ່າງ.

ໃນແຜນວາດລຸ່ມນີ້ແມ່ນຂັ້ນຕອນຂອງວຽກໂດຍລວມ ຂອງ ພີແຄັບ 2. ບັນດາວຽກໄດ້ແບ່ງອອກ ເປັນ 3 ເຫດການໃຫຍ່ ແລະ 4 ໝາກຜົນ.




*ຮູບປະກອບ 3 : ຂັ້ນຕອນວຽກໂດຍລວມຂອງ ພີແຄັບ 2*

## 6.2. ແຜນກິດຈະກຳ

ອີງຕາມຂັ້ນຕອນຂອງວຽກໂດຍລວມ, ບັນດາຫົວຂໍ້ຍ່ອຍຂ້າງລຸ່ມນີ້ ໄດ້ອະທິບາຍເຖິງແຜນຂອງກິດ ຈະກຳ ສຳລັບກິດຈະກຳສ່ວນໃຫຍ່ ແລະ ບັນດາໝາກຜົນຕາມລຳດັບ.

### (1) ບົດລາຍງານການກະກຽມເບື້ອງຕົ້ນ

ບົດລາຍງານການກະກຽມເບື້ອງຕົ້ນ ໄດ້ອະທິບາຍເຖິງຈຸດປະສົງເບື້ອງຕົ້ນຂອງການດຳເນີນ ພີແຄັບ 2 ລວມທັງກິດຈະກຳ ແລະ ທິດທາງສະເພາະຂອງມັນ. ບົດລາຍງານການກະກຽມ ເບື້ອງຕົ້ນນີ້ ຈະໄດ້ຈັດ ພິມອອກເປັນພາສາລາວ, ອັງກິດ ແລະ ຍີ່ປຸ່ນ ພາຍຫຼັງມີຄວາມເປັນ ເອກະພາບທາງດ້ານເນື້ອໃນລະ ຫວ່າງ ກະຊວງແຜນການ ແລະ ການລົງທຶນ ແລະ ອົງການ ໄຈກາ. ບັນດາກິດຈະກຳຕໍ່ໄປນີ້ ຈະໄດ້ຖືກດຳເນີນເພື່ອສຳເລັດໂຄງການ .

#### (1)-1 ການເກັບກຳ ແລະ ການວິເຄາະຂໍ້ມູນ [ມີນາ-ເມສາ 2008]

ເກັບກຳ ແລະ ວິເຄາະຂໍ້ມູນທີ່ຈຳເປັນສຳລັບການກະກຽມບົດລາຍງານການກະກຽມເບື້ອງຕົ້ນ. ມັນລວມ ທັງບັນດາບົດລາຍງານການທົບທວນ ແລະ ຂໍ້ມູນຂ່າວສານຈາກ ພີແຄັບ.

#### (1)-2 ການສຳເລັດ ແລະ ການສົ່ງບົດລາຍງານການກະກຽມເບື້ອງຕົ້ນ [ ເມສາ 2008 ]

ຮ່າງບົດລາຍງານແມ່ນຈະຖືກສົ່ງໃຫ້ ກະຊວງແຜນການ ແລະ ການລົງທຶນ ແລະ ອົງການ ໄຈກາ ປະຈຳລາວ ເພື່ອການປຶກສາຫາລື. ຜົນຂອງການປຶກສາຫາລື ຈະມີຜົນຕໍ່ບົດລາຍງານສະບັບສົມບູນ ເພື່ອສົ່ງເປັນ 03 ພາສາ : ລາວ,

ອັງກິດ ແລະ ຍີ່ປຸ່ນ.

**(2) ການສຳຫຼວດຂັ້ນພື້ນຖານ [ເມສາ - ສິງຫາ 2008]**

ການສຳຫຼວດຂັ້ນພື້ນຖານ ຈະດຳເນີນເພື່ອລະບຸຕົວຊີ້ບອກທີ່ພິສູດວັດຖຸປະສົງ ສຳລັບ ພີແຄັບ 2 ແລະເປົ້າໝາຍລວມຂອງ ໂຄງການ . ຕົວຊີ້ບອກດັ່ງກ່າວຈະໄດ້ຮວບຮວມເຂົ້າໃນແບບຂອງໂຄງການ ສະບັບປັບປຸງໃໝ່ ເຊິ່ງຈະໄດ້ສະເໜີຜ່ານຢູ່ໃນ ກອງປະຊຸມຄະນະປະສານງານຮ່ວມ ຄັ້ງທີ 2 ໃນ ເດືອນ ກຸມພາ 2009 ເພື່ອຂໍອະນຸມັດເປັນຄັ້ງສຸດທ້າຍ.

ການສຳຫຼວດຕໍ່ໄປນີ້ ແມ່ນຈະຖືກດຳເນີນເພື່ອລະບຸຕົວຊີ້ບອກປະຈຸບັນ ທີ່ຖືກລະບຸໄວ້ໃນບັນຊີລາຍຊື່ ສຳລັບເປົ້າໝາຍລວມ.

**ຕາຕະລາງ 2 : ຕົວຊີ້ບອກເປົ້າໝາຍລວມ ( ທີ່ມີຢູ່ປະຈຸບັນ ) ແລະ ບັນດາຫົວຂໍ້ຂອງການສຳຫຼວດ**

| ບັນດາຕົວຊີ້ບອກ | ຫົວຂໍ້ຂອງການສຳຫຼວດ |
|---|---|
| ຈຳນວນ ແລະອັດຕາສ່ວນຂອງໂຄງການ ລົງທຶນລັດທີ່ໃຊ້ທຶນພາຍໃນຫຼຸດລົງ,ໂຄງການ ODA ບໍ່ໄດ້ ຮັບການສືບຕໍ່ ຫຼື ໂຈະຊົ່ວຄາວ ຍ້ອນເຫດຜົນທາງດ້ານງົບປະມານ. | ➢ ຂອກໃຫ້ໄດ້ບັນຊີລາຍຊື່ໂຄງການລົງທຶນລັດ ທີ່ບໍ່ໄດ້ສືບຕໍ່ ຫຼື ໂຈະຫຼາຍກວ່າ 2 ປີ ຈາກກົມແຜນການ ກະຊວງແຜນການ ແລະ ການລົງທຶນ<br>➢ ດຳເນີນການສຳພາດ ແລະ ສຳຫຼວດ ບັນດາພາກສ່ວນທີ່ຮັບຜິດຊອບໂຄງ ການລົງທຶນລັດ ທີ່ບໍ່ໄດ້ສືບຕໍ່/ໂຈະຊົ່ວຄາວ.<br>➢ ສ້າງບັນຊີລາຍຊື່ ໂຄງການລົງທຶນລັດ ທີ່ບໍ່ໄດ້ຮັບການສືບຕໍ່ ແລະ ໂຈະຊົ່ວຄາວ ພ້ອມດ້ວຍເຫດຜົນທາງດ້ານງົບປະມານ. |
| ຈຳນວນ ແລະອັດຕາສ່ວນຂອງໂຄງການ ລົງທຶນລັດທີ່ໃຊ້ ທຶນພາຍໃນຫຼຸດລົງ, ໂຄງການ ODA ທີ່ບໍ່ໄດ້ຮັບການບຳ ລຸງຮັກສາຢ່າງເໝາະສົມ ຫຼື ບໍ່ໄດ້ຮັບການບຳລຸງຮັກສາ ເລີຍຫຼັງຈາກສຳເລັດໂຄງການ.. | ➢ ຂອກໃຫ້ໄດ້ບັນຊີລາຍຊື່ໂຄງການລົງທຶນລັດ ທີ່ບໍ່ສຳເລັດໃນ 10 ປີຜ່ານມາ ນຳກົມແຜນການ ກະຊວງແຜນການ ແລະ ການລົງທຶນ.<br>➢ ດຳເນີນການສຳພາດ ແລະ ສຳຫຼວດ ບັນດາພາກສ່ວນທີ່ຮັບຜິດຊອບການດຳເນີນໂຄງການລົງທຶນລັດທີ່ສຳເລັດ.<br>➢ ວິເຄາະຜົນໄດ້ຮັບຕາມຂະແໜງການ ແລະ ເຂດແຄວ້ນ.<br>➢ ວິເຄາະເບິ່ງງົບປະມານບຳລຸງຮັກສາສຳລັບໂຄງການທີ່ສຳເລັດຢູ່ບັນດາກະ ຊວງ ແລະ ບັນດາແຂວງ.<br>➢ ດຳເນີນການສຳຫຼວດເບິ່ງໂຄງການທີ່ສຳເລັດແລ້ວທີ່ໄດ້ມອບ ຫຼື ໃຫ້ວິສາຫະກິດເອກະຊົນເຊົ່າ.. |
| ຈຳນວນ ແລະອັດຕາສ່ວນຂອງໂຄງການ ລົງທຶນລັດທີ່ໃຊ້ທຶນພາຍໃນຫຼຸດລົງ ແລະ ໂຄງການ ODA ບໍ່ໄດ້ນຳໃຊ້ | ➢ ຂອກໃຫ້ໄດ້ບັນຊີລາຍຊື່ໂຄງການລົງທຶນລັດ ທີ່ສຳເລັດໃນ 10 ປີຜ່ານມາ ນຳກົມແຜນການ ກະຊວງແຜນການ ແລະ ການລົງທຶນ.<br>➢ ດຳເນີນການສຳພາດ ແລະ ສຳຫຼວດ ບັນດາພາກສ່ວນທີ່ຮັບຜິດຊອບການດຳເນີນໂຄງການລົງທຶນລັດທີ່ສຳເລັດ.<br>➢ ວິເຄາະຜົນໄດ້ຮັບຕາມຂະແໜງການ ແລະ ເຂດແຄວ້ນ.<br>➢ ວິເຄາະຜົນກະທົບຂອງໂຄງການລົງທຶນລັດໄປສູ່ແຜນພັດທະນາ. |
| ຈຳນວນ ແລະອັດຕາສ່ວນຂອງໂຄງການ ລົງທຶນລັດທີ່ໃຊ້ທຶນພາຍໃນຫຼຸດລົງ ແລະ ໂຄງການ ODA ທີ່ເຄີຍຖືກປ່ຽນແປງຢູ່ໃນ ສັນ ຍາຢ່າງບໍ່ໄດ້ຄາດໄວ້ກ່ອນ.. | ➢ ຂອກໃຫ້ໄດ້ບັນຊີລາຍຊື່ໂຄງການລົງທຶນລັດ ທີ່ບໍ່ໄດ້ສືບຕໍ່ ຫຼື ໂຈະຫຼາຍກວ່າ 2 ປີ ຈາກກົມແຜນການ ກະຊວງແຜນການ ແລະ ການລົງທຶນ.<br>➢ ດຳເນີນການສຳພາດ ແລະ ສຳຫຼວດ ບັນດາພາກສ່ວນທີ່ຮັບຜິດຊອບໂຄງ ການລົງທຶນລັດ ທີ່ບໍ່ໄດ້ສືບຕໍ່/ໂຈະຊົ່ວຄາວ.<br>➢ ດຳເນີນການສຳພາດ ກ່ຽວກັບເຫດຜົນຂອງການປ່ຽນແປງຢູ່ໃນບໍລິສັດທີ່ເຊັນສັນຍາ. |

ນອກຈາກການສຳຫຼວດທີ່ລະບຸໄວ້ໃນຂ້າງເທິງສຳລັບຕົວຊີ້ບອກເປົ້າໝາຍລວມທີ່ມີຢູ່ປະຈຸບັນແລ້ວ, ໂຄງການຈະພິຈາລະນາ ຄວາມເປັນໄປໄດ້ສຳລັບຕົວຊີ້ບອກຕື່ມ ທີ່ອາດຈະພົວພັນໂດຍກົງຕໍ່ຜົນກະ ທົບໄປສູ່ແຜນພັດທະນາແຫ່ງຊາດ.

ບັນດາຈຸດຕໍ່ໄປນີ້ຈະໄດ້ຮັບການສຳຫຼວດ ;

**ຕາຕະລາງ 3 : ຕົວຊີ້ບອກເປົ້າໝາຍລວມ ( ໃໝ່ ) ແລະ ຫົວຂໍ້ຂອງການສໍາຫຼວດ .**

| ບັນດາຕົວຊີ້ບອກ | ຫົວຂໍ້ຂອງການສໍາຫຼວດ |
|---|---|
| ຈໍານວນ ແລະ ອັດຕາສ່ວນ ຂອງໂຄງການລົງທຶນລັດ ທີ່ສໍາເລັດໄປຕາມແຜນເບື້ອງຕົ້ນ. | ➢ ຂອກໃຫ້ໄດ້ບັນຊີລາຍຊື່ໂຄງການລົງທຶນລັດ ທີ່ບໍ່ສໍາເລັດໃນ 10 ປີຜ່ານມາ ນໍາກົມແຜນການ ກະຊວງແຜນການ ແລະ ການລົງທຶນ.<br>➢ ວິເຄາະຜົນໄດ້ຮັບຕາມຂະແໜງການ ແລະ ເຂດແຄວັນ.<br>➢ ສົມທຽບ ລະຫວ່າງ ແຜນ ກັບຜົນໄດ້ຮັບຕົວຈິງຂອງແຕ່ລະໂຄງການລົງທຶນຂອງລັດ. |
| ຈໍານວນ ແລະ ອັດຕາສ່ວນຂອງໂຄງການລົງທຶນລັດ ທີ່ໄດ້ຖືກວັດແທກໃນແງ່ຜົນກະທົບທາງບວກ ຫຼັງຈາກໂຄງການສໍາເລັດ. | ➢ ຂອກໃຫ້ໄດ້ບັນຊີລາຍຊື່ໂຄງການລົງທຶນລັດ ທີ່ສໍາເລັດໃນ 10 ປີຜ່ານມາ ນໍາກົມແຜນການ ກະຊວງແຜນການ ແລະ ການລົງທຶນ.<br>➢ ວິເຄາະຜົນໄດ້ຮັບຕາມຂະແໜງການ ແລະ ເຂດແຄວັນ.<br>➢ ຂອກໃຫ້ໄດ້ບັນດາບົດບັນທຶກຂອງການດໍາເນີນງານ, ຜົນກະທົບ, ການປະເມີນຜົນຫຼັງຈາກສໍາເລັດໂຄງການ ແລະ ອື່ນໆ ຈາກແຕ່ລະໂຄງການທີ່ສໍາເລັດແລ້ວ. |
| ບັນດາຕົວຊີ້ບອກເຫຼົ່ານີ້ ນັບທັງຕົວຊີ້ບອກອື່ນໆທີ່ອາດວັດແທກຜົນກະທົບຂອງ ພີແຄັບ 2 ຈະໄດ້ຮັບການພິຈາລະນາຕໍ່. ບັນດາຕົວຊີ້ບອກເຫຼົ່ານັ້ນ ຍັງຈະຖືກພິຈາລະນາໃນຖານະເປັນຕົວຊີ້ບອກຂອງເປົ້າໝາຍອັນສຸດຍອດທີ່ບົ່ມຊ້ອນຂອງ ພີແຄັບ 2. | |

### (3) ບັນດາວາລະການສໍາມະນາ

ຕະຫຼອດໄລຍະການດໍາເນີນງານຂອງ ພີແຄັບ 2 ໄດ້ມີການວາງແຜນຈັດສໍາມະນາໄວ້ເປັນ 3 ຄັ້ງດ້ວຍກັນ. ຈຸດປະສົງຂອງການຈັດສໍາມະນາ ແມ່ນເພື່ອແຈ້ງຈຸດປະສົງ ແລະ ແຜນການດໍາເນີນງານຂອງແຕ່ລະກິດຈະກໍາ ແລະ ແນະນໍາ ວິທີການ ແລະ ເຄື່ອງມືການຄຸ້ມຄອງການລົງທຶນລັດ ເຊິ່ງແມ່ນຜົນໄດ້ຮັບຈາກ ພີແຄັບ ໃຫ້ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ນອກຈາກນັ້ນ ຍັງຈະໄດ້ຮັບຄໍາຕໍານິສິ່ງຂ່າວຈາກບັນດາ ອົງການຈັດຕັ້ງດັ່ງກ່າວ. ຕໍ່ໄປນີ້ ແມ່ນຕາຕະລາງເວລາ ແລະ ເນື້ອໃນຂອງວາລະສໍາມະນາທັງ 3 ຄັ້ງ ;



*ຮູບປະກອບ ທີ 4 : ວາລະການຈັດສໍາມະນາ ຂອງ ພີແຄັບ 2*

#### (3)-1 ສໍາມະນາເປີດຕົວ [ພຶດສະພາ 2008]

ສໍາມະນາເປີດຕົວ ໂຄງການພີແຄັບ 2 ຈະຈັດຂຶ້ນທີ່ ນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງ ເພື່ອສະເໜີແຜນ ຂອງມັນ ແລະ ບັນດາຜົນໄດ້ຮັບທີ່ຄາດວ່າຈະໄດ້ຮັບ. ບັນດາພະນັກງານຂັ້ນກົມ ຂອງກົມແຜນການຂອງແຕ່ລະກະຊວງ ແລະ ອົງການທຽບເທົ່າ ພ້ອມທັງພະນັກງານຈໍານວນໜຶ່ງຂອງ ພະແນກແຜນການ ແລະ ການລົງທຶນຈາກບາງແຂວງ ກໍຈະຖືກເຊີນເຂົ້າຮ່ວມນໍາ..

#### (3)-2 ສໍາມະນາໄລຍະກາງ [ຕຸລາ - ທັນວາ 2009]

ກອງປະສໍາມະນາໄລຍະກາງ ຈະຖືກດໍາເນີນຢູ່ 4 ແຫ່ງ ໃນທົ່ວປະເທດ ( ແຂວງຕົວແທນຂອງພາກເໜືອ, ກາງ, ໃຕ້

ຕາມລຳດັບ ແລະ ນະຄອນຫຼວງວຽງຈັນ ). ຈຸດປະສົງຕົ້ນຕໍ ແມ່ນ ເພື່ອສະເໜີບັນດາເຄື່ອງມື ແລະ ວິທີການ ພ້ອມດ້ວຍຄູ່ມື ແລະ ປື້ມແນະນຳ ທີ່ໄດ້ລວມເຂົ້າກັນແລ້ວ.

### (3)-3 ກອງປະຊຸມປິດສະຫຼຸບໂຄງການ [ສິງຫາ 2011]

ກອງປະຊຸມປິດສະຫຼຸບໂຄງການ ຈະຈັດຢູ່ນະຄອນຫຼວງວຽງຈັນ, ຈຸດປະສົງແມ່ນເພື່ອ ລາຍງານຫມາກຜົນ ແລະ ຜົນໄດ້ຮັບທີ່ຄາດວ່າຈະໄດ້ ຕໍ່ລັດຖະບານ ແລະ ບັນດາຜູ້ໃຫ້ທຶນ. ບັນດາພະນັກງານຂັ້ນກົມ ຂອງກົມແຜນ ການຂອງແຕ່ລະກະຊວງ ແລະ ອົງການຫງບເທົ່າ ພ້ອມທັງພະນັກງານຈຳນວນໜຶ່ງຂອງ ພະແນກແຜນການ ແລະ ການລົງທຶນຈາກບາງແຂວງ ກໍຈະຖືກເຊີນເຂົ້າຮ່ວມນຳ..

### (4) ກອງປະຊຸມຄະນະກຳມະການປະສານງານຮ່ວມ ຫຼື JCC Meeting

ອີງຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຢູ່ໃນບົດລາຍງານການປຶກສາຫາລື, ກອງປະຊຸມຄະນະກຳມະການປະສານງານ ຮ່ວມ ຈະໄດ້ຈັດຂຶ້ນໃນເດືອນ ພຶດສະພາ 2008 ມື້ດຽວກັນກັບ ກອງປະຊຸມສຳມະນາເປີດຕົວໂຄງການ. ຫຼັງຈາກນັ້ນ ກອງປະຊຸມ JCC ຈະໄດ້ຈັດຂື້ນໃນເດືອນ ກຸມພາ ແລະ ສິງຫາ ຂອງທຸກໆປີ .

### (5) ກິດຈະກຳສຳລັບການຝຶກອົບຮົມແລະ OJT [ຜົນໄດ້ຮັບ 1]

**ຜົນໄດ້ຮັບ**1 ແມ່ນການແຕ່ງຕັ້ງລະບົບການຄຸ້ມຄອງ PIP ທົ່ວປະເທດ, ເຊິ່ງໄດ້ຮັບການພັດທະນາພາຍໃຕ້ PCAP, ໂດຍຜ່ານການຝຶກອົບ ຮົມຫຼາຍຂັ້ນຕອນແລະການຝຶກອົບຮົມວຽກງານອື່ນໆ (OJT). ໃນຄະນະທີ່ PCAP ໄດ້ຮັບຜົນສຳເລັດ ໃນການ ສົ່ງເສີມຄວາມຮູ້ແລະປະ ສົບການໃນການປະຕິບັດວຽກງານຄຸ້ມຄອງບຸກຄະລາກອນຂອງ PIP ໂດຍຜ່ານການຝຶກ ອົບຮົມແລ້ວ, PCAP 2 ຈະສຸມໃສ່ໃຫ້ພວກເຂົາ ເຈົ້າໄດ້ນຳໃຊ້ຄວາມຮູ້ແລະປະສົບການທີ່ພວກເຂົາເຈົ້າໄດ້ຮຽນມາເຂົ້າໃນ ການຝຶກອົບຮົມວຽກງານໃນແຕ່ລະວັນ. PCAP 2 ຈະພັດທະນາ ສາມຍຸດທະສາດດັ່ງຕໍ່ໄປນີ້ເພື່ອຈັດຕັ້ງແລະ ເຜີຍແຜ່ລະບົບ ການຄຸ້ມຄອງ PIP.

**ການຈັດຕັ້ງແລະເຜີຍແຜ່ແຜນຍຸດທະສາດ I:** ນຳໃຊ້ **ການວາງແຜນ,ການປະຕິບັດຕົວຈິງ,ການຕິດຕາມແລະການປ້ອນຂໍ້ມູນກັບຢ່າງໝູນ ວຽນ**PCAP 2 ຈະນຳໃຊ້ ການວາງແຜນ,ການປະ ຕິບັດຕົວຈິງ,ການຕິດຕາມແລະການ ປ້ອນຂໍ້ມູນກັບຢ່າງ ໝູນວຽນ ເພື່ອໃຫ້ ໄດ້ມາ ຜົນແຫ່ງການຝຶກອົບຮົມແລະ OJT ໃນສະຖານທີ່ (ເບິ່ງຕາມຮູບທີ 7). ບາດກ້າວທຳອິດ, ໄລຍະການວາງແຜນແມ່ນການ ພັດທະນາເຄື່ອງມືການຝຶກອົບຮົມເຊິ່ງໃຫ້ໄດ້ຕາມຄວາມຕ້ອງການຂອງການຝຶກອົບ ຮົມ ໄປຄຽງຄູ່ກັບການດຳເນີນການຝຶກອົບຮົມຂອງຄູຝຶກ (TOT).




ບາດກ້າວທີສອງ, ໄລຍະການປະຕິບັດຕົວຈິງ ແມ່ນການປະຕິ ບັດການຝຶກອົບຮົມແລະການ ນຳໃຊ້ປະ ສົບການທີ່ໄດ້ມາໃນການຝຶກຫັດວຽກ ງານຕົວຈິງໂດຍຜ່ານ OJT. ໃນຄະນະທີ່ການຝຶກ ອົບຮົມເປັນການປະຖະກາຖາໃນຫ້ອງຮຽນ ໂດຍສຸມໃສ່ ຄວາມຮູ້ພື້ນຖານທີ່ໄດ້ມາ, OJT ກໍ່ຈະໄດ້ສຸມໃສ່ການນຳໃຊ້ the know-how ທີ່ໄດ້ມາໃນວຽກງານປະຈຳວັນ

ບາດກ້າວທີສາມ, ເບິ່ງແມ່ນຕິດຕາມດູແລໃນ ເລື່ອງການຝຶກອົມຮົມ OJT, ຈາກນັ້ນ ປະເມີນຄຸນນະພາບຂອງການຂື້ນແຜນງົບປະມານປະຈຳປີ PIP ແລະການປະ ເມີນຜົນຂອງໂຄງການ PIP

ແຕ່ລະໂຄງການ, ເຊິ່ງຈະ ເປັນພື້ນໃຫ້ແກ່ OJT.

ຮູບປະກອບ 7 : ວົງຈອນແຜນ,ເຮັດ, ເບິ່ງ ແລະ ຖອດບົດຮຽນ

ບາດ ກ້າວທີສີ່, ໄລຍະການປ້ອນຂໍ້ມູນຄືນ ແມ່ນການ ພັດທະນາ ຫຼັກສູດການຝຶກອົບຮົມຕໍ່ ໄປແລະເຄື່ອງມືອຸປະກອນ ໂດຍການ ນຳໃຊ້ ບົດຮຽນທີ່ໄດ້ຮຽນມາໂດຍຜ່ານການຕິດຕາມແລະປະ ເມີນຜົນຜ່ານ ມາ. PCAP 2, ໂດຍຜ່ານໄລຍະໂຄງການ, ຈະໄດ້ພັດທະນາ ການວາງ ແຜນ,ການປະຕິບັດຕົວຈິງ, ການ ຕິດຕາມແລະການປ້ອນຂໍ້ມູນກັບໝູນ ວຽນເປັນສາມຮອບ ເພື່ອວ່າຈະໄດ້ ຈັດຕັ້ງການ ນຳໃຊ້ການປະຕິບັດ ຕົວຈິງຂອງປະສິບການຄຸ້ມຄອງ PIP ເຂົ້າໃນວຽກງານປະຈຳວັນ.

**ການຈັດຕັ້ງແລະເຜີຍແຜ່ແຜນຍຸດທະສາດ II: ຈັດຕັ້ງ ຫົວຂໍ້ສະເພາະສຳລັບການຝຶກອົບຮົມໃນແຕ່ລະປີ.**

ໜຶ່ງໃນສິ່ງທີ່ທ້າທາຍທີ່ໃຫ່ຍທີ່ສຸດຂອງ PCAP 2 ແມ່ນການເຜີຍແຜລະບົບການຄຸ້ມຄອງຂອງ PIP ໃຫ້ກັບກະຊວງ ແລະ ບັນດາແຂວງຕ່າງໆ. ເພື່ອປະສິບຜົນສຳເລັດຕໍ່ສິ່ງທ້າທາຍຕ່າງໆ, ການຝຶກອົບຮົມໃນພາກທີ I ( ປີທີ 2) ຈະເສີມຂະຫາຍພື້ນທີ່ຄວບ ຄຸມຂອງລະບົບການຄຸມຄອງ PIPໄປທົ່ວກະຊວງແລະບັນດາແຂວງຕ່າງໆ. ສິ່ງເລົ່ານີ້ຈະສາມາດປະຕິບັດໄດ້ໂດຍການນຳໃຊ້ ຄູ່ມື ແລະປຶ້ມແນະນຳ ເຊິ່ງໄດ້ຮັບການພັດທະ ນາແລ້ວໂດຍ PCAP (ເບິ່ງຮູບທີ 8). ຜົນທີ່ຄາດຫວັງອອກມາໃນການຝຶກອົບ ຮົມໃນ ພາກທີ I ແມ່ນແຜນງົບປະມານປະຈຳປີ ຂອງ PIP ຂອງບັນດາກະຊວງແລະແຂວງຕ່າງໆ ໂດຍໄດ້ຮັບການກຳນົດໂດຍການນຳໃຊ້ ເຄື່ອງມືທີ່ມີຢູ່. ການຝຶກອົບຮົມພາກທີ II ( ປີທີ 3 ) ຈະເຮັດໃຫ້ເນື້ອໃນການຝຶກອົບຮົມ ມີ ເນື້ອຫາ ຂື້ນຕື່ມ ໂດຍການເພີ່ມເຕີມ ຮູບຮ່າງຂອງ ໝວດການຄຸ້ມຄອງໂຄງການ, ການເງິນແລະການ ຄຸ້ມ ຄອງງົບປະມານ, ODA ການຄຸ້ມຄອງ , ແລະການຄຸ້ມຄອງ PIP ລະດັບຂັ້ນເມືອງ. ຜົນທີ່ຄາດຫວັງອອກມາແມ່ນ ແຜນງົບປະມານປະຈຳປີ ຂອງ

ບັນດາກະຊວງແລະແຂວງຕ່າງໆ ທີ່ຖືກກຳນົດໂດຍ ການໃຊ້ ເຄື່ອງມືທີ່ ໄດ້ຮັບການປັບປຸງທີ່ທັນສະໃໝ. ການຝຶກອົບຮົມ ພາກທີ III (ປີ ທີ 4 ) ຈະເຜີຍແຜ່ ເນື້ອຫາການຝຶກອົບຮົມທີ່ໄດ້ຮັບການພັດທະນາແລ້ວ
ໄປໃນທົ່ວປະເທດ. ຜົນທີ່ຄາດຫວັງອອກແມ່ນແຜນງົບ ປະມານປະຈຳປີ PIP ທີ່ມີຄຸນນະພາຍທີ່ດີກວ່າ ສຳລັບບັນດາກະຊວງແລະ ແຂວງຕ່າງໆ. ໃນນີ້ PCAP 2 ຈະຈັດຕັ້ງ ຫົວຂໍ້ສະເພາະ ສຳລັບການຝຶກອົບຮົມໃນແຕ່ລະປີ ເພື່ອເສີມຂະຫຍາຍ ພື້ນທີ່ການຄວບຄຸມຂອງລະບົບການຄຸ້ມຄອງ PIP ແລະພັດທະນາຄຸນ ນະພາບຂອງລະບົບ.




*ຮູບປະກອບ 8 : ການຝຶກອົບຮົມ ແລະ ຕາຕະລາງເວລາຂອງມັນ*

**ການຈັດຕັ້ງແລະເຜີຍແຜ່ແຜນຍຸດທະສາດ III: ການຮັບປະກັນ ຄວາມໝັ້ນຄົງທາງດ້ານການ ເງິນ**

PCAP 2 ມີຈຸດມຸ້ງໝາຍສຳລັບ MPI ເພື່ອສົ່ງເສີມ ຄວາມໝັ້ນຄົງຂອງມັນລວມທັງ ທິດທາງໆດ້ານການ ເງິນ.
ດັ່ງນັ້ນ,ຕະຫຼອດໄລຍະ ຂອງໂຄງການ, PCAP 2 ແລະ MPI ຈະ ໄດ້ປຶກສາຫາລືກັນ ເຮັດແນວໃດຈິ່ງຈະໃຫ້ ງົບປະມານ MPI ສຳລັບ ການປະຕິບັດງານການ ຝຶກອົບ ຮົມ ຂອງ MPI
ນີ້ສາມາດ ຍືນຍົງຄົງຕົວໃນ ການຝຶກອົບຮົມດ້ວຍຕົວມັນ ເອງຫຼັງຈາກທີ່ PCAP 2 ຊິ້ນສຸດລົງ.

*ຮູບປະກອບ 9 : ຕົວຢ່າງຂອງການຝຶກອົບຮົມທີ່ຍືນຍົງ*

ນີ້ຄື ຕົວຢ່າງຂອງການ ສົມ ທົບງົບປະມານຂອງການຝຶກອົບຮົມ. JICA ຈະຮັບປະກັນ ເລື່ອງຄ່າໃຊ້ຈ່າຍຂອງການຝຶກອົບຮົມ **ພາກທີ I (ປີທີ 2 )** ໃນທຸກໆແຂວງ (ເບິ່ງຮູບທີ 9). ສຳລັບການຝຶກ ອົບຮົມ **ພາກທີສອງ II (ປີທີ 3)** ຄ່າໃຊ້ຈ່າຍໃນການ ດຳເນີນງານ, ສອງສ່ວນສາມຂອງແຕ່ລະແຂວງແມ່ນຈະໄດ້ຮັບ ທຶນຈາກ JICA ແລະເຫຼືອນັ້ນແມ່ນຈາກ MPI.




ມັນເປັນເລື່ອງທີ່ຫຍຸ້ງຍາກຫຼາຍໃນການດຳເນີນການຝຶກອົບຮົມໃນເຂດທີ່ມີພູເຂົາທາງເຂດພາກເໜືອແລະທາງເຂດພາກໃຕ້. ດ້ວຍເຫດນີ້ ທາງ ອົງການ JICA ຈິ່ງພົບຄວາມຫຍຸ່ງຍາກໃນເຂດແປດແຂວງພາກເໜືອແລະສີ່ແຂວງທາງພາກໃຕ້. ສຳລັບການຝຶກອົບຮົມ ພາກທີ III (ປີ ທີ 4 ), JICA ສາມາດໃຫ້ທຶນໄດ້ ໜຶ່ງສ່ວນສາມຂອງບັນດາແຂວງຕ່າງໆ ເຊິ່ງຫົກແຂວງແມ່ນຢູ່ທາງພາກເໜືອ.

ສະຫຼຸບ,ໂດຍການໃຊ້ແຜນຍຸດທະສາດສາມຢ່າງທີ່ໄດ້ກ່າວມາຂ້າງເທິງນັ້ນ, ປະເພດຂອງກິດຈະກຳເຊິ່ງຈະໄດ້ປະຕິບັດໃນແຕ່ລະປີເພື່ອການເຜີຍແຜ່ລະບົບການຄຸ້ມຄອງໃຫ້ກັບປະມານ 510 ຄົນ (170 DPI ຄົນ ແລະ 340 ຄົນ ຈາກພະແນກວິຊາການ) ຂອງ 17 ແຂວງ ແລະປະມານ 150 ຄົນ ຈາກ ກະຊວງສູນກາງ.

ໄລຍະເວລາ ຈາກ ເດືອນ ມີນາ ຫາ ເດືອນ ມິຖຸນາ 2008, ເຊິ່ງເປັນເວລາທີ່ເໝາະສົມຫຼັງຈາກການເລີ່ມຕົ້ນຂອງ PCAP 2, ເຊິ່ງເປັນໄລຍະເວລາທີ່ສຳຄັນທີ່ສຸດເມື່ອ MPI ແລະບັນດາກະຊວງແລະແຂວງຕ່າງໆສຳເລັດງົບປະມານປະຈຳປີຂອງ ພວກເຂົາ. ເຖິງແມ່ນວ່າໃນໝວດທີ 3) 1) ຄຳແນະນຳການປະຕິບັດໂຄງການ JICA ຈະໄດ້ເວົ້າເຖິງ “ການດຳເນີນການຝຶກອົບຮົມ ແລະ OJT ທີ່ນະຄອນຫຼວງວຽງຈັນ, ໃນ ສີ່ແຂວງ ແລະ ສາມກະຊວງສູນກາງກໍ່ຕາມ (ຈາກ ເດືອນ ມີນາ ຫາ ເດືອນ ມິຖຸນາ 2008)”, ມັນກໍ່ຍັງເປັນເວລາທີ່ຍັງບໍ່ທັນເໝາະສົມທີ່ຈະດຳເນີນການຝຶກອົບຮົມເມື່ອຄຳນຶງເຖິງຂະບວນການຂື້ນງົບປະມານ PIP. ການດຳເນີນການຝຶກອົບຮົມໃນເວລານີ້ເບິ່ງຄືວ່າບໍ່ເໝາະສົມສຳລັບຜົນທີ່ອອກມາສຳລັບຄວາມເຊື່ອຖື, ຕົວຢ່າງ, ແຜນງົບປະມານປະຈຳປີ PIP ເໝາະສົມ ແຕ່ວ່າ ບັນດາແຂວງແລະກະຊວງ ຊຳພັດ ຈະປະເມີນໂຄງການ PIP ແຕ່ລະບ່ອນແລ້ວ ແລະຊຳພັດກຳນົດແຜນງົບປະມານປະຈຳປີຂອງພວກເຂົາໃນເວລານັ້ນອີກ. ຍິ່ງໄປກ່ວານັ້ນ,ຄູຝຶກເກືອບທັງໝົດ ຈະບໍ່ຫວ່າງ ເນື່ອງຈາກວ່າຄູຝຶກຜູ້ທີ່ເປັນບຸກຄະລາກອນ MPI ຈະຄາວຽກໃນການເຮັດໃຫ້ແຜນໃນການຂື້ນງົບປະມານປະຈຳປີ PIP ໄດ້ຮັບການອະນຸມັດຈາກ ສະພາແຫ່ງຊາດ. ດັ່ງນັ້ນ, PCAP 2 ສະເໜີໃຫ້ສະໜັບສະໜູນ MPI ຈາກ ເດືອນມີນາ ຫາ ມິຖຸນາ 2008 ໃນການຂື້ນງົບປະມານຜ່ານ OJT ເພື່ອນຳໄປສູ່ການພັດທະນາກິດຈະກຳຕໍ່ໄປແລະການຝຶກອົບຮົມສຳລັບປີຕໍ່ໆໄປ.

### (5)-1 ການຝຶກອົບຮົມໜ້າວຽກຕົວຈິງ OJT ໃຫ້ແກ່ ກະຊວງແຜນການແລະການລົງທຶນ [ມີນາ ເຖິງ ເດືອນມິຖຸນາ 2008]

ແຕ່ເດືອນມີນາ ເຖິງ ເດືອນເມສາ 2008 ບັນດາກະຊວງ ແລະ ແຂວງທັງໝົດຈະສະເໜີຂໍງົບປະມານປະຈຳປີນຳ MPI ໃຫ້ແກ່ໂຄງການ PIP ຂອງຕົນ. ຈາກນັ້ນ MPI ຈະວິເຄາະ, ສັງລວມ ແລະ ດັດແປງບົດສະເໜີຂໍເຫຼົ່ານັ້ນ ຮ່ວມກັບອຳນາດປົກຄອງ. ໂດຍຜ່ານ OJT, PCAP2 ຈະຕິດຕາມ ແລະ ໃຫ້ການສະໜັບສະໜູນຂະບວນການສ້າງງົບປະມານ. ໃນຕົວຈິງແລ້ວ ຊ່ຽວຊານຈະຮ່ວມມືໃນຂະບວນການສ້າງງົບປະມານຮ່ວມກັບ MPIDOP ແລະ MPIDOE ແລະໃຫ້ຄຳແນະນຳເມື່ອຈຳເປັນ. ໂດຍນຳໃຊ້ເຄື່ອງມື ທີ່ຜ່ານການພັດທະນາຈາກ PCAP ເຊັ່ນວ່າ ລາຍການການກວດສອບ (checklist), PCAP 2 ຈະສະໜັບສະໜູນ MPIDOE ໃນການປະເມີນຜົນ ແຕ່ລະໂຄງການຂອງ PIP ແລະ MPIDOP ໃນການສ້າງງົບປະມານໂດຍອີງໃສ່ການປະເມີນຜົນໄດ້ຮັບ ແລະ ບົດຊີ້ນຳຂອງລັດຖະມົນຕີ MPI ປີ 2008. PCAP 2 ຍັງຈະຕິດຕາມເບິ່ງວ່າປຶ້ມແນະນຳ ແລະ ປຶ້ມຄູ່ມືທີ່ຖືກ ພັດທະນາໂດຍ PCAP ນັ້ນແມ່ນໄດ້ຖືກນຳໃຊ້ໃນວຽກຕົວຈິງຄືແນວໃດແນ່.

**(5)-2 ການເມີນຜົນຂອງແຕ່ລະໂຄງການ PIP, ການຕິດຕາມ ແລະ ຜົນໄດ້ຮັບຂອງການປະເມີນຜົນ**

**[ເດືອນພຶດສະພາ ເຖິງ ເດືອນກໍລະກົດ ປີ 2008]**

**ນັບແຕ່ເດືອນພຶດສະພາ ເຖິງ ເດືອນກໍລະກົດ ປີ 2008**, PCAP 2 ຈະປະເມີນຜົນຂະບວນການ OJT ດັ່ງທີ່ກ່າວໄວ້ຂ້າງເທິງ ຄືດັ່ງທີ່ ຜົນໄດ້ຮັບຂອງ OJT, ຕົວຢ່າງ ແຜນງົບປະມານປະຈຳປີຂອງ PIP, ແລະ ຜົນໄດ້ ຮັບຂອງການປະເມີນຜົນຂອງແຕ່ລະໂຄງການຂອງ PIP, ການຕິດຕາມ ແລະ ການປະເມີນຜົນ. ເພື່ອໃຫ້ມີຄວາມແນ່ນອນກ່ວາເກົ່າແລ້ວ, PCAP 2 ຈະປະເມີນຄວາມສາມາດຂອງພະນັກງານວິຊາການ MPI ເພື່ອປະຕິບັດ ວຽກງານຂອງເຂົາເຈົ້າ ໂດຍນຳໃຊ້ວິທີການຕ່າງໆ ເຊັ່ນວ່າ ການສັງເກດ, ການສຳພາດ ແລະ ການໃຊ້ຄຳຖາມ ເພື່ອເຮັດບົດສຳຫຼວດໃນໄລຍະ ຫຼື ຫຼັງ OJT. PCAP 2 ຍັງຈະປະເມີນເບິ່ງວ່າໄດ້ມີການນຳໃຊ້ ປຶ້ມຄູ່ມືແນະນຳ ຫຼື ລະບົບຕົວຈິງຄືແນວໃດແດ່. ນອກຈາກນັ້ນ ການປະເມີນຜົນແບບ meta ເຊິ່ງແມ່ນການປະ ເມີນຜົນຂອງແຕ່ ລະໂຄງການແບບເອກະລາດ, ການຕິດຕາມ ແລະ ການປະເມີນຜົນ ໂດຍ MPI ແລະ 3 ແຂວງທີ່ຕິດຕາມຂອງ PCAP ກໍ່ຈະຖືກດຳເນີນ. ໂດຍອີງຕາມຜົນໄດ້ຮັບຈາກການປະເມີນຜົນແລ້ວ PCAP 2 ຈະປັບປຸງເນື້ອໃນຂອງ ການຝຶກອົບຮົມ ແລະ OJT ເຊັ່ນດຽວກັນກັບເຄື່ອງມືຂອງການຄຸ້ມຄອງ PIP.

**(5)-3 ການປະກອບຄຳເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນຂອງ OJT ໃຫ້ແກ່ 3 ແຂວງທີ່ຕິດຕາມຂອງ PCAP [ເດືອນສິງຫາ 2008]**

PCAP 2 ຈະປະກອບຄຳເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນທີ່ໄດ້ກ່າວຂ້າງເທິງ ໃຫ້ແກ່ 3 ແຂວງທີ່ຕິດຕາມ. ໂດຍສະເພາະກ່ວານັ້ນແລ້ວ ຈະມີວິຊາການປະມານ 3 ຄົນຈາກ MPIDOP ແລະ MPIDOE ພ້ອມດ້ວຍຊ່ຽວຊານ 2 ທ່ານ ຈະລົງໄປເຮັດວຽກຢູ່ 3 ແຂວງ ແລະ ຈະເຊີນວິຊາການຂອງ DPI 20 ຄົນ ແລະ ເຈົ້າຂອງໂຄງການ (POs). ຈະຈັດກອງປະຊຸມວິຊາການຂຶ້ນເພື່ອ ແລກປ່ຽນຜົນໄດ້ຮັບຂອງການປະເມີນຜົນ meta ແລະ ຈະປຶກສາ ຫາລືວ່າ ມີອັນໃດແນ່ທີ່ຕ້ອງ ໄດ້ປັບ ປຸງໃນປີຕໍ່ໄປ. ການປຶກສາຫາລືໃນກອງປະຊຸມວິຊາການ ຈະເປັນການງ່າຍໃຫ້ ແກ່ຜູ້ທີ່ເຂົ້າຮ່ວມ ເພື່ອທີ່ຈະເວົ້າອອກມາ ແລະ ແລກປ່ຽນຄວາມຄິດຢ່າງຈິງໃຈຂອງຕົນຕໍ່ກັບບັນຫາຕ່າງໆແລະ ເຄື່ອງມືທີ່ຕ້ອງການໃຫ້ປັບປຸງ.

**(5)-4 ການພັດທະນາວິຊາທີ່ນຳໃຊ້ເຂົ້າໃນການຝຶກອົບຮົມໃນປີຕໍ່ໄປ** [ເດືອນກໍລະກົດ ເຖິງເດືອນສິງຫາ 2008]

ໂດຍອີງຕາມການປຶກສາຫາລືກັບວິຊາການຂັ້ນແຂວງ PCAP 2 ຈະພັດທະນາການຝຶກອົບຮົມ ແລະ ວິຊາຂອງ OJT ແລະເນື້ອໃນສຳລັບປີຕໍ່ໄປ. ຍຸດທະສາດໃນການເຜີຍແຜ່ສຳລັບການຝຶກອົບຮົມ ພາກທີ I ໃນປີທີ 2 ແມ່ນ ຈະສຸມໃສ່ຂະຫຍາຍເຂດປົກຄຸມຂອງລະບົບການຄຸ້ມຄອງ PIP ໄປທົ່ວທຸກກະຊວງ ແລະແຂວງ. ຕົວຢ່າງ ວິຊາການຂອງ MPIDOP ແລະ MOIDOE ຜູ້ທີ່ມີໜ້າທີ່ຮັບຜິດຊອບໃນຂົງເຂດວຽກງານທີ່ແນ່ນອນໃດໜຶ່ງ ກາຍເປັນຄູຝຶກ ໃນຂົງເຂດວຽກງານຂອງຕົນ ດັ່ງນັ້ນ MPI ຈຶ່ງສາມາດເຜີຍແຜ່ການຝຶກອົບຮົມ ຫຼາຍເທົ່າທີ່ຈະ ຫຼາຍໄດ້ ໂດຍນຳໃຊ້ຊັບພະຍາກອນມະນຸດທີ່ມີຂີດຈຳກັດ.

**(5)-5 ການຝຶກອົບຮົມໃຫ້ແກ່ຄູຝຶກ (TOT) [ເດືອນກໍລະກົດ ເຖິງເດືອນສິງຫາ 2008]**

PCAP 2 ຈະດຳເນີນການຝຶກອົບຮົມໃຫ້ແກ່ຄູຝຶກ TOT ໃຫ້ແກ່ວິຊາການຂອງ MPI ໂດຍອີງຕາມວິຊາຮຽນ ທີ່ ໄດ້ພັດທະນາແລ້ວນັ້ນ ພາຍໃຕ້ຫົວຂໍ້ທັງ (4) ທີ່ໄດ້ກ່າວໄວ້ຂ້າງເທິງ. ວິຊາຮຽນທີ່ໃຊ້ໃນ TOT ນັ້ນຈະແຕກຕ່າງກັນ ແມ່ນຂຶ້ນກັບລະດັບການສ້າງຄວາມສາມາດທີ່ຄາດໄວ້ໂດຍນັກວິຊາການ(CB) ແລະ ປະສົບການໃນນາມ ເປັນຄູຝຶກ.

**(5)-6 ການຈັດຕັ້ງປະຕິບັດການຝຶກອົບຮົມພາກທີ I ການໃຫ້ແກ່ບັນດາກະຊວງ ແລະແຂວງຕ່າງໆ**

**[ເດືອນຕຸລາ 2008 ການເຖິງ ເດືອນມັງກອນ 2009]**

ການຝຶກອົບຮົມພາກທີ I ຈະຖືກດຳເນີນໃນຕົ້ນປີທີ 2 ໂດຍມີຫົວຂໍ້ວ່າ ການຂະຫຍາຍເຂດປົກຄຸມຂອງລະບົບການຄຸ້ມຄອງຂອງ PIP. ວິຊາຂອງການຝຶກອົບຮົມ ແລະ ຄູຝຶກ ກໍ່ຈະຖືກນຳໃຊ້ຢ່າງມີປະສິທິພາບ ເພື່ອເຜີຍແຜ່ ລະບົບການຄຸ້ມຄອງຂອງ PIP ໄປສູ່ທຸກແຂວງແລະກະຊວງຕ່າງໆ. ເວົ້າຄວາມຈິງແລ້ວນັກວິຊາການຂອງ MPIDOP ແລະ MOIDOE ຜູ້ທີຮັບຜິດຊອບໃນຂົງເຂດແນະນອນໃດໜຶ່ງ ຫຼື ຂະແໜງການຕ່າງໆ ຈະການເປັນ ຄູຝຶກໃນຂົງເຂດໜ້າວຽກ ຫຼື ຂະແໜງການຂອງຕົນ ເພື່ອດຳເນີນການຝຶກອົບຮົມຢ່າງມີປະສິດທິພາບ ໂດຍການ ນຳໃຊ້ຊັບພະຍາກອນທີ່ມີຂີດຈຳກັດ.

**(5)-7 ການຝຶກອົບຮົມໜ້າວຽກຕົວຈິງ OJT ຕໍ່ກັບ ກະຊວງແຜນການແລະການລົງທຶນ MPI, ແຂວງ ແລະ ກະຊວງຕ່າງໆ [ເດືອນກຸມພາ ເຖິງ ເດືອນພຶດສະພາ 2009]**

ເປົ້າໝາຍຂອງ OJT ກໍ່ເພື່ອ (i) ປະເມີນ, ຕິດຕາມ ແລະ ປະເມີນຜົນຂອງແຕ່ລະໂຄງການຂອງ PIP ໂດຍການນຳໃຊ້ທັກຊະ ແລະ ລະບົບມີໄດ້ມາຜ່ານການຝຶກອົບຮົມ, ຈາກນັ້ນ (ii) ນຳໃຊ້ຜົນໄດ້ຮັບຂອງການປະເມີນຜົນຕີ ລາຄາ, ການຕິດຕາມ ແລະ ການປະເມີນຜົນການສ້າງງົບປະມານ. ວິທີ່ທາງໜຶ່ງໃນການດຳເນີນ OJT ຄື ຄວນມີ ນັກວິຊາການ MPI ລົງໄປຂົງເຂດ ຫຼື ກະຊວງຕ່າງ ເຊິ່ງເປັນຜູ້ທີ່ຮັບຜິດຊອບຈັດຝຶກອົບຮົມ ເພື່ອສະໜັບສະໜູນ ຂະບວນການເຮັດວຽກຕົວຈິງ. ຊ່ຽວຊານ ແລະ ທີ່ປຶກສາພາຍໃນ ຈະຕິດຕາມເບິ່ງວ່າການຮຽນຮູ້ວິທີປະຕິບັດ ທີ່ໄດ້ ຈາກການຝຶກອົບຮົມ ໄດ້ຖືກນຳໃຊ້ແນວໃດ, ແລະ ໃຫ້ຄຳແນະນຳແກ່ວິທີການຂອງ OJT ໃນເມື່ອຈຳເປັນ. PCAP 2 ສະເໜີເພື່ອດຳເນີນ OJT ໃຫ້ແກ່ເຈົ້າຂອງໂຄງການຂັ້ນແຂວງ PO ແລະ ນັກວິຊາການຂອງ DPI ໃນ ເດືອນກຸມພາ 2009, ການຝຶກ OJT ສຳລັບເຈົ້າຂອງໂຄງການຂັ້ນກະຊວງ ແລະ ນັກວິຊາການ ໃນກົມແຜນການ ໃນເດືອນມີນາ ປີ 2009, ແລະ OJT ໃຫ້ແກ່ວິຊາການຂອງ MPI ໃນເດືອນເມສາ 2009.

**(5)-8 ການປະເມີນຜົນການປະເມີນແຕ່ລະໂຄງການເອກະລາດຂອງ PIP, ການຕິດຕາມ ແລະ ປະເມີນຜົນໄດ້ ຮັບ**

**[ເດືອນພຶດສະພາ ເຖິງ ເດືອນກໍລະກົດ 2009]**

ຈຸດສຸມຂອງການປະເມີນຜົນໃນປີທີ 2 ກໍ່ແມ່ນເພື່ອປະເມີນຄຸນນະພາບຂອງການປະເມີນຕີລາຄາແຕ່ລະໂຄງການ, ການຕິດຕາມ ແລະ ປະເມີນຜົນໄດ້ຮັບ. ການດຳເນີນງານນີ້ເອີ້ນວ່າ ການປະເມີນຜົນ meta. ຖ້າຜົນໄດ້ຮັບຂອງ ແຂວງ ຫຼື ກະຊວງໃດໜຶ່ງຫາກບໍເປັນທີ່ພໍໃຈໄດ້, ຄວນຕ້ອງມີການວິເຄາະເຖິງສາເຫດ ເພື່ອທີ່ຈະປັບປຸງຕື່ມ. ການປະເມີນຜົນສຸມໃສ່ການແຜນການຄຸ້ມຄອງຂະແໜງການ, ການຄຸ້ມຄອງການເງິນ ແລະ ງົບປະມານ, ການຄຸ້ມ ຄອງ ODA ແລະ ການຄຸ້ມຄອງ PIP ຢູ່ຂັ້ນເມືອງ, ໃນການຄາດຫວັງທີ່ຈະນຳໃຊ້ວິທີການຄຸ້ມຄອງທັງ 3 ຢ່າງນີ້ໃນ ການຝຶກອົບຮົມ ພາກທີ II ທີ່ມາເຖິງ.

**(5)-9 ການປະກອບຄຳເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນຂອງ OJT ໃຫ້ແກ່ ບັນດາແຂວງ ແລະ ກະຊວງ ຕ່າງໆ [ເດືອນກໍລະກົດ ເຖິງເດືອນສິງຫາ 2009]**

ນັກວິຊາການຂອງ MPI ຜູ້ທີ່ມີໜ້າທີ່ຮັບຜິດຊອບໃນການຝຶກອົບຮົມໃນຂົງເຂດ ແລະ ຂະແໜງການ ຈະເດີນ ທາງ ໄປຂົງເຂດ ແລະ ກະຊວງຂອງຕົນ ເພື່ອປະກອບຄຳຄິດເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນ. ຖ້າການດຳເນີນງານໃນແຂວງ ຫຼື ກະຊວງໃດຫາກບໍ່ເປັນທີ່ພໍໃຈ ຄວນມີການຊອກຫາເຫດຜົນ ແລະ ລົມທຽບຄືນໃສ່ແຜນການ ຂອງແຕ່ລະກິດຈຳກຳ.

**(5)-10 ການພັດທະນາວິຊາທີ່ນຳໃຊ້ເຂົ້າໃນການຝຶກອົບຮົມໃນປີຕໍ່ໄປ** [ເດືອນກໍລະກົດ ເຖິງເດືອນສິງຫາ 2009]

ໂດຍອີງຕາມຜົນໄດ້ຮັບຂອງການປະເມີນຜົນຂ້າງເທິງ PCAP 2 ຈະເພີ່ມອີງປະກອບຂອງແຜນການຄຸ້ມຄອງຂະ ແໜງການ, ການຄຸ້ມຄອງການເງິນ ແລະ ງົບປະມານ, ການຄຸ້ມຄອງ ODA ແລະ ການຄຸ້ມຄອງ PIP ຢູ່ຂັ້ນເມືອງ, ໃນການຝຶກອົບຮົມ ແລະ ວິຊາທີ່ໃຊ້ສໍາລັບການຝຶກອົບຮົມ ພາກທີ II. ຄວນເປັນທີ່ຮັບຮູ້ວ່າ PCAP 2 ແລະ MPI ຈະວາງແຜນໃຫ້ ມີ MPI ກວາມເອົາ 1/3 ຂອງມູນຄ່າການຝຶກອົບຮົມຂັ້ນແຂວງທັງໝົດ. ແຜນການຝຶກອົບຮົມ ຈະເຮັດໃຫ້ການຝຶກອົບຮົມມີຈຸດສຸມຂຶ້ນ ໂດຍສະເພາະແມ່ນສໍາລັບການຝຶກອົບຮົມໃຫ້ແກ່ອໍານາດການປົກຄອງ ທີ່ ເຫັນວ່າການດໍາເນີນງານ ທີ່ວັດແທກໄດ້ ຈາກການປະເມີນຜົນຍັງບໍ່ເປັນທີ່ໜ້າພໍໃຈ.

**(5)-11 ການຝຶກອົບຮົມ ໃຫ້ແກ່ຄູຝຶກ (TOT)** [ເດືອນກໍລະກົດ ເຖິງເດືອນສິງຫາ 2009]

PCAP 2 ຈະດໍາເນີນການຝຶກອົບຮົມ ໃຫ້ແກ່ຄູຝຶກ ແກ່ນັກວິຊາການຂອງ MPI ໂດຍອີງໃສ່ວິຊາທີ່ໄດ້ຖືກພັດທະ ນາແລ້ວ. TOT ແນໃສ່ເພື່ອໃຫ້ນັກວິຊາການຂອງ MPIDOP, MPIDOE ແລະ MPIDIC ໄດ້ທັກຊະໃນ ການວາງແຜນຄຸ້ມ ຄອງແຜນການ / ການວາງແຜນງົບປະມານ, ການຈັດຕັ້ງປະຕິບັດຕາມງົບປະມານ / ການຄຸ້ມ ຄອງ PIP ໃນລະດັບເມືອງ ແລະ ການຄຸ້ມຄອງ ODA ຕາມລໍາດັບ.

**(5)-12 ການຈັດຕັ້ງປະຕິບັດການຝຶກອົບຮົມພາກທີ II ໃຫ້ແກ່ບັນດາກະຊວງ ແລະແຂວງຕ່າງໆ**

[ເດືອນຕຸລາ 2009 ເຖິງເດືອນມັງກອນ 2010]

ການຝຶກອົບຮົມພາກທີ II ຈະຖືກຈັດຕັ້ງປະຕິບັດ ໃນຕົ້ນປີທີ 3 ພ້ອມດ້ວຍເນື້ອໃນທີ່ມີຈຸດສຸມຫຼາຍກ່ວາທີ່ເຄີຍ ຈັດມາ. ແຜນການຄຸ້ມຄອງຂະແໜງການ, ການຄຸ້ມຄອງການເງິນ ແລະ ງົບປະມານ, ການຄຸ້ມຄອງ ODA ແລະການຄຸ້ມຄອງ PIP ໃນລະດັບເມືອງ ກໍ່ຈະຖືກເພີ່ມເຕີມໃນວິຊາການຝຶກອົບຮົມ. ເຖິງແມ່ນວ່າຫຼັກສູດການຝຶກ ອົບຮົມ ຈະກວາມເອົາບັນດາຫົວຂໍ້ມັນກ້ວາງຂວາງກໍຕາມ ຈະສະໜອງແຕ່ລະວິຊາໃຫ້ແກ່ ແຕ່ລະກົມ ຫຼື ພະແນກ ຂຶ້ນກັບຄວາມຈໍາເປັນ (ອີງໃສ່ຕາຕະລາງລຸ່ມນີ້). ຄວນຮັບຮູ້ວ່າເນື້ອໃນຂອງ TOT ກໍ່ຈະຖືກລວມເຂົ້າໃນວິຊາການຝຶກອົບຮົມໃຫ້ແກ່ ນັກວິຊາການແຂວງ ດັ່ງນັ້ນເຂົາເຈົ້າຈຶ່ງສາມາດຖ່າຍທອດຄວາມຮູ້ໃຫ້ແກ່ນັກວິຊາການຂັ້ນເມືອງ ໄດ້. ເຊິ່ງແມ່ນ DPI, ບໍ່ແມ່ນ PCAP 2 ຈະເປັນຜູ້ຮັບຜິດຊອບໃນການຝຶກອົບຮົມຕົວຈິງໃຫ້ແກ່ ນັກວິຊາການ ຂັ້ນເມືອງ.

**(5)-13 ການຝຶກອົບຮົມໜ້າວຽກຕົວຈິງ OJT ໃຫ້ແກ່ ກະຊວງແຜນການແລະການລົງ ທຶນ MPI, ບັນດາແຂວງ ແລະ ກະຊວງຕ່າງໆ [ແຕ່ເດືອນ ກຸມພາ ເຖິງ ເດືອນພຶດສະພາ 2010]**

ແຕ່ເດືອນ ກຸມພາ ເຖິງ ເດືອນ ມີນາ ປີ 2010, ນັກວິຊາການ ຂອງ MPI ຈະເດີນທາງໄປຊີງ ເຂດ ຫຼື ກະຊວງທີ່ຮັບຜິດຊອບ ໃນການສະໜັບສະໜູນວຽກງານຕົວຈິງ ແລະ ຈະຕິດຕາມ ເບິ່ງ ວ່າການຮຽນຮູ້ວິທີປະຕິບັດທີ່ ໄດ້ ຈາກການຝຶກອົບຮົມ ໄດ້ ຖືກ

| ຄາດໝາຍຂອງການຝຶກອົບຮົມ / ເນື້ອໃນຂອງການຝຶກອົບຮົມ | ກະຊວງກົມແຜນການ. | ກະຊວງຂະແໜງການກົມ(PO) | ພະແນກແຜນການ DPI | ພະແນກປະເມີນຜົນ DPI | ແຂວງຂະແໜງການກົມ (PO) |
|---|---|---|---|---|---|
| ການຄຸ້ມຄອງ PIP ຂັ້ນພື້ນຖານ | ○ | ○ | ○ | ○ | ○ |
| ແຜນການຄຸ້ມຄອງຂະແໜງການ | ● | ○ | ● | ○ | ○ |
| ການຄຸ້ມຄອງການວາງແຜນງົບປະມານ | ● | ○ | ● | ○ | ○ |
| ການຄຸ້ມຄອງການຈັດຕັ້ງແຜນງົບປະມານ | ○ | ● | ○ | ● | ● |
| ການຄຸ້ມຄອງ ODA | ● | ○ | ● | ○ | ○ |
| ການຄຸ້ມຄອງ PIP ຂັ້ນເມືອງ | ○ | ○ | ● | ● | ● |

ນຳໃຊ້ແນວໃດ.

OJT ຈະຖືກດຳເນີນໃຫ້ແກ່ MPI ຈາກນັບແຕ່ເດືອນເມສາ ເຖິງເດືອນພຶດສະພາ 2010. OJT ໃນປີທີ 3 ແມ່ນ ຈະສຸມໃສ່ ແລະ ຕິດຕາມການນຳໃຊ ໃນພາກປະຕິບັດ ຂອງແຜນການຄຸ້ມຄອງຂະແໜງການ, ການຄຸ້ມຄອງງົບປະມານ ແລະ ການເງິນ, ການຄຸ້ມຄອງ ODA ແລະ ການຄຸ້ມຄອງ PIP ໃນລະດັບຂັ້ນເມືອງ.

**(5)-14 ການປະເມີນຜົນການປະເມີນແຕ່ລະໂຄງການເອກະລາດຂອງ PIP, ການຕິດຕາມ ແລະ ປະເມີນຜົນໄດ້ ຮັບ [ເດືອນພຶດສະພາ ເຖິງ ເດືອນກໍລະກົດ 2010]**

PCAP 2 ຈະປະເມີນເບິ່ງວ່າ ລະບົບການຄຸ້ມຄອງຂອງ PIP ເໝາະສົມຫຼືບໍ່ ແລະ ເບິ່ງວ່າປຶ້ມຄູ່ມືແນະນຳ ໄດ້ ຖືກນຳໃຊ້ແນວໃດໃນເວລາປະຕິບັດວຽກງານຕົວຈິງ. ການປະເມີນຜົນແມ່ນສຸມໃສ່ແຜນການຄຸ້ມຄອງຂະແໜງການ, ການຄຸ້ມຄອງງົບປະມານ ແລະ ການເງິນ, ການຄຸ້ມຄອງ ODA ແລະ ການຄຸ້ມຄອງ PIP ໃນລະດັບຂັ້ນ ເມືອງ. ການຝຶກອົບຮົມ ແລະ ວິຊາຮຽນທີ່ນຳໃຊ້ໃນການຝຶກອົບຮົມ OJT ແລະ ເຄື່ອງມືການຄຸ້ມຄອງ PIP ຈະຖືກປັບປຸງໂດຍອີງຕາມຜົນໄດ້ຮັບຂອງການປະເມີນຜົນ.

**(5)-15 ການປະກອບຄຳເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນຂອງ OJT ໃຫ້ແກ່ ບັນດາແຂວງ ແລະ ກະຊວງ ຕ່າງໆ [ເດືອນກໍລະກົດ ເຖິງເດືອນສິງຫາ 2010]**

ນັກວິຊາການຂອງ MPI ຜູ້ທີ່ມີໜ້າທີ່ຮັບຜິດຊອບໃນການຝຶກອົບຮົມໃນຂົງເຂດ ແລະ ຂະແໜງການຕ່າງໆ ຈະໄປຫາຂົງເຂດ ແລະ ກະຊວງຂອງຕົນ ເພື່ອປະກອບຄຳຄິດເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນ. ເຊິ່ງລວມມີການໃຫ້ຄຳຄິດເຫັນ ໃຫ້ແກ່ຂັ້ນ CB ຂອງນັກວິຊາການຂັ້ນແຂວງ ແລະ ກະຊວງຕາມລຳດັບ ເພື່ອພັດທະນາລະດັບ ຄວາມເຊື່ອໝັ້ນໃຫ້ແກ່ເຂົາເຈົ້າ.

**(5)-16 ການພັດທະນາວິຊາທີ່ນຳໃຊ້ເຂົ້າໃນການຝຶກອົບຮົມໃນປີຕໍ່ໄປ** [ເດືອນກໍລະກົດ ເຖິງເດືອນສິງຫາ **2010]**

ໂດຍອີງຕາມຜົນໄດ້ຮັບຂອງການປະເມີນຜົນຂ້າງເທິງ PCAP 2 ຈະປັບປຸງວິຊາທີ່ນຳໃຊ້ໃນການຝຶກອົບຮົມ ພາກທີ III. PCAP 2 ແລະ MPI ວາງແຜນເພື່ອໃຫ້ມີ MPI ເຖິງ 2/3 ຂອງມູນຄ່າຝຶກອົບຮົມຂັ້ນແຂວງທັງໝົດ. ເຖິງຢ່າງໃດກໍ່ຕາມອັດຕາການນຳໃຊ້ຮ່ວມຕົວເລກສຸດທ້າຍ ຈະຂຶ້ນກັບການປຶກສາຫາລືລະຫວ່າງ ອົງການ JICA ແລະ MPI. PCAP 2 ຈະຖ່າຍທອດໝົດການຮັບຮູ້ວິທີປະຕິບັດຂອງບົດຮຽນອັນສອດຄ່ອງກັນໃນການຝຶກອົບຮົມ ແລະ ການຄຸ້ມຄອງເນື້ອໃນ ໃຫ້ແກ່ MPI ເພື່ອທີ່ວ່າ MPI ສາມາດສ້າງຄວາມຍືນຍົງຂອງການຝຶກອົບຮົມດ້ວຍ ຕົວເອງພາຍຫຼັງທີ່ PCAP 2 ຊຶ້ນສຸດລົງ. MPI ແລະ PCAP 2 ຈະປຶກສາຫາລື ແລະ ສ້າງແຜນການຝຶກອົບຮົມແບບຄວາມຍືນຍົງ ຢ່າງສົມເຫດສົມຜົນທາງດ້ານວິຊາການ ແລະ ງົບປະມານການເງິນ.

**(5)-17 ການຝຶກອົບຮົມ ໃຫ້ແກ່ຄູຝຶກ (TOT) [ເດືອນກໍລະກົດ ເຖິງເດືອນສິງຫາ 2010]**

PCAP 2 ຈະຈັດຕັ້ງປະຕິບັດ TOT ໃຫ້ແກ່ນັກວິຊາການຂອງ MPI ໂດຍອີງຕາມຫຼັກວິຊາທີ່ໄດ້ພັດທະນາແລ້ວ. ວິຊາທີ່ນຳໃຊ້ໃນ TOT ຈະຖືກຖ່າຍທອດໄດ້ດີແມ່ນຂຶ້ນກັບລະດັບການສ້າງຄວາມສາມາດຂອງນັກວິຊາການ (CB) ແລະ ປະສົມການຂອງຄູຝຶກ.

**(5)-18 ການຈັດຕັ້ງປະຕິບັດການຝຶກອົບຮົມພາກທີ III ໃຫ້ແກ່ບັນດາກະຊວງ ແລະແຂວງຕ່າງໆ [ເດືອນຕຸລາ 2010 ເຖິງເດືອນມັງກອນ 2011]**

ການຝຶກອົບຮົມພາກທີ III ເຊິ່ງແມ່ນການຝຶກອົບຮົມຄັ້ງສຸດທ້າຍໃນະໄລຍະຂອງໂຄງການ ແລະຈະຖືກຈັດຕັ້ງປະ ຕິບັດໃນຕົ້ນປີທີ 4 ທີ່ມີຈຸດປະສົງໃນການເຜີຍແຜ່ເນື້ອໃນຂອງການຝຶກອົບຮົມທີ່ໄດ້ຜ່ານ ການປັບປຸງແລ້ວໃນທົ່ວປະເທດ. ແຜນການຄຸ້ມຄອງຂະແໜງການ, ການຄຸ້ມຄອງການເງິນ ແລະ ງົບປະມານ, ການຄຸ້ມຄອງ ODA ແລະການຄຸ້ມຄອງ PIP ໃນລະດັບເມືອງ ກໍ່ຈະຖືກປັບປຸງໃນຕໍ່ໜ້າ ແລະ ເພີ້ມເຂົ້າໃນບັນດາວິຊາຂອງການຝຶກ ອົບຮົມ. ການນຳພາຂອງ MPI ຈະມີຄວາມຈຳເປັນ ເພື່ອທີ່ຈະຂະຫຍາຍລະບົບການຄຸ້ມຄອງ PIP ໃນທົ່ວປະເທດ ໃນ 1 ປີເຄິ່ງ, ຈາກນັ້ນກໍ່ປັບປຸງຄຸນນະພາບ ໃນອີກ 2 ປີຕໍ່ໄປ. ດັ່ງນັ້ນ PCAP 2 ຈະນຳໃຊ້ ການຮຽນຮູ້ເຖິງວິທີການ ປະຕິບັດ ທີ່ໄດ້ມາໂດຍຜ່ານ PCAP, ເຊັ່ນລະບົບແຕ່ເທິງລົງລຸ່ມ ທີ່ທ່ານລັດທະມົນຕີ MPI ກ່າວເຖິງການປຶກລະ ດົມຊຸກຍູ້ ໃນພິທີເປີດການຝຶກອົບຮົມ, ແລະ ສ້າງບຸກຄະລາກອນຕົ້ນຕໍ ໃນຂັ້ນແຂວງ ແລະ ກະຊວງຕ່າງໆ ເພື່ອ ຍົກສູງຄວາມສຳຄັນຂອງບັນດາກິດຈະກຳ.

### (5)-19 ການຝຶກອົບຮົມໜ້າວຽກຕົວຈິງ OJT ຕໍ່ກັບ ກະຊວງແຜນການແລະການລົງທຶນ MPI, ແຂວງ ແລະ ກະຊວງຕ່າງໆ [ເດືອນກຸມພາ ເຖິງ ເດືອນພຶດສະພາ 2011]

PCAP 2 ຈະດຳເນີນ OJT ໃຫ້ແກ່ MPI, ແຂວງ ແລະ ກະຊວງຕ່າງໆ ໂດຍອີງຕາມວິທີການຂອງ OJT ໂດຍອີງໃສ່ໝວດທີ (13) ຂ້າງເທິງນັ້ນ.

### (5)-20 ການປະເມີນຜົນການປະເມີນແຕ່ລະໂຄງການເອກະລາດຂອງ PIP, ການຕິດຕາມ ແລະ ປະເມີນຜົນໄດ້ ຮັບ [ເດືອນພຶດສະພາ ເຖິງ ເດືອນກໍລະກົດ 2011]

PCAP 2 ຈະປະກອບຄຳຄິດເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນ ໃຫ້ແກ່ບັນດາແຂວງ ແລະ ກະຊວງ ໂດຍອີງຕາມວິທີການປະເມີນຜົນ ທີ່ໄດ້ກ່າວໄວ້ໃນໝວດທີ 5-(15) ຂ້າງເທິງນັ້ນ.

### (5)-21 ການປະກອບຄຳເຫັນຕໍ່ຜົນໄດ້ຮັບຂອງການປະເມີນຜົນຂອງ OJT ໃຫ້ແກ່ ບັນດາແຂວງ ແລະ ກະຊວງ ຕ່າງໆ [ເດືອນກໍລະກົດ ເຖິງເດືອນສິງຫາ 2011]

ການປະກອບຄຳຄິດເຫັນຄັ້ງນີ້ ຈະເປັນເທື່ອສຸດທ້າຍຝຶກຫັດຄັ້ງສຸດທ້າຍໃນໄລຍະຂອງໂຄງການ. ບົດສະຫຼຸບຂອງ ການປະເມີນຜົນຈາກ ປີທີ 1 ເຖິງປີທີ 4 ຈະຈັດຂຶ້ນຢູ່ແຂວງ ແລະ ກະຊວງຕ່າງໆ ດັ່ງນັ້ນພວກເຂົາຈິ່ງສາມາດນຳໃຊ້ຜົນໄດ້ຮັບຈາກການປະເມີນຜົນ ເພື່ອສ້າງແຜນກິດຈະກຳອັນຍືນຍົງພາຍຫຼັງທີ່ PCAP 2 ຊີ້ນສຸດລົງ. PCAP 2 ຈະນຳໃຊ້ສາຍພົວພັນໃນການເຮັດວຽກອັນດີ ກັບນັກວິຊາການຂັ້ນແຂວງ ແລະ MPI ໂດຍອີງຕາມຄວາມເຊື່ອ ໝັ້ນອັນເປັນທີ່ນັບຖື ແລະ ການສະໜອງທຶນໃນປະຈຸບັນ, ຫຼື ສ້າງລະບົບການສະໜອງທຶນອັນໃໝ່ ເພື່ອທີ່ຈະຮັກສາລະບົບຂອງ MPI ພັດທະນາຄວາມສາ ມາດໃນການແກ້ໄຂບັນຫາໃນອະນາຄົດ.

## (6) ບັນດາກິດຈະກຳສຳລັບ ການຄຸ້ມຄອງງົບປະມານ ແລະ ການເງິນ ຂອງໂຄງການລົງທຶນລັດ.[ໝາກຜົນ 2]

ບັນດາກິດຈະກຳ ທີ່ພົວພັນເຖິງ ໝາກຜົນ 2 ມີ 2 ອົງປະກອບຫຼັກດ້ວຍກັນ; 1) ພັດທະນາວິທີການ, ເຄື່ອງມື ແລະ ວາລະການຝຶກອົບຮົມ ສຳລັ*ບການແບ່ງປັນງົບປະມານການລົງທຶນລັດ* ແລະ 2) ພັດທະນາວິທີການ, ເຄື່ອງມື ແລະ ວາລະການຝຶກອົບຮົມສຳລັບ*ການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານໃຫ້ແກ່ໂຄງການລົງທຶນລັດ.* ກ່ອນເດືອນ ກັນຍາ 2009, ຮ່າງສະບັບທຳອິດຂອງບັນດາວິທີການ ແລະ ເຄື່ອງມື ຂອງແຕ່ລະອົງປະກອບ ຈະຕ້ອງສຳເລັດ ແລະ ຖືກລວມໄວ້ຢູ່ໃນພາກໃດໜຶ່ງທີ່ເໝາະສົມຂອງ ຄູ່ມື/ປື້ມແນະນຳ. ວາລະການຝຶກອົບຮົມຂອງແຕ່ລະອົງປະກອບ ຈະຖືກລວມຢູ່ໃນຊຸດທີ 2 ຂອງແຜນການຝຶກອົບຮົມ,

ເຊິ່ງຈະຈັດຂຶ້ນນັບແຕ່ເດືອນ ທັນວາ 2009.

ການສຶກສາ ແລະ ກອງປະຊຸມປຶກສາຫາລືກ່ຽວກັບການທົດສອບການນຳໃຊ້ ຈະດຳເນີນໄປພ້ອມໆກັບການຝຶກ ອົບຮົມ. ບັນດາວິທີການ ແລະ ເຄື່ອງມື ແລະວາລະການຝຶກອົບຮົມ ຈະມີການດັດແກ້ ຂຶ້ນຢູ່ກັບຄວາມຈຳເປັນ ອີງໃສ່ຄຳຄິດເຫັນຄຳເຫັນທີ່ໄດ້ຮັບຈາກບຸກຄົນທີ່ກ່ຽວຂ້ອງ ຜ່ານການສຶກສາ ແລະ ການຈັດກອງປະຊຸມປຶກສາ ຫາລື.

ຕໍ່ໄປນີ້ ແມ່ນ ການອະທິບາຍເຖິງ ທິດທາງຂອງການພັດທະນາ ແລະ ບັນດາກິດຈະກຳຂອງມັນ ສຳລັບ 2 ອົງປະກອບຕາມລຳດັບ .

**1)** ການຈັດສັນງົບປະມານ PIP

PCAP2 ຈະພັດທະນາຂັ້ນຕອນມາດຖານຕະຖານ ແລະວິທີການ ຂອງການຈັດສັນງົບປະມານ PIP ລະຫວ່າງບັນດາຂະແໜງການຕ່າງໆ ແລະເຂດຕ່າງໆ. ມາດຕະຖານນີ້ຈະຊ່ວຍສະໜັບສະໜູນບັນດາໜ້າທີ່ຂອງ MPI-DoP, ຕະຫຼອດຮອດບັນດາຂະແໜງການ ຢູ່ໃນບັນດາອົງການຈັດຕັ້ງລັດຂັ້ນສູນກາງ ແລະບັນດາແຂວງ. ການພົວພັນໂດຍທາງອ້ອມກ່ຽວກັບການຈັດສັນງົບປະມານທີ່ເຮັດຂໍ້ມູນຮ່ວມກັນກັບ ກະຊວງການເງິນ (MoF). ສະນັ້ນ, ການພົວພັນຢ່າງໃກ້ສິດກັບກະຊວງການເງິນ ເພື່ອການພັດທະນາ ແລະຂັ້ນຕອນການຝຶກອົບຮົບແມ່ນມີຄວາມຈຳເປັນ. ວິທີການ ແລະຂັ້ນຕອນການປັງປຸງຈະຖືກສະແດງຢູ່ ສະບັບປັບປຸງໃໝ່ ຂອງປຶ້ມຄູ່ມືແຜນງານ, ແລະ ຢູ່ໃນ ບົນບົດແນະນຳສຳລັບບັນດາອົງການຈັດຕັ້ງ ທີ່ຕ້ອງການການຈັດສັນງົບປະມານ ເພື່ອການຈັດຕັ້ງປະຕິບັດວຽກ.

ກ່ອນອື່ນໝົດ, ຕ້ອງສຶກສາວິທີການ ແລະຂັ້ນຕອນມາດຕະຖານທີ່ມີຢູ່ປະຈຸບັນ, ລວມທັງບັນດາປະເດັນຕາງໆທີ່ພົວພັນເຖິງ. ວິທີການ ແລະຂັ້ນຕອນມາດຕະຖານທີ່ໄດ້ປັບປຸງຂຶ້ນ ຈາກນັ້ນຈະຖືກພິຈາລະນາ. PCAP2 ຈະໄດ້ບັນທຶກບັນດາມາດຕະຖານທີ່ມີຢູ່ ແລະພະຍາຍາມໃຊ້ມັນຖ້າວ່າຈຳເປັນ, ສະນັ້ນການປັນປຸງວິທີການໃໝ່ໂດຍຜ່ານວິທີການທີ່ມີຢູ່ແມ່ນສາມາດເຮັດໄດ້. ຍ້ອນວ່າ MPI-DoP ແມ່ນເປັນຜູ້ຮັບຜິດຊອບໃນການຈັດສັນງົບປະມານ PIP, ການຈັດຕັ້ງການຝຶກອົບຮົມໃຫ້ແກ່ພະນັກງານ MPI-DoP ທີ່ມີທ່າແຮງທາງດ້ານເປັນຄູຝຶກ. ບັນດາກິດຈະກຳລຸ່ມນີ້ແມ່ນຖືກດຳເນີນສຳລັບ ການຈັດສັນງົບປະມານ PIP.

**1)-1 ການສຶກສາເຖິງລະບົບການແບ່ງປັນງົບປະມານການລົງທຶນລັດທີ່ເປັນຢູ່ໃນປະຈຸບັນ[ມິຖຸນາ-ສິງຫາ 2008]**

ການສຶກສາເຖິງສະພາບການເປັນຢູ່ໃນປະຈຸບັນຂອງການແບ່ງປັນງົບປະມານໃຫ້ແກ່ການລົງທຶນລັດ ລວມທັງກອບວຽກທາງກົດໝາຍຂອງມັນ ແລະ ບົດແນະນຳຂອງລັດຖະບານ. ນອກນັ້ນຍັງຈະໄດ້ສຶກສາເຖິງຂັ້ນຕອນຢູ່ພາຍໃນກະຊວງແຜນການ ແລະ ການລົງທຶນ ແລະ ການປະສານສົມທົບກັບກະຊວງການເງິນ.

**1)-2 ການວິເຄາະເຖິງປະເດັນທີ່ເປັນຢູ່ໃນປະຈຸບັນໃນວຽກງານການແບ່ງປັນງົບປະມານໃຫ້ແກ່ໂຄງການລົງທຶນລັດ [ຕຸລາ-ທັນວາ 2008]**

ວິເຄາະປະເດັນໃນປະຈຸບັນ ຈາກ 1)-1 ສຶກສາຜົນໄດ້ຮັບລວມທັງອົງການຈັດຕັ້ງທີ່ຮັບຜິດຊອບຂອງມັນ.

**1)-3 ການພັດທະນາມາດຖານທີ່ໄດ້ດັດແກ້ແລ້ວ ແລະ ການສັງລວມເຂົ້າໃນຄູ່ມື/ປຶ້ມແນະນຳ [ມິຖຸນາ-ກໍລະກົດ 2009]**

ພັດທະນາຂັ້ນຕອນ ແລະ ວິທີການທີ່ເປັນມາດຕະຖານທີ່ໄດ້ດັດແກ້ແລ້ວ ອີງໃສ່ຜົນໄດ້ຮັບຈາກ 1)-2. ມາດຖານທີ່ໄດ້ດັດແກ້ແລ້ວ ຈະໄດ້ຖືກສັງລວມເຂົ້າໄປໃນແຕ່ລະພາກຕາມລຳດັບໃນຄູ່ມື/ປື້ມແນະນຳ.

**1)-4 ພັດທະນາບັນດາເນື້ອໃນຂອງການຝຶກອົບຮົມ [ກໍລະກົດ-ສິງຫາ 2009]**

ພັດທະນາເນື້ອໃນຂອງການຝຶກອົບຮົມ ອີງໃສ່ຂັ້ນຕອນ ແລະ ວິທີການທີ່ເປັນມາດຖານທີ່ໄດ້ດັດແກ້ແລ້ວ. ວາລະການຝຶກອົບຮົມ ຈະໄດ້ດຳເນີນໃນໄລຍະເວລາ ແຕ່ເດືອນ ຕຸລາ ຫາ ທັນວາ
2009 ຂຶ້ນຢູ່ກັບແຜນການຝຶກອົບຮົມດັ່ງທີ່ໄດ້ພັດ ທະນາຢູ່ໃນກິດຈະກຳ(5)-10.

**1)-5 ຝຶກອົບຮົມໃຫ້ແກ່ຄູຝຶກ [ກໍລະກົດ-ສິງຫາ 2009]**

ອີງໃສ່ເນື້ອໃນຂອງການຝຶກອົບຮົມທີ່ໄດ້ພັດທະນາແລ້ວ ຝຶກໃຫ້ແກ່ພະນັກງານທີ່ໄດ້ຄັດເລືອກໄວ້ ຂອງກົມແຜນການ ກະຊວງແຜນການ ແລະ ການລົງທຶນ.

**1)-6 ທົດສອບການນຳໃຊ້ມາດຖານທີ່ໄດ້ດັດແກ້ແລ້ວ [ມິຖຸນາ-ສິງຫາ 2010]**

ທົດສອບການນຳໃຊ້ຂັ້ນຕອນ ແລະ ວິທີການທີ່ໄດ້ດັດແກ້ແລ້ວຜ່ານການສຶກສາ ແລະ ການຈັດກອງປະຊຸມປຶກສາຫາລື. ຖ້າເຫັນວ່າຈຳເປັນມີການປ່ຽນແປງ, ຈະໄດ້ລວມພວກມັນເຂົ້າໃນຄູ່ມື/ປື້ມແນະນຳສະບັບຫຼ້າສຸດ.

**1)-7 ການທົດສອບການຝຶກອົບຮົມ [ຕຸລາ-ທັນວາ 2010]**

ທົດສອບນຳໃຊ້ ເນື້ອໃນຂອງການຝຶກອົບຮົມ ຜ່ານການສັງເກດເບິ່ງການຝຶກອົບຮົມ ແລະ ຜົນຂອງການປະ ເມີນຜົນການຝຶກອົບຮົມ. ດັດແກ້ເນື້ອໃນຂອງການຝຶກອົບຮົມຖ້າເຫັນວ່າຈຳເປັນ

**2) ການຄຸ້ມຄອງການເງິນ ແລະ ການເບີກຈ່າຍງົບປະມານໃຫ້ແກ່ໂຄງການລົງທຶນລັດ**

PCAP2 ຈະພັດທະນາ ຂັ້ນຕອນການປະຕິບັດວຽກງານທີ່ໄດ້ມາດຕະຖານແລະ ວິທີຂອງ ການເບີກຈ່າຍງົບປະມານ sound ການຄຸ້ມຄອງວຽກງານການເງິນໃຫ້ກັບແຕ່ລະໂຄງການຂອງ PIP. ມາດຕະຖານນີ້ຈະຊ່ວຍສະໜັບສະໜຸນໜ້າທີ່ຂອງ MPIDoE ໄປຄຽງຄູ່ກັບຂະແໜງການຕິດຕາມແລະປະເມີນຜົນທີ່ສັງກັດຢູ່ໃນອົງການຈັດຕັ້ງລັດຖະບານຂັ້ນສູນກາງ ແລະ ບັນດາ ແຂວງຕ່າງໆ. ການໃຊ້ຈ່າຍງົບປະມານມີການພົວພັນ ໂດຍກົງກັບການແລກປ່ຽນຂໍ້ມູນກັນລະຫວ່າງ MoF ແລະພະແນກ ການເງິນແຂວງ (DoF). ດັ່ງນັ້ນ, ການປະສານງານຢ່າງໃກ້ຊິດຕິດແທດຈຶ່ງເປັນບາດກ້າວທີ່ສຳຄັນເພື່ອການພັດທະນາ a sound ແລະມາດຕະຖານວຽກງານ. ຂັ້ນຕອນ ແລະ ວິທີການທີ່ໄດ້ປັບປຸງໃໝ່ຈະເປັນຜົນສະທ້ອນຕົ້ນຕໍຕໍ່ການປັບປຸງປຶ້ມ ຄູ່ມືໂຄງການແລະປຶ້ມຄູ່ມືສຳລັບອົງການຈັດຕັ້ງຕ່າງໆ.
ເຊິ່ງມັນເປັນສິ່ງທີ່ຈຳ ເປັນໃນວຽກງານຄຸ້ມຄອງການເງິນ ແລະ ການ ໃຊ້ຈ່າຍງົບປະມານໂຄງການ ຂອງPIP.

PCAP ໄດ້ແນະນຳ ວິທີການໃຊ້ຈ່າຍເງິນໂຄງການ PIP ໂດຍອີງໃສ່ ***ບົດລາຍງານ ເຄິ່ງໄຕມາດ ຂອງໂຄງການ PIP.*** ຢ່າງໃດກໍ່ຕາມ, ວິທີການໃນປະຈຸບັນນີ້ແມ່ນຕ້ອງການຂໍ້ມູນຈາກເຈົ້າຂອງໂຄງການເທົ່ານັ້ນ, ສາເຫດອາດຈະກໍ່ໃຫ້ເກີດຄວາມບໍ່ດຸ່ນດ່ຽງຈາກການໃຊ້ຈ່າຍເງິນທັງໝົດເຊິ່ງເປັນຜົນມາຈາກ DoF. PCAP2 ພະຍາຍາມທີ່ຈະພັດທະນາຂັ້ນຕອນ ແລະ ລະບົບການປະຕິບັດວຽກງານເຊິ່ງເຮັດໃຫ້ສາມາດ ແລກປ່ຽນຂໍ້ມູນໃນການໃຊ້ຈ່າຍເງິນແລະການຂຶ້ນແຜນງົບ

ປະມານຂອງ PIP ເຊິ່ງມີຜົນລະຫວ່າງ DPI ແລະ DOF ເພື່ອເປັນການຫຼີກລ້ຽງຄວາມຜິດດ່ຽງກັນລະຫວ່າງການຂຶ້ນງົບປະມານ ແລະ ການໃຊ້ຈ່າຍເງິນຕົວຈິງ.ເຊິ່ງມັນອາດຈະຊ່ວຍໃນການປ້ອງກັນການໃຊ້ຈ່າຍເງິນເກີນງົບປະມານຂອງ PIP ການກະທຳທີ່ບໍ່ ຊື່ສັດຕ່າງໆ.

ບາດກ້າວທຳອິດ, ຂັ້ນຕອນອັນເປັນມາດຖານ ແລະ ວິທີການໃນປະຈຸບັນ ຂອງການຄຸ້ມຄອງການເບີກຈ່າຍຂອງໂຄງການ PIP ຈະຕ້ອງໄດ້ຮັບການສຶກສາຄົ້ນຄ້ວາ, ໄປຄຽງຄູ່ກັບການນຳໃຊ້ **ບົດລາຍງານປະຈຳໃຕມາດໂຄງ ການ PIP**. ພາຍຫຼັງທີ່ ໄດ້ມີການວິເຄາະເນື້ອຫາຕ່າງໆໃນປະຈຸາບັນແລ້ວ,ຈາກນັ້ນລະບົບແລະຂະບວນການທີ່ໄດ້ມາດຕະຖານອັນໃໝ່ຈະຕ້ອງໄດ້ຖືກຜິດຈະລະນາຄົ້ນຄ້ວາ. PCAP2 ຈະຮ່ວມກັບມືກັບ DPI ແລະ DoF, ຢ່າງໃກ້ສິດ ເພື່ອຮັບປະກັນວ່າ: ລະບົບໃໝ່ນີ້ ແມ່ນເປັນປະໂຫຍດຕໍ່ທັງສອງກ້ຳສອງຝ່າຍ. ຖ້າຫາກວ່າ MPI-DoE ເປັນອົງການຈັດຕັ້ງທີ່ມີຄວາມຮັບຜິດຊອບໃນການ ຕິດຕາມໂຄງການ PIP ໃນວຽກງານທົ່ວໄປ, ການຈັດຝຶກອົບຮົມໃຫ້ກັບຄູຝຶກທີ່ມີຄວາມເໝາະສົມ ແມ່ນຈະດຳເນີນໃຫ້ແກ່ ພະນັກງານ MPI DoE ເປັນຕົ້ນຕໍ. ບັນດາກິດຈະກຳດັ່ງຕໍ່ໄປນີ້ ແມ່ນຖືກດຳເນີນເພື່ອການເບີກຈ່າຍງົບປະມານໂຄງການ PIP ແລະ ວຽກງານການຄຸ້ມຄອງການເງິນ.

**2)-1 ການສຶກສາຄົ້ນຄ້ວາ ການໃຊ້ຈ່າຍເງິນໂຄງການ PIP ແລະ ການຄຸ້ມຄອງການເງິນໃນປະຈຸບັນ (ມິຖຸນາ - ສິງຫາ 2008)**

ສຶກສາຄົ້ນຄ້ວາສະພາບການໃນປະຈຸບັນຂອງການເບີກຈ່າຍໃນໂຄງການPIP ແລະ ສະພາບການ**ຄຸ້ມຄອງ**ວຽກງານການ ເງິນ, ລວມທັງໂຄງຮ່າງການປະຕິບັດວຽກງານທີ່ຖືກຕ້ອງຕາມກົດໝາຍແລະແນວທາງຂອງລັດຖະບານ. ຂະບວນການເບີກ ຈ່າຍຂອງໂຄງການ PIP ພາຍໃນ DPI, PO ແລະ DoF ມີຄວາມຈຳເປັນຕ້ອງໄດ້ຮັບການສຶກສາຢ່າງໃກ້ຊິດ, ພ້ອມທັງສຶກ ສາຄົ້ນຄ້ວາການນຳໃຊ້ບົດລາຍງານປະຈຳໃຕມາດຕ່າງໆຂອງ PIP ເຊິ່ງ PCAP ໄດ້ແນະນຳ. ການສຶກສາຄົ້ນຄ້ວາຈະຕ້ອງ ໄດ້ດຳເນີນໄປໃນ ບັນດາແຂວງ ທີ່ມີການຕິດຕາມຂອງ PCAP.

**2)-2 ການວິເຄາະເນື້ອຫາປະຈຸບັນ ໃນການຈັດສັນງົບປະມານຂອງ PIP (ຕຸລາ - ທັນວາ 2008)**

ວິເຄາະເນື້ອຫາໃນປະຈຸບັນຈາກ 1)-1 ສຶກສາຜົນໄດ້ຮັບຕ່າງໆ. ເນັ້ນໜັກ ເປັນພິເສດໃສ່ສາຍພົວພັນລະຫ່ວາງອົງການຈັດ ຕັ້ງຕ່າງໆແລະ ການເຄື່ອນໃຫວວຽກງານ ໃນປະຈຸບັນທີ່ພົວພັນເຖິງການເບີກຈ່າຍຂອງ PIP.

**2)-3 ການພັດທະນາ ມາດຕະຖານທີ່ໄດ້ຮັບການທົບທວນຄືນແລະ ຜົນສະທ້ອນຂອງມັນໃນການສ້າງ ຄູ່ມື/ປຶ້ມຄູ່ມືອື່ນໆ (ມິຖຸນາ - ກໍລະກົດ 2009)**

ພັດທະນາຂະບວນການທີ່ໄດ້ມາດຕະຖານທີ່ຖືກທົບທວນຄືນແລະລະບົບໂດຍອີງໃສ່ 2)-2. ຜົນໄດ້ຮັບ, ມາດຖານທີ່ໄດ້ຮັບ ການທົບທວນຄືນອາດຈະມີຜົນສະທ້ອນໃນແຕ່ລະຂະແໜງການຕາມລຳດັບໃນ **ຄູ່ມື/ປຶ້ມຄູ່ມື**

**2)-4 ການພັດທະນາຂອງເນື້ອຫາການຝຶກອົບຮົມ(ກໍລະກົດ - ສິງຫາ 2009)**

ພັດທະນາ**ເນື້ອຫາການຝຶກອົບຮົມໂດຍອີງໃສ່ແບບແຜນແລະຂະບວນການທີ່ໄດ້ມາດຕະຖານທີ່ໄດ້ຮັບການທົບທວນ.** ສະ ໃໝວາລະຂອງການຝຶກອົບຮົມຈະດຳເນີນໄປໃນໄລຍະເດືອນຕຸລາ - ທັນວາ 2009 ໂດຍອີງໃສ່ແຜນການໆຝຶກອົບ

ຮົມ ດັ່ງ ໄດ້ພັດທະນາໃນກິດຈະກຳ (5)10.

**2)-5 ການຝຶກອົບຮົມໃຫ້ກັບຄູເຝິກ (ມີຖຸນາ - ກໍລະກົດ 2009)**

ໂດຍອີງໃສ່ເນື້ອຫາຂອງການຝຶກອົບຮົມທີ່ໄດ້ຮັບການພັດທະນາແລ້ວ, ຝຶກອົບຮົມໃຫ້ກັບພະນັກງານທີ່ໄດ້ຮັບການຄັດເລືອກ ໃນ MPI DoE.

**2)-6 ການຊີ້ແຈ່ງມາດຖານທີ່ໄດ້ຮັບການທົບທວນແລ້ວ(ມີຖຸນາ - ກໍລະກົດ 2010]**

**ຊີ້ແຈງວິທີການ** ແລະຂັ້ນຕອນປະຕິບັດວຽກງານທີ່ໄດ້ຮັບການທົບທວນແລ້ວໂດຍຜ່ານການສຶກສາຄົ້ນຄ້ວາ ແລະ ຈັດຝຶກ ອົບຮົມ. ເມື່ອຈຳເປັນມີການປ່ຽນແປງຈະຕ້ອງໄດ້ລະບຸລົງໃນຄູ່ມື/ປື້ມຄູ່ມືສະບັບລ້າສຸດ.

**2)-7 ການຊີ້ແຈງການຝຶກອົບຮົມ (ຕຸລາ - ທັນວາ 2010]**

**ຊີ້ແຈງ**ເນື້ອຫາການຝຶກອົບຮົມ ໂດຍຜ່ານການສັງເກດການຝຶກອົບຮົມແລະຜົນຂອງການປະເມີນຜົນການຝຶກອົບຮົມ. ທົບ ທວນເນື້ອຫາຂອງການຝຶກອົບຮົມຖ້າຈຳເປັນ.

**(7) ບັນດາກິດຈະກຳການສະໜັບສະໜູນທີ່ປຶກສາດ້ານກົດໝາຍການຄຸ້ມຄອງ PIP (ຜົນໄດ້ຮັບ 3)**

PCAP2 ຈະສືບຕໍ່ໃຫ້ການສະໜັບສະໜຸນ ທາງດ້ານການອອກຄຳສັ່ງກົດໝາຍຄຸ້ມຄອງ PIP. MPI ໃນປະຈຸບັນນີ້ກຳລັງ ປັບປຸງກົດໝາຍໃໝ່ເຊິ່ງຄາດວ່າ ຈະໄດ້ຮັບການອະນຸມັດຂັ້ນສຸດທ້າຍຈາກສະພາແຫ່ງຊາດໃນເດືອນພະຈິກ 2008.
PCAP2 ຈະຈັດຫາຄຳປຶກສາທາງດ້ານວິຊາການເພື່ອຮັບປະກັນທາງດ້ານເນື້ອໃນກົດໝາຍໃຫ້ສອດຄ່ອງກັບຂັ້ນຕອນ ແລະ ວິທີການປະຕິບັດວຽກງານທີ່ PCAP ແລະ PCAP2 ໄດ້ພັດທະນາ. ໃນນາມເປັນພາກສ່ວນສະໜັບສະໜູນທາງດ້ານວິຊາ ການ, ໄດ້ວາງແຜນການຈັດຝຶກອົບຮົມປະເທດທີສາມໃຫ້ແກ່ປະເທດຫວຽດນາມ ໂດຍມີຈຸດປະສົງເພື່ອໃຫ້ມີຄວາມເຂົ້າໃຈ ໂຄງຮ່າງທາງດ້ານກົດໝາຍແລະຂະບວນການສ້າງຕັ້ງ. ເນື້ອຫາຂອງແຜນການຝຶກອົບຮົມປະເທດທີສາມໄດ້ຖືກຄັດຕິດມາ ໃນ ເອກະສານຊ້ອນທ້າຍ XX.

ບັນດາກິດຈະກຳສຳລັບການສະໜັບສະໜຸນກົດໝາຍຄຸ້ມຄອງ PIP ມີດັ່ງຕໍ່ໄປນີ້;

**(7)-1 ທີ່ປຶກສາກ່ຽວກັບການຮ່າງກົດໝາຍຄຸ້ມຄອງ PIP ໃນປະຈຸບັນນີ້ (ເມສາ - ມີຖຸນາ, 2008)**

ສຶກສາຄົ້ນຄ້ວາການຮ່າງກົດໝາຍຄຸ້ມຄອງ PIP ແລະ ຈັດຫາຄຳແນະນຳໃຫ້ແກ່ກຸ່ມດຳເນີນວຽກງານກົດໝາຍຄຸມຄອງ PIP ໃນ MPI-DoE. ຄຳແນະນຳຈະຕ້ອງອີງໃສ່ປະສົບປະການຂອງຊາວຍີ່ປຸ່ນ ແລະຈະຕ້ອງໃຫ້ຖືກຕ້ອງກັບວິທີການ ແລະ ຂັ້ນ ຕອນໃນການພັດທະນາໂດຍຜ່ານ PCAP ແລະ PCAP2.

**(7)-2 ການຝຶກອົບຮົມປະເທດທີສາມຢູ່ທີ່ປະເທດຫວຽດນາມ (ກໍລະກົດ 2008)**

ດຳເນີນການຝຶກອົບຮົມປະເທດທີສາມຢູ່ທີ່ຮ່າໂນຍ,ປະເທດຫວຽດນາມ. ເປົ້າໝາຍຂອງການຝຶກອົບຮົມແມ່ນເພື່ອໃຫ້ໄດ້ມາ ເຊິ່ງຄວາມຮູ້ໃນຂະບວນການຄຸ້ມຄອງ PIPໃນປະເທດຫວຽດນາມ, ລວມທັງໂຄງຮ່າງການປະຕິບັດວຽກງານທີ່ຖືກຕ້ອງຕາມ ກົດໝາຍ. ການຝຶກອົບຮົມລວມທັງການປຶກສາຫາລືກັບກະຊວງແຜນການແລະການລົງທຶນໃນ ປະເທດຫວຽດນາມ.

**(7)-3 ການປຶກສາຫາລືທີ່ຕໍ່ເນື່ອງໃນການປັບປຸງກົດໝາຍຄຸ້ມຄອງ PIP ໃນປະຈຸບັນ (ຕຸລາ - ພະຈິກ 2008)**

ສືບຕໍ່ໃຫ້ຄຳແນະນຳຕໍ່ກຸ່ມປະຕິບັດວຽກງານກົດໝາຍຄຸ້ມຄອງPIP PIP ຕາມທັດສະນະການອະນຸມັດຂອງກອງປະຊຸມສະ ພາແຫ່ງຊາດໃນເດືອນພຶດສະພາ.

**(7)-4 ທີ່ປຶກສາກ່ຽວກັບການ ອອກຄຳຮ້ອງບັນດາຂໍ້ຕົກລົງ/ກົດລະບຽບການຕ່າງໆ(ທັນວາ 2008 )**

ຈັດຫາ**ທີ່ປຶກສາກ່ຽວກັບການ ອອກບັນດາຂໍ້ຕົກລົງ/ກົດລະບຽບການຕ່າງໆ** ກ່ຽວກັບ**ຄຳຮ້ອງກົດໝາຍຄຸ້ມຄອງ** PIP ໃຫ້ແກ່ ກຸ່ມປະຕິບັດວຽກງານຕາມຄວາມຈຳເປັນ.

**(7)-5 ການຕິດຕາມຂໍ້ບັງຄັບກົດໝາຍຄຸ້ມຄອງ PIP (ທັນວາ 2008)**

ຕິດຕາມທັງກົດໝາຍການຄຸ້ມຄອງ PIP ແລະ**ຄຳຮ້ອງບັນດາຂໍ້ຕົກລົງ/ກົດລະບຽບການຕ່າງໆ** ໃຫ້ປະຕິບັດຢ່າງຖືກຕ້ອງ ແລະ ລາຍງານຜົນໄດ້ຮັບໃຫ້ກັບ MPI ເພື່ອ ຊອກຫາມາດຕະການແກ້ໃຂໃນເວລາທີ່ມີເລື່ອງເກີດຂຶ້ນ.

**(8) ກິດຈະກຳຕ່າງໆສຳລັບການປັບປຸງວິທີການການຄຸ້ມຄອງ PIP (ຜົນທີ່ໄດ້ຮັບຈາກຂໍ້ 4]**

ກິດຈະກຳທີ່ກ່ຽວຂ້ອງກັບ**ຜົນທີ່ໄດ້ຮັບຈາກຂໍ້** 4 ມີ 3 ອົງປະກອບ. 1) ເພື່ອພັດທະນາວິທີການ, ເຄື່ອງມືແລະສະໃໝວາລະ ການຝຶກອົບຮົມສຳລັບ ***ການຄຸ້ມຄອງກອງທຶນສົມທົບຂອງ ODA,*** 2) ເພື່ອພັດທະນາວິທີການ, ເຄື່ອງມືແລະສະໃໝວາລະການຝຶກອົບຮົມສຳລັບ ການຄຸ້ມຄອງ ***PIP ລະດັບຂັ້ນເມືອງ*** ແລະ 3) ເພື່ອພັດທະນາວິທີການ, ເຄື່ອງມືແລະສະໃໝວາລະ ການເຝີກອົບຮົມສຳລັບ ***ການຄຸ້ມຄອງໂຄງການ***. ໃນລະຫວ່າງ ເດືອນກໍລະກົດ 2009, ການປັບປຸງແບບແຜນ ແລະ ເຄື່ອງ ມືສຳລັບແຕ່ລະອົງປະກອບອາດຈະສຳເລັດແລະຈະຖືກພິຈະລະນາໃນແຕ່ລະໝວດຢ່າງ ເໝາະສົມໃນຄູ່ມື/ປື້ມຄູ່ມືຕ່າງໆ.
ສະໃໝວາລະການປະຊຸມຂອງແຕ່ລະອົງປະກອບລວມທັງເນື້ອໃນສະລະອັນດັບທີສອງຂອງໂຄງການຝຶກອົບຮົມເຊິ່ງຈະໄດ້ດຳເນີນການຈາກເດືອນ ຕຸລາ 2009.

ການຊີ້ແຈ້ງການສຶກສາຄົ້ນຄ້ວາແລະການສຳມະນາແມ່ນຈະໄດ້ດຳເນີນການໄປຄຽງຄູ່ກັບການຝຶກອົບຮົມ. ວິທີການ, ເຄື່ອງ ມືແລະສະໃໝວາລະການຝຶກອົບຮົມແມ່ນຈະຕ້ອງໄດ້ຖືກທົບທວນຕາມຄວາມຈຳເປັນ
ໂດຍອີງໃສ່ຂໍ້ມູນທີ່ໄດ້ຮັບໂດຍຜ່ານ ການສຶກສາຄົ້ນຄ້ວາແລະສຳມະນາຕ່າງໆ.

ຄຳອະທິບາຍຕໍ່ໄປນີ້ແມ່ນທິດທາງການພັດທະນາແລະກິດຈະກຳຕ່າງໆ ສຳລັບອົງປະກອບ 3 ຢ່າງ ໂດຍລຽງຕາມລຳ

ດັບ.

**1) ການຄຸ້ມຄອງກອງທຶນສົມທົບຂອງ ODA.**

PCAP2 ຈະພັດທະນາວິທີການແລະຂັ້ນຕອນການປະຕິບັດວຽກງານທີ່ໄດ້ມາດຕະຖານສຳລັບການຄັດເລືອກ ແລະຈັດສັນ ງົບປະມານພາຍໃນ PIPເຊັ່ນດຽວກັບກອງທຶນຊ່ວຍເຫຼືອຈາກລັດຖະບານ(ອຸດໜຸນລາຄາພາຍໃນ) ສຳລັບໂຄງການ ODA.

ບາດກ້າວທຳອິດ, ວິທີການແລະຂັ້ນຕອນການປະຕິບັດວຽກງານທີ່ໄດ້ມາດຖານໃນປະຈຸບັນຂອງການຄຸ້ມຄອງ ໂຄງການ ODA ແມ່ນຈະຕ້ອງໄດ້ຮັບການສຶກສາຄົ້ນຄ້ວາໄປຄຽງຄູ່ກັບແບບແຜນຂອງການຈັດສັນທຶນສົມທົບຈາກ ລັດຖາບານຈາກງົບ ປະມານ PIP ພາຍໃນ. PCAP2 ຈະສຶກສາຄົ້ນຄ້ວາລະບົບໃນປະຈຸບັນນີ້ວ່າ MPI-DIC ດຳເນີນການເພື່ອຄຸ້ມຄອງ ໂຄງ ການ ODA. ທັງນີ້ກໍ່ເພື່ອລຶກລ້ຽງລະບົບຕ່າງໆທີ່ຊ້ຳກັນອັນບໍ່ເປັນປະໂຫຍດແລະແບບ ແຜນຕ່າງໆທີ່ນຳໃຊ້ໃນປະ ຈຸບັນນີ້ໃນ DoP/DoE ແລະ DIC.

ແບບແຜນຂອງການຄຸ້ມຄອງກອງທຶນສົມທົບຂອງ ODA ແລະການຈັດສັນງົບປະມານ ຈະຕ້ອງເປັນເອກະລາດຈາກ ການ ຄຸ້ມຄອງໂຄງການ PIP ພາຍໃນແລະການຈັດສັນງົບປະມານຈາກເຫດຜົນດັ່ງຕໍ່ໄປນີ້.

ການນຳສະເໜີທິດທາງຂອງລັດຖາບານບົ່ງບອກເຖິງທຶນຊ່ວຍເຫຼືອຂອງ ODA ຈຳຕ້ອງມີບຸລິມະສິດສູງກ່ວາການຈັດ ສັນຖ້າທຽບໃສ່ງົບປະມານໂຄງການ PIP ພາຍໃນ. ຢ່າງໃດກໍ່ຕາມ ຖ້າຫາກວ່າ ງົບປະມານທີ່ໄດ້ມາຈາກແຫລ່ງດຽວກັນ ໃນງົບປະ ມານ PIP ພາຍໃນ. ມັນກໍ່ເປັນເລື່ອງຍາກທີ່ຈະຊອກຫາຄວາມດຸ່ນດ່ຽງບູລິມະສິດອັນເໝາະສົມ ລະຫວ່າງ ໂຄງການ PIP ພາຍໃນ ແລະ ກອງ ທຶນສົມທົບຈາກ ODA. ພ້ອມກັນນັ້ນ ບັນດາໂຄງການ ODA ສ່ວນຫຼາຍ ແມ່ນມີ ການແຕ່ງຕັ້ງລະບົບ ການປະເມີນຜົນແລະຕິດຕາມກວດກາແລະສາມາດຮັບປະກັນໃຫ້ເກີດປະໂຫຍດຢ່າງ ແທ້ຈິງ ທີ່ສາມາດ ຄາດຫັວງຜົນໄດ້. ດັ່ງນັ້ນມັນຈຶ່ງເປັນການຍາກທີ່ຈະປຽບທຽບໂດຍຕົງໃສ່ກັບໂຄງການ PIP ພາຍໃນ. ເມື່ອພິດຈາລະນາໃນບັນຫານີ້ແລ້ວມັນ ເປັນເລື່ອງທີ່ຈຳເປັນທີ່ຈະຕ້ອງແຍກປະເພດຂອງການຈັດສັນສຳລັບທຶນສົມທົບ ຈາກລັດຖະບານແລະໂຄງການ PIP ພາຍ ໃນ.

ຖ້າຫາກວ່າ MPI-DIC ຮັບຜິດຊອບຕໍ່ ການດູແລໂຄງການ ODA, ການຝຶກອົບຮົມ ສຳລັບຄູເຝິກທີ່ມີຄວາມສາມາດ ບົ່ງ ຊ້ອນຈະຕ້ອງດຳເນີນດການໃຫ້ກັບພະນັກງານ MPIDIC ເປັນສ່ວນໃຫ່ຍ.

ບັນດາກິດຈະກຳດັ່ງຕໍ່ໄປນີ້ ແມ່ນຖືກດຳເນີນໄປສຳລັບການຄຸ້ມຄອງກອງທຶນສົມທົບຈາກ ODA.

**1)-1 ການສຶກສາຄົ້ນຄ້ວາການຄຸ້ມຄອງໂຄງການ ODA ໃນປະຈຸບັນ (ມີນາ - ກໍລະກົດ 2008)**

ສຶກສາສະຖານນະການໃນປະຈຸບັນຂອງການຄຸ້ມຄອງໂຄງການລວມທັງແບບແຜນການຈັດສັນງົບປະມານສຳລັບທຶນສົ ມທົບຂອງລັດຖະບານ. ສຶກສາການເຄື່ອນໄຫວຂອງຂະບວນການຕ່າງໆແລະອົງການຈັດຕັ້ງທີ່ມີຄວາມຮັບຜິດຊອບ ຕໍ່ແຕ່ລະ ບາດກ້າວ. ພ້ອມທັງສຶກສາສະຖານນະການ ຄຸ້ມຄອງໃນປະຈະບັນຂອງໂຄງການ ODA ໃນພື້ນທີ່ໂຄງ ການແລະອົງການ ຈັດຕັ້ງຂັ້ນແຂວງ.

**1)-2 ການວິເຄາະເນື້ອຫາໃນປະຈຸບັນສຳລັບການ**ຄຸ້ມຄອງ**ກອງທຶນສົມທົບຂອງ ODA**

(ຕຸລາ - ທັນວາ 2008]

ວິເຄາະເນື້ອຫາໃນປະຈຸບັນທີ່ກ່ຽວພັນກັບການຄຸ້ມຄອງກອງທຶນລົມທົບຂອງ ODA ຈາກ 1)1 ສຶກສາຜົນໄດ້ຮັບ. ເນັ້ນໜັກ ເປັນພິເສດສຳລັບການວິເຄາະອົງການຈັດຕັ້ງສາກົນແລະການສຳພາດຜູ້ໃຫ້ຂໍ້ມູນຫຼັກ, ເພື່ອກຳແໜ້ນເນື້ອຫາຄວາມເຂົ້າໃຈ ທີ່ພົວພັນກັບວຽກງານການຄຸ້ມຄອງ.

**1)-3 ການພັດທະນາແບບແຜນແລະພິຈະລະນາລະບຸລົງໃນຄູ່ມືແລະປື້ມຄູ່ມືຕ່າງໆ.**
**(ມິຖຸນາ - ກໍລະກົດ 2009]**

ພັດທະນາແບບແຜນໂດຍອີງໃສ່ 1)-2 ຜົນໄດ້ຮັບ. ແບບແຜນຕ່າງໆອາດຈະຖືກພິຈາລະນາໃນຂະແໜງ ການຕໍ່ໄປ ຕາມລຳ ດັບໃນ**ຄູ່ມື/ປື້ມຄູ່ມື**. ຖ້າຫາກວ່າມີຄວາມຕ້ອງການໃນການປຶກສາຫາລືລະຫວ່າງຜູ້ໃຫ້ທຶນ ຫຼື ກະຊວງການຕ່າງປະເທດ, ຈະ ຕ້ອງໄດ້ວາງແຜນແລະດຳເນີນການໂດຍການຮ່ວມມືຈາກ MPI ແລະ JICA.

**1)-4 ການພັດທະນາເນື້ອຫາຂອງການຝຶກອົບຮົມ (ກໍລະກົດ - ສິງຫາ 2009]**

**ພັດທະນາເນື້ອຫາຂອງການຝຶກອົບຮົມໂດຍອີງໃສ່ວິທີການອັນ**ໃໝ່. ສະໃໝວາລະການຝຶກອົບຮົມຈະ ຕ້ອງໄດ້ດຳເນີນການ ລະຫວ່າງເດືອນຕຸລາ ຫາ ເດືອນທັນວາ 2009 ໂດຍອີງໃສ່ແຜນການຝຶກອົບຮົມທີ່ໄດ້ພັດທະນາແລ້ວໃນກິດຈະກຳ (5)-10.

**1)-5 ການຝຶກອົບຮົມຄູຝຶກ (ກໍລະກົດ - ສິງຫາ 2009)**

ຝຶກອົບຮົມພະນັກງານທີ່ໄດ້ຮັບການຄັດເລືອກແລ້ວ ໃນ MPI-DIC ໂດຍອີງໃສ່ເນື້ອຫາການຝຶກອົບຮົມທີ່ໄດ້ຮັບການພັດ ທະນາແລ້ວ.

**1)-6 ການຊີ້ແຈ່ງແບບແຜນຕ່າງໆ (ມິຖຸນາ - ກໍລະກົດ 2010]**

**ຊີ້ແຈ່ງວິທີການ**ທີ່ໄດ້ຮັບການພັດທະນາອັນໃໝ່ໂດຍຜ່ານການສຶກສາແລະສຳມະນາ.ເມື່ອຈຳເປັນມີການປ່ຽນແປງທີ່ຈຳເປັນຈະຕ້ອງໄດ້ມີການລະບຸລົງໃນຄູ່ມື/ປື້ມຄູ່ມືຕ່າງໆໃນສະບັບສຸດທ້າຍ.

**1)-7 ການຊີ້ແຈ່ງເຫດຜົນຂອງການຝຶກອົບຮົມ(ຕຸລາ - ທັນວາ 2010]**

**ຊີ້ແຈ່ງເຫດຜົນ**ຂອງເນື້ອຫາການຝຶກອົບຮົມໂດຍຜ່ານການສັງເກດການເຝິກອົບຮົມແລະຜົນຂອງການປະເມີນຜົນການເຝິກອົບຮົມ. ທົບທວນເນື້ອຫາຂອງການຝຶກອົບຮົມຖ້າຈຳເປັນ.

**1)-8 ການຝຶກອົບຮົມປະເທດທີສາມທີ່ປະເທດຫວຽດນາມ (ພະຈິກ 2010)**

ຈັດຕັ້ງການຝຶກອົບຮົມປະເທດທີສາມຢູ່ທີ່ປະເທດຫວຽດນາມ. ວັດຖຸປະສົງຂອງສະໃໝວາລະການຝຶກອົບຮົມແມ່ນ

ເພື່ອໃຫ້ ໄດ້ມາເຊິ່ງຄວາມຮູ້ໃນຂະບວນການຄຸ້ມຄອງໂຄງການ ODA ລວມທັງການຈັດຫາແຫຼ່ງທຶນສິນທຶບຂອງລັດຖະບານຢູ່ໃນປະ ເທດຫວຽດນາມ. ການຝຶກອົບຮົມລວມທັງການປຶກສາຫາລືກັບກະຊວງແຜນການ ແລະ ການລົງທືນໃນປະເທດຫວຽດນາມ ແລະ ການສັງເກດໂຄງການ ODA.

**1)-9 ການທົດສອບການດຳເນີນການຝຶກອົບຮົມ [ຕຸລາ - ທັນວາ 2010]**

ການທົດສອບເນື້ອໃນຂອງການຝຶກອົບຮົມຜ່ານການສັງເກດເບິ່ງການຝຶກອົບຮົມ
ແລະ ຜົນຂອງການປະເມີນຜົນການຝຶກອົບຮົມ. ດັດແກ້ເນື້ອໃນຂອງການຝຶກອົບຮົມຖ້າເຫັນວ່າຈຳເປັນ.

## 2) ການຄຸ້ມຄອງ PIP ຢູ່ຂັ້ນເມືອງ

PCAP2 ຈະພັດທະນາຂະບວນການທີ່ໄດ້ມາດຕະຖານລວມທັງວິທີການແລະເຄື່ອງມືສຳລັບການຄຸ້ມຄອງPIPໃນລະດັບຂັ້ນເມືອງ.

DPI ແມ່ນມີຄວາມຮັບຜິດຊອບຢ່າງປະຖົມປະຖານໃນການຄຸ້ມຄອງໂຄງການ PIP ໃນລະດັບຂັ້ນເມືອງ.
ຢ່າງໃດກໍ່ຕາມ ເນື່ອງຈາກວ່າ ໂຄງການ PIP ເກືອບທັງໝົດ ແມ່ນຍັງອ່ອນນ້ອຍແລະມີຂໍ້ມູນສຳລັບໂຄງການບໍ່ຫຼາຍແລະປັດໃຈອື່ນໆຂອງ ມັນອີກດ້ວຍໂດຍສະເພາະແລ້ວແມ່ນຕົວເລກສະຕິໆ. ມັນເປັນເລື່ອງຍາກທີ່ຈະເຮັດໃຫ້ບົດລາຍງານໃນປະຈຸບັນນີ້ສຳເລັດ ຜົນແລະໃບປະເມີນຜົນຊຶ່ງມັນຕ້ອງການຂໍ້ມູນເພີ່ມເຕີມອີກເພື່ອຕອບສະໜອງຜົນທີ່ໄດ້ຮັບ. ດັ່ງນັ້ນ PCAP2 ມີຄວາມພະ ຍາຍາມ ທີ່ຈະພັດທະນາບົດລາຍງານຂັ້ນເມືອງ, ເພື່ອເຮັດໃຫ້ມັນສຳເລັດຜົນດ້ວຍຂໍ້ມູນທີ່ມີຈຳກັດ. ສ່ວນ DPI, PCAP2 ຈະສືບຕໍ່ພັດທະນາໃບປະເມີນຜົນເຊິ່ງໃຫ້ສອດຄ່ອງກັບເງື່ອນໄຂທີ່ຈຳກັດ, ແຕ່ຍັງສາມາດຕອບສະໜອບຜົນຂອງການປະ ເມີນຜົນໄດ້ຢ່າງເປັນທີ່ໜ້າພໍໃຈ.

PCAP2 ຍັງຈະໄດ້ສືບຕໍ່ພັດທະນາອຸປະກອນວຽກງານການຝຶກອົບຮົມສຳລັບການຄຸ້ມຄອງ PIP ລະດັບເມືອງ. ອຸປະກອນວຽກງານນີ້ແມ່ນມີຄວາມໝາຍສຳລັບ DPI ເຊິ່ງມີວັດຖຸປະສົງໃນການຕອບສະໜອງການຝຶກອົບຮົມລະດັບຂັ້ນເມືອງ. PCAP2 ຈະບໍ່ດຳເນີນການເຝິກອົບຮົມໂດຍກົງໃຫ້ກັບລະດັບເມືອງຫຼາຍກ່ວາການດຳເນີນການຝຶກອົບຮົມໃຫ້ກັບຂະບວນ ການຝຶກໃຫ້ກັບຄູຝຶກຂອງພະນັກງານ DPI. ກໍ່ສ້າງແບບແຜນການນຳໃຊ້ອຸປະກອນການເຝິກອົບຮົມ.

ກິດຈະກຳດັ່ງຕໍ່ໄປນີ້ແມ່ນຈະໄດ້ຖືກດຳເນີນການໃນວຽກງານຄຸ້ມຄອງ PIP ລະດັບຂັ້ນເມືອງ

**2)-1 ການສຶກສາຄົ້ນຄ້ວາການເຄື່ອນໃຫວວຽກງານແລະລະດັບຄວາມສາມາດໃນຫ້ອງການແຜນການ ແລະສະຖິຕິເມືອງ. (ມິຖຸນາ - ທັນວາ 2008)**

ສຶກສາຄົ້ນຄ້ວາບາດກ້າວຂອງໜ້າວຽກພາຍໃນລະຫ່ວາງ DPI ແລະຫ້ອງການແຜນການແລະສະຖິຕິເມືອງ(DPSO), ພ້ອມ ທັງລະດັບຄວາມສາມາດຂອງພະນັກງານໂດຍການສຳພາດແລະຕັ້ງຄຳຖາມ. ການສຶກສາຄົ້ນຄ້ວາຄວນດຳເນີນໄປໃນບັນດາແຂວງທີ່ມີການຕິດຕາມວຽກງານ PCAP (ອຸດົມໄຊ,ຄຳມວນ ແລະສາລະວັນ).

**2)-2 ການວິເຄາະ ການກຳນົດເຂດທີ່ເໝາະສົມລະຫວ່າງ DPI ແລະ DPSO (ກຸມພາ – ພຶດສະພາ 2009]**

ໂດຍອີງໃສ່ 2)1 ຜົນໄດ້ຮັບ, ວິເຄາະປະເພດຂອງ **ການກຳນົດເຂດ**ທີ່ອຸດົມສົມບູນ ຂອງແຕ່ລະໜ້າທີ່ລະຫວ່າງ DPI ແລະ DPSO. ຈັດການປຶກສາຫາລືລະຫ່ວາງ MPI, DPI ແລະ DPSO ເພື່ອວ່າຈະໄດ້ມີ ຄວາມເປັນເອກະພາບກັນ ໃນການປັບ ປຸງກຳນົດເຂດ.

**2)-3 ການພັດທະນາວິທີການແລະເຄື່ອງມືແລະຜົນສະທ້ອນຂອງມັນທີ່ຈະຂຽນລົງໃສ່ຄູ່ມື/ປື້ຄູ່ມືຕ່າງໆ (ພຶດສະພາ -ສິງຫາ 2009)**

ພັດທະນາວິທີການຄຸ້ມຄອງ PIP ລະດັບຂັ້ນເມືອງໂດຍອີງໃສ່ 2)2 ຜົນໄດ້ຮັບ. ພວກມັນອາດຈະມີຜົນສະທ້ອນໃນ ໝວດ ທີ່ລຽງຕໍ່ໄປຕາມລຳດັບໃນຄູ່ມື/ປື້ມຄູ່ມື, ລວມທັງປື້ມຄູ່ມືທີ່ມີການກວດແກ້ໃໝ່ ***"ປື້ມຄູ່ມືຄຸ້ມຄອງ PIP ສຳລັບພະນັກງານ ລະດັບຂັ້ນເມືອງ"***.

**2)-4 ການພັດທະນາອຸປະກອນການເຝິກອົບຮົມແລະອົງປະກອບຂອງ TOT (ກໍລະກົດ -ສິງຫາ 2009)**

ພັດທະນາອຸປະການເຝິກອົບຮົມເພື່ອຈຸດມຸ້ງໝາຍສຳລັບ DPI ພ້ອມວັດຖຸປະສົງໃນການດຳເນີນຫຼັງສູດການຝຶກ ອົບຮົມລະ ດັບຂັ້ນເມືອງໃນແຕ່ລະແຂວງຕາມລຳດັບ. ອົງປະກອບ TOT ຍັງໄດ້ຮັບການພັດທະນາການຝຶກອົບຮົມສຳ ລັບພະນັກງານ DPI ໃນການນຳໃຊ້ອຸປະກອນການຝຶກອົບຮົມ. ສະໃໝວາລະການຝຶກອົບຮົມຈະຕ້ອງໄດ້ດຳເນີນໄປ ໃນລະຫວ່າງເດືອນ ຕຸລາ-ເດືອນທັນວາ 2009 ໂດຍອີງໃສ່ແຜນການຝຶກອົບຮົມທີ່ໄດ້ຮັບການພັດທະນາແລ້ວໃນກິດ ຈະກຳ (5)10.

**2)-5 ການຝຶກອົບຮົມໃຫ້ກັບຄູເຝິກ ໃນ MPI-DoE (ກໍລະກົດ - ສິງຫາ 2009)**

ໂດຍອີງໃສ່ການພັດທະນາອົງປະກອບ TOT ສຳລັບ DPI, ຝຶກອົບຮົມພະນັກງານທີ່ໄດ້ຮັບການຄັດເລືອກແລ້ວໃນ MPI-DoE.

**2)-6 ການຊີ້ແຈ່ງຂັ້ນຕອນ, ວິທີການ, ເຄື່ອງມື ແລະການຝຶກອົບຮົມ (ຕຸລາ 2009 – ມິຖຸນາ 2011]**

ຊີ້ແຈ່ງກຽວກັບຂັ້ນຕອນ, ວິທີການໃໝ່ ແລະເຄື່ອງມືອຸປະກອນໃຫ້ສາມາດຮັບໃຊ້ວຽກງານໄດ້. ເມື່ອມີການຂະ ຫຍາຍເພີ່ມເຕີມ ມັນມີຄວາມຈຳເປັນທີ່ຈະຕ້ອງລະບຸລົງໃສ່ໃນຄູ່ມື/ປື້ມຄູ່ມືໃນສະບັບສຸດທ້າຍ. ສຳລັບການຝຶກອົບຮົມ ຈະຕ້ອງໄດ້ຊີ້ແຈງ ເຖິງການນຳໃຊ້ອຸປະກອນການຝຶກອົບຮົມແລະການຝຶກອົບຮົມຈະຕ້ອງໄດ້ດຳເນີນໃຫ້ກັບເມືອງ ຕ່າງໆແລະຈະຕ້ອງໄດ້ລະບຸເຖິງການປ່ຽນແປງຖ້າຈຳເປັນ.

**3) ການຄຸ້ມຄອງແຜນງານ**

ວຽກງານຫຼັກຂອງການຄຸ້ມຄອງແຜນງານຫຼືການພັດທະນາຂະແໜງໂຄງການແມ່ນການສຶກສາຄວາມເປັນໄປໄດ້ເພື່ອ

ໃຫ້ເໝາະສົມກັບການຄຸ້ມຄອງໂຄງການເຊິ່ງ PCAP ໄດ້ພັດທະນາມາແລ້ວ.ແຜນປະຕິບັດວຽກງານຂອງ PIP ແມ່ນໄດ້ ຮັບການ ປະກາດໂດຍ GOL. ດັ່ງນັ້ນການສຶກສາຄວນຈະສຸມໃສ່ແບບແຜນການຊີ້ແຈ່ງວິທີການຄຸມຄອງໂຄງການ PCAP ແລະ ເຄື່ອງມືໃຫ້ກັບ 11 ໂຄງການແລະ 111 ໂຄງການພາກພື້ນເຊິ່ງ ປະກອບໃຫ້ເປັນແຜນການປະຕິບັດວຽກງານ.

ຖ້າຫາກວ່າແຜນການປະຕິບັດວຽກງານ PIP ຫາກສົມທົບກັນຢ່າງແໜ້ນແຟ້ນກັບແຜນການ 5 ປີ ແລ້ວ, ການນຳສະເໜີ ແຜນການຢ່າງເຕັມສ່ວນຂອງ "ໂຄງການປະຕິບັດວຽກງານ PIP " ອາດຈະເປັນແຜນການ 5 ປີຕໍ່ໄປ (2011-2015).

ຫຼັງຈາກທີ່ໄດ້ມີການຄົ້ນຄວ້າເນື້ອຫາແຜນການປະຕິບັດວຽກງານ, ໂຄງການທົດລອງ/ໂຄງການພາກພື້ນກໍ່ຈະໄດ້ຮັບການຄັດເລືອກແລະຈະໄດ້ນຳສະເໜີແຜນການຄຸ້ມຄອງ PCAP ແລະ ເຄື່ອງມື ເພື່ອຈັດຕັ້ງໝວດໂຄງການຕົວແບບ. ເຄື່ອງມືເຊັ່ນວ່າ:ແຜນທີ່ສະແດງໃຫ້ເຫັນວັດຖຸປະສົງຂອງໂຄງການ (POT), ແຜນທີ່ເພື່ອການຄຳນວນເວລາແລະແຜນ ວາດຈະຕ້ອງໄດ້ຮັບການທົດສອບເບິ່ງວ່າພວກມັນເໝາະສົມກັບໂຄງການ / ໂຄງ ການພາກພື້ນຫຼືບໍ່. ການຂະຫຍາຍຕໍ່ເຕີມຫຼືການປ່ຽນແປງຈະຕ້ອງໄດ້ຮັບການພິດຈະລະນາເມື່ອມີຄວາມຈຳເປັນ.

ຖ້າຫາກວ່າ MPI-DoP ມີຄວາມຮັບຜິດຊອບດູແລຕໍ່ແຜນການ 5 ປີແລະແຜນການປະຕິບັດວຽກງານແລ້ວ, ການຝຶກອົບ ຮົມສຳລັບຄູຝຶກທີ່ມີຖ່າແຮງບົ່ງຊ້ອນອາດຈະດຳເນີນໃຫ້ແກ່ພະນັກງານ MPI-DoPເປັນສວ່ນໃຫ່ຍ.

ບັນດາກິດຈະກຳລຸ່ມນີ້ແມ່ນຈະດຳເນີນສຳລັບການຄຸ້ມຄອງແຜນງານ.

**3)-1** ທົບທວນຄືນແຜນການດຳເນີນງານ **[ເມສາ-ພຶດສະພາ 2008]**

ເກັບກຳຂໍ້ມູນທີ່ພົວພັນເຖິງແຜນການດຳເນີນງານ. ສຶກສາບັນດາຂໍ້ມູນກ່ຽວກັບການດຳເນີນງານຢູ່ໃນບັນດາອົງ ການຈັດຕັ້ງລັດຖະບານ, ຊອກບັນດາອົງການຮ່ວມມືທີ່ເປັນໄປໄດ້ ເພື່ອຈັດກອງປະຊຸມວິຊາການກ່ຽວກັບການພັດທະນາ ແຜນງານຕົວແບບ.

**3)-2** ການກະກຽມສຳລັບຮ່າງແຜນງານຕົວແບບ **[ເມສາ-ສິງຫາ 2008]**

ວິເຄາະທ່າແຮງແຜນງານຕົວແບບທີ່ໄດ້ຖືກຄັດເລືອກຢູ່ໃນ 3)1. ເກັບກຳຂໍ້ມູນກ່ຽວກັບຂໍ້ມູນໂຄງການ PIP ທີ່ພົວພັນເຖິງແຜນງານຕົວແບບ.

**3)-3** ການຮ່າງແຜນງານຕົວແບບ **[ຕຸລາ-ທັນວາ 2008]**

ຮ່າງແຜນງານຕົວແບບເປັນປື້ມຄູ່ມືແຜນງານເພື່ອເປັນຫຼັກຖານອ້າງອີງ. ສຶກສາບັນດາປະເດັນຕ່າງໆໃນຂັ້ນຕອນການ

ຮ່າງ, ແລະກະກຽມສຳລັບການປັບປຸງ ບັນດາເນື້ອໃນປື້ມຄູ່ມືແຜນງານ ຖ້າມີຄວາມຈຳເປັນ.

**3)-4** ວິເຄາະທ່າແຮງແຜນງານຕົວແບບທີ່ໄດ້ຖືກຄັດເລືອກຢູ່ໃນ 3)1. ເກັບກຳຂໍ້ມູນກ່ຽວກັບຂໍ້ມູນໂຄງການ PIP ທີ່ພົວພັນເຖິງແຜນງານຕົວແບບການປັບປຸງປື້ມຄູ່ມື ແຜນງານຄືນໃໝ່ [ເມຖຸນາ-ກໍລະກົດ 2009]

ການສຶກສາບັນດາການປັບປຸງສິ່ງທີ່ຈຳເປັນໃນຄູ່ມືແຜນງານ ແມ່ນສະທ້ອນມາຈາກແຜນງານຕົວແບບໃນຂໍ້ 3)-3.

**3)-5** ການພັດທະນາເນື້ອໃນການຝຶກອົບຮົມ [ເມຖຸນາ-ສິງຫາ 2009]

ການພັດທະນາເນື້ອໃນການຝຶກອົບຮົມແມ່ນອີງໃສ່ບັນດາວິທີການທີ່ໄດ້ປັບປຸງຄືນ ແລະຄູ່ມືແຜນງານ. ການຝຶກອົບຮົມຈະຖືກຈັດຂຶ້ນແຕ່ ເດືອນຕຸລາ ຫາ ເດືອນທັນວາ 2009 ອີງໃສ່ແຜນການຝຶກອົບຮົມທີ່ໄດ້ພັດທະນາ ໃນກິດຈະກຳ (5)-10.

**3)-6** ການຝຶກອົບຮົມໃຫ້ເປັນຄູຝຶກ [ເມຖຸນາ-ສິງຫາ 2009]

ອີງໃສ່ເນື້ອໃນການຝຶກອົບຮົມທີ່ໄດ້ຖືກພັດທະນາ, ຝຶກພະນັກງານທີ່ໄດ້ຖືກຄັດເລືອກ ຈາກ MPI-DoP.

**3)-7** ການຜ່ານບັນດາວິທີການ ແລະການຝຶກອົບຮົມ [ຕຸລາ-ທັນວາ 2009]

ຈັດກອງປະຊຸມບັນດາວິຊາການ ແລະບັນດາການສັງເກດການຝຶກອົບຮົມ ພ້ອມທັງການຜ່ານບັນດາວິທີການທີ່ໄດ້ພັດທະນາ, ເຄື່ອງມື ແລະບັນດາເນື້ອໃນການຝຶກອົບຮົມ. ສຶກສາບັນດາການປັບປຸງທີ່ຕ້ອງການສຳລັບບັນດາເນື້ອໃນການຝຶກອົບຮົມ ແລະສິ່ງຄຳຄິດເຫັນກັບຄືນໃຫ້ແກ່ທີມງານການຝຶກອົບຮົບ.

**3)-8** ການຜ່ານບັນດາວິທີການ [ເມຖຸນາ-ກໍລະກົດ 2010]

ຜ່ານບັນດາວິທີການທີ່ໄດ້ພັດທະນາໃໝ່ ລວມທັງ ການສຶກສາ ແລະບັນດາກອງປະຊຸມວິຊາການ. ເມື່ອການປ່ຽນແປງມີຄວາມຕ້ອງການ, ສະທ້ອນສິ່ງເຫຼົ່ານັ້ນເຂົ້າໃສ່ສະບັບສຸດທ້າຍຂອງບັນດາປື້ມຄູ່ມື/ບັນດາບົດແນະນຳ.

**3)-9** ການຜ່ານຂອງການຝຶກອົບຮົມ [ຕຸລາ-ທັນວາ 2010]

ຜ່ານບັນດາເນື້ອໃນການຝຶກອົບຮົບລວມທັງການສັງເກດການຝຶກອົບຮົມ ແລະບັນດາຜົນ ການປະເມີນຜົນການຝຶກອົບຮົມ. ປັບປຸງບັນດາເນື້ອໃນການຝຶກອົບຮົມເມື່ອມີຄວາມຕ້ອງການ.

**3)-10** ການຝຶກອົບປະເທດທີ່ສາມໃນຫວຽດນາມ [ຕຸລາ 2010]

ດຳເນີນການຝຶກອົບຮົມປະເທດທີ່ສາມໃນຫວຽດນາມ. ຈຸດປະສົງຂອງການຝຶກອົບຮົມແມ່ນສຶກສາກ່ຽວກັບຂັ້ນຕອນການຄຸ້ມຄອງແຜນງານ ລວມທັງບັນດາການພົວພັນກ່ຽວກັບ ແຜນການພັດທະນາໃນຫວຽດນາມ. ການຝຶກອົບລວມທັງບັນດາການປຶກສາຫາລືກ່ຽວກັບ ກະຊວງແຜນການ ແລະ ການ ລົງທຶນໃນຫວຽດນາມ.

## 7. ຫົວຂໍ້ການຝຶກອົບຮົບປະເທດທີ່ສາມ

### 7.1. ພື້ນຖານຄວາມເປັນມາ ແລະຈຸດປະສົງ

PCAP2 ສ້າງແຜນເພື່ອດຳເນີນການຝຶກອົບຮົມປະເທດທີ່ສາມ ໃນຫວຽດນາມ ເພື່ອສຶກສາບັນດາວິທີການ ການຄຸ້ມ

ຄອງ ແລະບັນດາຫັກສະກ່ຽວກັບກົດໝາຍການຄຸ້ມຄອງ PIP, ການຄຸ້ມຄອງໂຄງການ ODA ແລະການຄຸ້ມຄອງແຜນງານ.

ຄື ປະເທດອ້າຍ ນ້ອງ, ຫວຽດນາມມີການພົວພັນທີ່ຍາວນານຢ່າງໃກ້ຊິດທາງດ້ານການເມືອງ ແລະການປົກຄອງກັບປະເທດລາວ, ແລະມີລະບົບການບໍລິຫານທີ່ຄ້າຍຄືກັນ. ເຖິງຢ່າງໃດກໍ່ຕາມ, ຫວຽດງານມີຫຼາຍຢ່າງທີ່ສາມາດແບ່ງປັນກັບປະເທດລາວໂດຍສະເພາະແມ່ນບັນດາລະບົບການປົກຄອງ ແລະກອບກົດໝາຍກ່ຽວກັບເລື້ອງການຄຸ້ມຄອງ.

ກະຊວງແຜນການ ແລະການລົງທຶນ ຂອງຫວຽດນາມມີບັນດາລະບົບການເຮັດວຽກທີ່ຄ້າຍຄືກັບປະເທດລາວ. ເຖິງຢ່າງໃດກໍ່ຕາມ, ກະຊວງ ແລະຊາວຫວຽດນາມ ກໍ່ມີຂໍ້ດີໃຫ້ແກ່ໂຄງການ PCAP2 ດັ່ງລຸ່ມນີ້.

- ➢ ກົດໝາຍ PIP ໄດ້ຮ່າງຂື້ນແລ້ວ ແລະກຳລັງລໍຖ້າຮັບການອະນຸມັດຈາກສະພາແຫ່ງຊາດ.
- ➢ ໃນຫວຽດນາມ, MPI ໄດ້ຖືກຮັບຜິດຊອບ ບັນດາໂຄງການ ODA, ແລະບັນດາໂຄງການຊ່ວຍເຫຼືອທາງດ້ານເຕັກທັງຫຼາຍ ລວມທັງໂຄງການຮ່ວມມືທາງດ້ານເຕັກນິກທີ່ ກຳລັງດຳເນີນຢູ່ ຂອງ ໄຈ່ກ່າ, ທີ່ກຳລັງຈັດຕັ້ງປະຕິບັດຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງດັ່ງກ່າວ.
- ➢ ຫວຽດນາມໄດ້ສ້າງແຜນພັດທະນາໄລຍະກາງ 2011-2020 ສຳເລັດແລ້ວ.

### 7.2. ກອບວຽກງານຂອງການຝຶກອົບຮົມ

PCAP2 ສ້າງແຜນ ເພື່ອຈັດຕັ້ງການຝຶກອົບຮົມ ປະທດທີ່ສາມໃນຫວຽດນາມ ໃນສາມຫົວຂໍ້ ທີ່ມີເນື້ອໃນດັ່ງລຸ່ມນີ້.

| ຫົວຂໍ້ທີ່ໜຶ່ງ: ການຄຸ້ມຄອງ ODA ແລະ ກົດໝາຍ PIP | |
|---|---|
| ຈຸດປະສົງ | ສຶກສາຄວາມຮູ້ກ່ຽວກັບ (ຮ່າງ) ກົດໝາຍ PIP ແລະຂັ້ນຕອນຮ່າງກ່ຽວກັບເລື່ອງນີ້. ເຂົ້າໃຈວິທີການຄຸ້ມຄອງໂຄງການ ODA |
| ເນື້ອໃນ | ➢ ບັນລະຍາຍ ກ່ຽວກັບ ກົດໝາຍ PIP ແລະ ວິທີການຄຸ້ມຄອງ ແລະບັນດາເຄື່ອງມື.<br>➢ ການສັງເກດກ່ຽວກັບການຮ່ວມມືດ້ານເຕັກນິກຂອງ ໄຈ່ກ່າ "ການເສີມສ້າງຄວາມສາມາດ ກ່ຽວກັບການຄຸ້ມຄອງ ODA" |
| ຕາຕະລາງ | ສິງຫາ 2008, ຈຳນວນເຈັດມື້ |
| ຜູ້ເຂົ້າຮ່ວມການຝຶກອົບຮົບ | ແຕ່ລະພະແນກ MPI-DoE, MPI-DoP ແລະ MPI-DIC ໜຶ່ງທ່ານ ແລະຫົວໜ້າທີມທີ່ປຶກສາ, ລວມທັງໝົດສີ່ຄົນ. |

| ຫົວຂໍ້ທີ່ສອງ: ການຄຸ້ມຄອງ ODA ແລະການຮ່ວມມື Laos-Vietnam-Cambodia | |
|---|---|
| ຈຸດປະສົງ | ສຶກສາຄວາມຮູ້ສະເພາະກ່ຽວກັບວິທີການຄຸ້ມຄອງໂຄງການ ODA, ລວມທັງການແລກປ່ຽນປະສົບປະການກ່ຽວກັບການຄຸ້ມຄອງການຝຶກອົບຮົມ ລະຫວ່າງ ປະເທດລາວ, ຫວຽດນາມ ແລະກຳປູເຈັຍ.<br>ສ້າງແຜນເພື່ອເຊື້ອເຊີນບັນດາສຳມະຊິກຄູ່ຮ່ວມງານຂອງການຮ່ວມມືທາງດ້ານເຕັກນິກ JICA ໃນກຳປູເຈັຍ "*Project for improveing Local Administration Capacity (PILAC)*" ຄືການຝຶກອົບຮົມຮ່ວມ/ບັນດາຜູ້ເຂົ້າຮ່ວມ workshop. |
| ເນື້ອໃນ | ➢ ບັນລະຍາຍກ່ຽວກັບວິທີການຄຸ້ມຄອງໂຄງການ ODA ໃນ ຫວຽດນາມ.<br>➢ ການສັງເກດບັນດາທີ່ຕັ້ງໂຄງການ ODA.<br>➢ ກອງປະຊຸມວິຊາການກ່ຽວກັບບັນດາວິທີການ ແລະຂັ້ນຕອນການຄຸ້ມຄອງການຝຶກອົບຮົມ, ຮ່ວມກັບຝ່າຍຫວຽດນາມ ແລະກຳປູເຈັຍ. |
| ຕາຕະລາງ | ພະຈິກ 2009, ຈຳນວນ 14 ມື້ |

| | |
|---|---|
| ຜູ້ເຂົ້າຮ່ວມການຝຶກອົບຮົບ | ແຕ່ລະພະແນກ MPI-DoE, MPI-DoP ແລະ MPI-DIC ໜຶ່ງທ່ານ ແລະຊ່ຽວຊານການຄຸ້ມຄອງແຜນງານ, ລວມທັງໝົດ ສີ່ຄົນ. |

| ຫົວຂໍ້ທີ່ສາມ: ການຄຸ້ມຄອງແຜນງານ | |
|---|---|
| ຈຸດປະສົງ | ສຶກສາຄວາມຮູ້ສະເພາະກ່ຽວກັບວິທີການຄຸ້ມຄອງແຜນງານທີ່ພົວພັນເຖິງແຜນພັດທະນາໄລຍະກາງ |
| ເນື້ອໃນ | ➢ ບັນລະຍາຍກ່ຽວກັບວິທີການຄຸ້ມຄອງແຜນງານຂອງຂະແໜງການ ແລະການຄຸ້ມຄອງທີ່ພົວພັນເຖິງແຜນພັດທະນາຢູ່ ຫວຽດນາມ.<br>➢ ບັນລະຍາຍສະເພາະກ່ຽວກັບວິທີການຄຸ້ມຄອງໂຄງການ ODA ໃນຫວຽດນາມ.<br>➢ ການສັງເກດກ່ຽວກັບການລົງທຶນລັດ ແລະບັນດາທີ່ຕັ້ງໂຄງການ ODA. |
| ຕາຕະລາງ | ພະຈິກ 2010, ຈຳນວນ 14 ມື້ |
| ຜູ້ເຂົ້າຮ່ວມການຝຶກອົບຮົບ | ແຕ່ລະພະແນກ MPI-DoE, MPI-DoP ແລະ MPI-DIC ໜຶ່ງທ່ານ ແລະ ຊ່ຽວຊານການຄຸ້ມຄອງແຜນງານ, ລວມທັງໝົດ ສີ່ຄົນ. |

## **7.3.** ການຮ່ວມມືກັບໂຄງການ JICA ຢູ່ກຳປູເຈັ້ຍ

PCAP2 ມີເປົ້າໝາຍທີ່ຈະເລີ່ມປະສານງານກັບ ໂຄງການຮ່ວມມືທາງດ້ານເຕັກນິກ JICA ຢູ່ ກຳປູເຈັ້ຍທີ່ມີຊື່ວ່າ "Project for Improving Local Administration Capacity (PILAC)". PILAC ແມ່ນໂຄງການໜຶ່ງ ທີ່ປັບປຸງຄວາມສາມາດໃນການຄຸ້ມຄອງການຝຶກອົບຮົມໃຫ້ແກ່ພະນັກງານກະຊວງພາຍໃນຜູ້ທີ່ມີໜ້າທີ່ປົກປັກຮັກສາປະເທດຊາດ ແລະປັບປຸງຄວາມສາມາດໃຫ້ແກ່ພະນັກງານປົກຄອງທ້ອງຖິ່ນ.

PCAP2 ແລະ PILAC ມີເປົ້າໝາຍຮ່ວມກັນດັ່ງລຸ່ມນີ້:

- ➢ ໂຄງການທັງສອງມີຈຸດປະສົງຫຼັກໃນການພັດທະນາຄວາມສາມາດໃຫ້ແກ່ການປົກຄອງ.
- ➢ ທັງສອງມີແຜນການຝຶກອົບຮົມໃຫ້ແກ່ພະນັກງານປົກຄອງທ້ອງຖິ່ນເຊິ່ງເປັນອົງປະກອບຕົ້ນຕໍ.
- ➢ ມີແຜນການຝຶກອົບຮົມໃຫ້ແກ່ສະຖາບັນ ແລະຂະຫຍາຍອອກໄປທົ່ວປະເທດແມ່ນເປົ້າໝາຍຕົ້ນຕໍ.

ສະນັ້ນ, ໂດຍການສະໜັບສະໜູນບັນດາໂອກາດຂອງການປະສານງານ, ໂຄງການ JICA ທັງສອງ ມີທ່າແຮງທາງດ້ານປະສິດທິພາບ ແລະປະສິດທິຜົນທີ່ສູງກ່ວາ. Mr. Hiromi Osada, ຊ່ຽວຊານ ຍີ່ປຸ່ນທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບການຄຸ້ມຄອງແຜນງານຢູ່ໃນ PCAP2, ທັງເປັນຊ່ຽວຊານໄລຍະສຸດທ້າຍ ຢູ່ PILAC. ຊ່ຽວຊານ Osada ເປັນຜູ້ປະສານງານ, ການຮ່ວມມືລຸ່ມນີ້ແມ່ນສາມາດເປັນໄປໄດ້.



- ➢ ກອງປະຊຸມສຳມະນາສາກົນ/ກອງປະຊຸມວິຊາການທີ່ພົວພັນເຖິງໂຄງການທັງສອງ.
- ➢ ການແລກປ່ຽນການຝຶກອົບຮົບຄູ່ຮ່ວມງານ.
- ➢ ການຝຶກອົບຮົມຮ່ວມຢູ່ Japan.

ບັນດາເນື້ອໃນການຮ່ວມມືຂ້າງລຸ່ມນີ້ແມ່ນສາມາດຖືກພິຈາລະນາ.

- ການຖອດຖອນການນຳໃຊ້ວັດຖຸອຸປະກອນ ແລະບັນດາຮ່າງທີ່ນຳໃຊ້ໃນການພັດທະນາ ຂອງບັນດາແຜນຝຶກອົບຮົບ.
- ການຖອດຖອນບົດຮຽນກ່ຽວກັບວິທີການຄຸ້ມຄອງການຝຶກອົບຮົມຢູ່ທ້ອງຖິ່ນ.
- ການແລກປ່ຽນບັນດາຄວາມຄິດເຫັນກ່ຽວກັບຜູ້ໃຫ້ທຶນສະໜັບສະໜູນ ແລະທິດທາງຂອງການຮ່ວມມື.
- ການແລກປ່ຽນກ່ຽວກັບຂໍ້ມູນພາຍໃນລະຫວ່າງບັນດາ ສຳມະຊິກ ແລະອົງການຈັດຕັ້ງຄູ່ຮ່ວມງານ.

## 8. ຄວາມເປັນໄປໄດ້ໃນການຮ່ວມມືກ່ຽວກັບບັນດາຜູ້ໃຫ້ທຶນ ແລະບັນດາໂຄງການຕ່າງໆ

ບັນດາຜູ້ໃຫ້ທຶນຈຳນວນໜຶ່ງໄດ້ແນະນຳໃຫ້ PCAP ຊອກຫາການຮ່ວມມື. ເຖິງຢ່າງໃດກໍ່ຕາມ, ຍ້ອນວ່າ PCAP ໄດ້ເຮັດວຽກກ່ຽວກັບພື້ນຖານການຄຸ້ມຄອງ PIP, ບໍ່ມີການຮ່ວມມືທາງດ້ານການແລກປ່ຽນວັດຖຸອຸປະກອນ. ເສີມສ້າງໂດຍອີງໃສ່ພື້ນຖານທີ່ PCAP ໄດ້ສ້າງຂື້ນ. PCAP2 ມີເປົ້າມາຍທີ່ຈະເຮັດການຮ່ວມມືໃນຫົວຂໍ້ ແລະເງື່ອນໄຂທີ່ຖືກ. ຂ້າງລຸ່ມນີ້ແມ່ນບັນດາໂຄງການທີ່ມີທ່າແຮງໃນການຮ່ວມມື.

### 8.1. ທະນາຄານໂລກ "ທຶນການພັດທະນາລະດັບເມືອງ-ແຂວງ ຄຳມ່ວນ"

ດ້ວຍການສະໜັບສະໜູນຂອງທຶນນາຄານໂລກ, ຄຳມ່ວນມີເປົ້າໝາຍທີ່ຈະດຳເນີນໂຄງການ "ທຶນການພັດທະນາລະດັບ-ເມືອງ" ແຕ່ປີ 2008-2014. ທະນາຄານໂລກມີແຜນໃຫ້ກູ້ຢືມປະມານ 4 ລ້ານ ດອນລາອາເມລິກາ ເພື່ອນຳໃຊ້ເຂົ້າໃນບັນດາໂຄງການການຄຸ້ມຄອງຂັ້ນເມືອງ. ບັນດາເມືອງຈະຕ້ອງໄດ້ສ້າງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະການປະເມີນຜົນໂຄງການຂອງພວກເຂົາເອງ.

ທະນາຄານໂລກມີຈຸດປະສົງທີ່ຈະເຮັດວຽກກັບ PCAP2 ໃນການນຳໃຊ້ ບັນດາເຄື່ອງມື ແລະບັນດາວິທີການ PCAP ທີ່ໄດ້ສ້າງສຳເລັດແລ້ວ ຢູ່ໃນແຂວງຄຳມ່ວນ. ຍ້ອນວ່າ PCAP2 ມີແຜນ ທີ່ຈະພັດທະນາ ບັນດາເຄື່ອງມືການຄຸ້ມຄອງ PIP ຢູ່ລະດັບຂັ້ນເມືອງ, ສະນັ້ນມັນແມ່ນໂອກາດດີໃນການພັດທະນາບັນດາເຄື່ອງມື ແລະວິທີການກ່ຽວກັບການຄຸ້ມຄອງ ໃນເວລາດຳເນີນການຮ່ວມມື.

### 8.2. UNDP "ສະໜັບສະໜູນໃຫ້ແກ່ NSEDP"

UNDP ກຳລັງໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດ NSEDP, ໄລຍະ 2006 ເຖິງ 2010. ເປົ້າໝາຍແມ່ນ a) ສະໜັບສະໜູນການເຊື່ອມຕໍ່ການຫຼຸດຜ່ອນຄວາມທຸກຍາກ ແລະ ບັນດາງົບປະມານ ແລະບັນດາແຜນປະຈຳປີ ຢູ່ໃນບັນດາແຜນງານຂອງ NSEDP ຄັ້ງທີ່ ຫົກ (2006-2010) ແລະ MDG, b)ຍົກລະດັບຄວາມອາດສາມາດຂອງ MPI, ບັນດາກະຊວງທີ່ຖືກຄັດເລືອກ ແລະ 3 ແຂວງເປົ້າໝາຍ (ຫຼວງພະບາງ, ຄຳມ່ວນ ແລະອັດຕະປື) ເພື່ອປັບປຸງການຕິດຕາມການກວດກາ ການຈັດຕັ້ງປະຕິບັດ, ການປະເມີນຜົນ ແລະການລາຍງານ, ແລະ c) ສ້າງຕັ້ງ ຕາໜ່າງການຄົ້ນຄ້ວາທົ່ວປະເທດ ເພື່ອວິເຄາະການນຳໃຊ້ນະໂຍບາຍໃນການສະໜັບສະໜູນການສ້າງແຜນ, ການຕິດຕາມກວດກາ ແລະການປະເມີນຜົນ. ອົງການຈັດຕັ້ງຄູ່ຮ່ວມງານສຳລັບໂຄງການນີ້ແມ່ນ MPI-DoP.

PCAP2 ມີເປົ້າໝາຍທີ່ຈະສຶກສາຄວາມຄືບໜ້າຂອງໂຄງການນີ້, ແລະຊອກຫາການຮ່ວມມືທາງດ້ານບັນດາກິດຈະກຳ

ລວມທັງ MPI-DoP. ໂດຍສະເພາະ, ການຮ່ວມມືກັບໂຄງການໃນສາມແຂວງທີ່ໄດ້ຖືກຄັດເລືອກ ກ່ຽວກັບບັນດາກິດຈະກຳການຝຶກອົບຮົມ ແລະ ການຄຸ້ມຄອງ PIP ຢູ່ລະດັບແຂວງທີ່ສາມາດເປັນໄປໄດ້.

### 8.3. ທະນາຄານໂລກ "ວິທີການຄຸ້ມຄອງມາດຕະຖານສຳລັບ ບັນດາໂຄງການ ODA"

ທະນາຄານໂລກ ກຳລັງດຳເນີນໂຄງການ ກ່ຽວກັບການສະໜັບສະໜູນ ການຄຸ້ມຄອງໂຄງການ ODA ດ້ວຍຂັ້ນຕອນ ການຄຸ້ມຄອງມາດຕະຖານ (SOP). ຈຸດປະສົງຂອງໂຄງການນີ້ແມ່ນ a) ພັດທະນາຄູ່ມື SOP, b) ພັດທະນາຄູ່ມືການຄຸ້ມຄອງການເງິນ, ແລະ c) ຈັດການຝຶກອົບຮົມກ່ຽວກັບການຄຸ້ມຄອງການເງິນ ແລະ SOP. ອົງການຈັດຕັ້ງຄູ່ຮ່ວມງານນີ້ແມ່ນ MPI-DIC.

PCAP2 ມີເປົ້າໝາຍທີ່ຈະສຶກສາຄວາມຄືບໜ້າຂອງໂຄງການນີ້, ແລະຊອກຫາການຮ່ວມມືທາງດ້ານບັນດາກິດຈະກຳລວມທັງ MPI-DIP. ໂດຍສະເພາະ, ການຮ່ວມມືກ່ຽວກັບການພັດທະນາທັງສອງຄູ່ມືດັ່ງກ່າວ ແລະບັນດາກິດຈະກຳການຝຶກອົບຮົມທີ່ສາມາດເປັນໄປໄດ້

### 8.4. ບັນດາທ່າແຮງການຮ່ວມມືອື່ນໆ

ມີຫຼາຍຂົງເຂດ ແລະໂຄງການອື່ນໆອີກ ທີ່ PCAP2 ມີທ່າແຮງໃນການຮ່ວມມື. ບັນດາຊ່ຽວຊານ ແລະບັນດາໂຄງການ JICA ທີ່ກຳລັງດຳເນີນຢູ່ ບັນດາກະຊວງລັດຂັ້ນສູນກາງ, ອະນຸຍາດໃຫ້ມີການແລກປ່ຽນຂໍ້ມູນ ແລະວິທີການພັດທະນາຄວາມອາດສາມາດ ທີ່ພົວພັນເຖິງ PIP. ອັນນີ້ແມ່ນຊ່ວຍການສະໜັບສະໜູນບັນດາກະຊວງ ໃນການນຳໃຊ້ບັນດາວິທີການຄຸ້ມຄອງ PIP ແລະຂັ້ນຕອນການພັດທະນາ ລວມທັງ PCAP2.

JICA ກຳລັງມີແຜນການທີ່ຈະດຳເນີນ "ໂຄງການເສີມສ້າງຄວາມອາສາມາດໃຫ້ແກ່ແຜນງານເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການໃຊ້ຈ່າຍລັດ" ກັບກະຊວງການເງິນ (MoF) ຄືອົງການຈັດຕັ້ງຄູ່ຮ່ວມງານ, ການເລີ່ມຕົ້ນແມ່ນຢູ່ກາງປີ 2008. PCAP2 ມີຈຸດປະສົງທີ່ຈະຊອກການຮ່ວມມືທີ່ເປັນໄປໄດ້ກັບໂຄງການທີ່ເຮັດວຽກກ່ຽວກັບ ການຄຸ້ມຄອງການເງິນ ແລະງົບປະມານ PIP ແລະການຝຶກອົບຮົມກ່ຽວກັບເລື່ອງນີ້.

ການຮ່ວມມືກັບບັນດາແຜນງານຄື ແຜນງານເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການໃຊ້ຈ່າຍລັດ (PEMSP) ສະໜັບສະໜູນໂດຍ ທະນາຄານໂລກທີ່ເຮັດວຽກກັບກະຊວງການເງິນ ຄືອົງການຄູ່ຮ່ວມງານ, ແລະ "ໂຄງການສະໜັບສະໜູນການປະຕິຮູບການປົກຄອງລັດ ແລະລັດທະບານ" ສະໜັບສະໜູນໂດຍ UNDP ທີ່ເຮັດວຽກກັບ ສຳນັກງານນາຍົກລັດຖະມົນຕີ ຄືອົງການຄູ່ຮ່ວມງານ, ແມ່ນຖືກພິຈາລະນາຄືກັນ.

## 9. ການລາຍງານ ແລະການຕິດຕາມກວດກາໂຄງການ

ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ ແລະຈົນຮອດການສຳເລັດໂຄງການ, PCAP2 ແມ່ນຕ້ອງສົ່ງບັນດາບົດລາຍງານການຕິດຕາມກວດກາໃຫ້ແກ່ MPI ແລະ JICA. ບັນດາບົດລາຍງານນີ້ແມ່ນຈະໄດ້ເຮັດເປັນ ພາສາລາວ, ພາສາອັງກິດ ແລະພາສາຍີ່ປຸ່ນ, ແລະຈະຖືກສົ່ງທຸກໆ ຫົກເດືອນ. ຄືໄລຍະການກຳນົດປະຈຳປີຂອງ PCAP2 ແມ່ນແຕ່ ກັນຍາ ເຖິງ ສິງຫາ ທຸກໆປີ, ບົດລາຍງານໄລຍະກາງ ແມ່ນຈະຖືກສົ່ງທຸກໆເດືອນມັງກອນ, ແລະບົດລາຍງານປະຈຳປີຈະຕ້ອງສົ່ງທຸກໆເດືອນສິງຫາ.

## 10. ການປະເມີນຜົນຂອງ PCAP2

ອີງຕາມຫຼັກການ, ທຸກໆໂຄງການການຮ່ວມມືທາງດ້ານເຕັກນິກ JICA ຕ້ອງເຮັດການປະເມີນຜົນ. PCAP2 ຍິນດີຕ້ອນຮັບຄະນະປະເມີນຜົນ 2 ຄະນະ ຄືການປະເມີນຜົນໄລຍະກາງ ເຊິ່ງຄາດວ່າຈະຕ້ອງຖືກເຮັດຢູ່ໃນລະຫວ່າງເດືອນທັນວາ 2009 ແລະການປະເມີນຜົນໄລຍະໂຄງການໃກ້ຈະສຳເລັດ ຢູ່ໃນລະຫວ່າງເດືອນມັງກອນ 2011. ສ່ວນຕາຕະລາງເຮັດວຽກຕົວຈິງແມ່ນຈະໄດ້ປຶກສາຫາລື ລະຫວ່າງ PCAP2, MPI ແລະ JICA.